ກໍ່ສ້າງພັກ

ວາລະສານເຜີຍແຜ່, ແນະນຳວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ
ຂອງຄະນະຈັດຕັ້ງສູນກາງພັກ

ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກໃຫ້ປະກົດຜົນເປັນຈິງ

ຄະນະຈັດຕັ້ງສູນກາງພັກ ຮ່ວມກັບ ກະຊວງພາຍໃນ ໄດ້ຈັດກອງປະຊຸມສ່ອງແສງການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງພະນັກງານ-ລັດຖະກອນ ຂອງຂະແໜງຈັດຕັ້ງ ແລະ ພາຍໃນທົ່ວປະເທດ ທີ່ກະຊວງພາຍໃນ

(ວັນທີ 15 ມີນາ 2024)

ສະບັບ: 264 ປີ 2024/2

Korsangphakmagazine@gmail.com

ໃນວັນທີ 7 ມີນາ 2024 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີປະກາດການຈັດຕັ້ງພາຍໃນຄະນະຈັດຕັ້ງສູນກາງພັກ ໂດຍການເປັນປະທານຂອງສະຫາຍ ນາງ ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຄະນະປະຈຳພັກ, ຄະນະພັກ, ເລຂາໜ່ວຍພັກ, ຫົວໜ້າກົມ-ຮອງກົມ, ຫົວໜ້າພະແນກ-ຮອງຫົວໜ້າພະແນກ ແລະ ພະນັກງານ-ລັດຖະກອນພາຍໃນ ຄະນະຈັດຕັ້ງສູນກາງພັກເຂົ້າຮ່ວມ.

ວັນທີ 22-23 ກຸມພາ 2024 ກະຊວງສາທາລະນະສຸກ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງທົ່ວຂະແໜງສາທາລະນະສຸກ ປະຈຳປີ 2023 ແລະ ວາງທິດທາງແຜນການ ປີ 2024 ໂດຍການເຂົ້າຮ່ວມ ແລະ ໃຫ້ກຽດໂອ້ລົມຂອງສະຫາຍ ນ. ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ແລະ ເປັນປະທານຂອງສະຫາຍ ປອ.ດຣ ບຸນແຝງ ພູມມາໄລສິດ ກຳມະການສູນກາງພັກ, ເລຂາຄະນະພັກກະຊວງ, ລັດຖະມົນຕີກະຊວງສາທາລະນະສຸກ, ມີຄະນະພັກ-ຄະນະນຳຈາກພະແນກສາທາລະນະສຸກແຂວງ ແລະ ກົມກອງອ້ອມຂ້າງເຂົ້າຮ່ວມ.

ວັນທີ 28 ມີນາ 2024 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີປາຖະກະຖາເລົ່າມູນເຊື້ອວັນສຳຄັນຂອງພັກ-ຂອງຊາດຄື: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 69 ປີ, ວັນນັກຮົບເສຍອົງຄະ ແລະ ເສຍສະຫຼະຊີວິດເພື່ອປະເທດຊາດ ຄົບຮອບ 78 ປີ ແລະ ວັນສ້າງຕັ້ງຄະນະຈັດຕັ້ງສູນກາງພັກ ຄົບຮອບ 69 ປີ ໃຫ້ກຽດປາຖະກະຖາເລົ່າມູນເຊື້ອໂດຍສະຫາຍ ພົນໄທ ແສງນວນ ໄຊຍະລາດ ເລຂາຄະນະພັກ ປະທານສະຫະພັນນັກຮົບເກົ່າ ແລະ ສະຫາຍ ທອງຈັນ ໂຊງພູມຄຳ ກຳມະການຄະນະປະຈຳພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຄະນະພັກ, ພ້ອມດ້ວຍສະມາຊິກພັກ-ພະນັກງານພາຍໃນຄະນະຈັດຕັ້ງສູນກາງພັກເຂົ້າຮ່ວມຢ່າງພ້ອມພຽງ.

ວັນທີ 1 ມີນາ 2024 ຢູ່ທີ່ສະໂມສອນຄະນະຈັດຕັ້ງສູນກາງພັກ ໄດ້ປິດຊຸດຝຶກອົບຮົມວຽກງານກວດກາພາຍຫຼັງດຳເນີນມາເປັນເວລາ 5 ວັນ (26 ກຸມພາ - 1 ມີນາ) ໂດຍໃຫ້ກຽດໂອ້ລົມ ແລະ ມອບໃບຢັ້ງຢືນຂອງສະຫາຍ ທອງຈັນ ໂຊງພູມຄຳ ກຳມະການຄະນະປະຈຳພັກ, ປະທານກວດກາ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຄະນະພັກຄະນະຈັດຕັ້ງສູນກາງພັກ, ອາຈານສອນຈາກຄະນະກວດກາສູນກາງພັກ, ຄະນະຮັບຜິດຊອບຊຸດຝຶກອົບຮົມ ແລະ ນັກສຳມະນາກອນຈຳນວນ 30 ສະຫາຍ, ຍິງ 9 ສະຫາຍ ເຂົ້າຮ່ວມ.

ວັນທີ 26 ກຸມພາ 2024 ອົງຄະນະພັກທະນາຄານແຫ່ງ ສປປລາວ ໄດ້ຈັດຊຸດຝຶກອົບຮົມວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ ໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ນ. ວັດທະນາ ດາລາລອຍ ຮອງເລຂາຄະນະບໍລິຫານງານພັກ, ຮອງຫົວໜ້າຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, ມີສະຫາຍ ທອງຈັນຊະ ຢາທໍ່ຕູ້ ຮອງຫົວໜ້າສູນພັດທະນາວຽກງານຈັດຕັ້ງ, ຄະນະຈັດຕັ້ງສູນກາງພັກ, ມີບັນດາສະຫາຍເລຂາໜ່ວຍພັກ, ເລຂາຄະນະພັກຮາກຖານ, ສະມາຊິກພັກ-ພະນັກງານ ແລະ ນັກສໍາມະນາກອນ ທັງໝົດ 76 ສະຫາຍ, ຍິງ 31 ສະຫາຍ ເຂົ້າຮ່ວມ.

ວັນທີ 12 ມີນາ 2024 ສະຫະພັນແມ່ຍິງ 6 ອົງການອ້ອມຂ້າງສູນກາງພັກ ຫຼືກ 6 ປະກອບມີ: ສະຫະພັນແມ່ຍິງຫ້ອງວ່າການສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ຄະນະກວດກາສູນກາງພັກ, ຄະນະໂຄສະນາອົບຮົມສູນກາງພັກ, ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສະຖາບັນຄົ້ນຄວ້າວິທະຍາສາດເສດຖະກິດ-ສັງຄົມແຫ່ງຊາດ ໄດ້ຈັດພິທີປາຖະກະຖາສະເຫຼີມສະຫຼອງ ວັນແມ່ຍິງສາກົນ ຄົບຮອບ 114 ປີ (8 ມີນາ 1910 - 8 ມີນາ 2024) ຂຶ້ນທີ່ຫ້ອງປະຊຸມໃຫຍ່ຫ້ອງວ່າການສູນກາງພັກເຊິ່ງໃຫ້ກຽດປາຖະກະຖາໂດຍ ທ່ານ ນ. ສິລິກິດ ບຸບຜາ ຮອງປະທານສູນກາງສະຫະພັນແມ່ຍິງລາວ, ມີບັນດາຄະນະພັກ, ຄະນະນໍາ, ຜູ້ຊີ້ນໍາອົງການຈັດຕັ້ງມະຫາຊົນ, ປະທານ, ຮອງປະທານ, ພ້ອມດ້ວຍສະມາຊິກສະຫະພັນແມ່ຍິງ 6 ອົງການເຂົ້າຮ່ວມຢ່າງພ້ອມພຽງ.

ທວນຄືນເສັ້ນທາງແຫ່ງການກໍ່ສ້າງພັກປະຊາຊົນປະຕິວັນລາວ ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 69 ປີ (22 ມີນາ 1955-22 ມີນາ 2024)

ໂດຍ: ພິດສະໄໝ

ດັ່ງທີ່ຮູ້ນຳກັນແລ້ວວ່າ ພັກປະຊາຊົນປະຕິວັດລາວ ແມ່ນມີຕົ້ນກຳເນີດມາຈາກພັກກອມມູນິດອິນດູຈີນ ເຊິ່ງແມ່ນປະທານ ໂຮ່ຈີມິນ ເປັນຜູ້ລິເລີ່ມສ້າງຕັ້ງ ໂດຍມີພາລະບົດບາດໜ້າທີ່ສຶກສາອົບຮົມ ປຸກລະດົມຂົນຂວາຍຈັດຕັ້ງນຳພາປະຊາຊົນບັນດາເຜົ່າທັງສາມປະເທດ ລາວ-ຫວຽດນາມ-ກຳປູເຈຍ ດຳເນີນການຕໍ່ສູ້ຕ້ານພວກຈັກກະພັກລ່າເມືອງຂຶ້ນຝຣັ່ງຜູ້ຮຸກຮານ ແລະ ພວກປະຕິການຂາຍຊາດຂອງແຕ່ລະປະເທດ ເລີ່ມແຕ່ປີ 1930 ມາເຖິງ 1955 ພັກປະຊາຊົນປະຕິວັດລາວ ຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ ເຊິ່ງແມ່ນປະທານ ໄກສອນ ພົມວິຫານ ເປັນຜູ້ນຳໜ້າ ໂດຍມີພາລະບົດບາດໜ້າທີ່ສືບຕໍ່ສຶກສາອົບຮົມ ປຸກລະດົມຂົນຂວາຍຈັດຕັ້ງນຳພາປະຊາຊົນລາວບັນດາເຜົ່າ ດຳເນີນການຕໍ່ສູ້ກູ້ຊາດຕ້ານພວກຈັກກະພັດລ່າເມືອງຂຶ້ນ ແລະ ພວກປະຕິການຂາຍຊາດ ຈົນໄດ້ຮັບຜົນສຳເລັດການປະຕິວັດຊາດ ປະຊາທິປະໄຕ ແລະ ກ້າວຂຶ້ນນຳພາ-ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕະຫຼອດ 69 ປີຜ່ານມາ.

ເພື່ອຮັກສາມູນເຊື້ອ ແລະ ບົດຮຽນອັນດີງາມແຫ່ງການກໍ່ສ້າງພັກປະຊາຊົນປະຕິວັດລາວ ຜູ້ຂຽນຂໍຍົກໂດຍສັງເຂບກ່ຽວກັບເສັ້ນທາງອັນແສນລຳບາກຍາວນານຂອງການປະຕິວັດດັ່ງນີ້:

1. ສະໄໝຕໍ່ສູ້ກູ້ຊາດ ພວກຈັກກະພັດລ່າເມືອງຂຶ້ນອາເມລິກາ ແລະ ພວກປະຕິການລາວຂາຍຊາດ ປີ 1955-1975 ແມ່ນໄລຍະປະຫວັດສາດທີ່ມະຫັດສະຈັນເຊັ່ນ:

ໄລຍະການຕໍ່ສູ້ປ້ອງກັນເຂດເຕົ້າໂຮມຊົ່ວຄາວຂອງຝ່າຍກຳລັງປະຕິວັດລາວຢູ່ແຂວງຫົວພັນ ແລະ ແຂວງຜົ້ງສາລີ ສົມທົບກັບປະຊາຊົນລາວຜູ້ຮັກຊາດຢູ່ 10 ແຂວງ ເຂດຄວບຄຸມຊົ່ວຄາວຂອງຝ່າຍພວກຫຸ່ນວຽງຈັນ ໃນເວລານັ້ນ ແມ່ນເພື່ອທວງໃຫ້ຝ່າຍຈັກກະພັດອາເມລິກາ ແລະ ພວກຫຸ່ນວຽງຈັນ ຕ້ອງຈິງໃຈປະຕິບັດສັນຍາສາກົນເຊີແນວ-ກ່ຽວກັບລາວ ເລີ່ມແຕ່ທ້າຍປີ 1954 ເຖິງທ້າຍປີ 1957, ເປັນໄລຍະເລັ່ງໂອນເອົາສະມາຊິກພັກກອມມູນິດອິນດູຈີນ ເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ, ປັບປຸງຖັນແຖວພະນັກງານ ນັກຮົບປະຕິວັດທີ່ມາຈາກທຸກເຂດແຂວງທົ່ວປະເທດ ໂດຍຜ່ານການທົດສອບໃນຂະບວນການຕໍ່ສູ້ປ້ອງກັນ ແລະ ປັບປຸງເຂດເຕົ້າໂຮມ.

ໄລຍະປະຕິບັດການລວມລາວ ຄັ້ງທີໜຶ່ງ ທ້າຍປີ 1957-1959 ເຊິ່ງເປັນໄລຍະປະຫວັດສາດ ແລະ ສຳຄັນເປັນພິເສດ ເພາະມັນເປັນການບຸກເບີກລິເລີ່ມເປີດເສັ້ນທາງແຫ່ງການລວມລາວທີ່ບໍ່ທັນມີບົດຮຽນມາກ່ອນ ແລະ ໃນຄະນະນັ້ນ ສະມາຊິກພັກ, ພະນັກງານນັກຮົບພະລາກອນຂອງຝ່າຍກຳລັງປະຕິວັດ ເອີ້ນວ່າກຳລັງຂອງຝ່າຍປະເທດລາວ ທັງໝົດໄດ້ແຈກຢາຍເຂົ້າຮ່ວມປະສົມ ແລະ ເປັນພົນລະເມືອງຢູ່ຕາມບ້ານໃນທົ່ວປະເທດ ທັງຕ້ອງໄດ້ເຄື່ອນໄຫວຢ່າງປິດລັບທີ່ສຸດ ໂດຍສະເພາະແມ່ນການຈັດຕັ້ງພັກ ແລະ ສະມາຊິກພັກ ຍັງບໍ່ທັນໄດ້ເປີດເຜີຍເທື່ອ. ຍ້ອນພວກສັດຕູຊ້ອນຕົວຢູ່ທຸກບ່ອນທຸກເວລາ ເພື່ອຕິດຕາມການເຄື່ອນໄຫວຂອງສະມາຊິກພັກ, ພະນັກງານນັບຮົບ ເວລານັ້ນ, ການປະຊຸມປຶກສາຫາລືກັນ ແມ່ນເຮັດໄດ້ໜ້ອຍທີ່ສຸດ ສ່ວນຫຼາຍໄດ້ໃຊ້ຮູບການແບບສອຍໂອກາດ "ສອງຄົນຢ່າງລົມກັນເພື່ອແລກປ່ຽນສະພາບການ ແນະນຳຕັກເຕືອນເຊິ່ງກັນ ແລະ ກັນ" ເພື່ອຫຼີກເວັ້ນການສົງໄສຂອງສັດຕູ; ການປະຕິບັດຄຳສັ່ງຂອງສູນກາງພັກ ໃຫ້ຫັນທິດທາງເອົາການຕໍ່ສູ້ການເມືອງຂອງມະຫາຊົນທຸກຊັ້ນຄົນອັນນະ-ປະສານຢ່າງກົມກຽວໄປກັບການຕໍ່ສູ້ໃນເວທີກົດໝາຍ ແລະ ຕໍ່ສູ້ທາງການຕ່າງປະເທດ ອັນເນື່ອງມາຈາກພວກຈັກກະພັດອາເມລິກາ ແລະ ພວກຫຸ່ນວຽງຈັນ ໄດ້ທຳລາຍສັນຍາລວມລາວຢ່າງສິ້ນເຊີງ. ພວກເຂົາໄດ້ປາບປາມຈັບກຸມຄຸມຂັງຄົນຂອງຝ່າຍແນວລາວຮັກຊາດ ແລະ ປະຊາຊົນລາວບັນດາເຜົ່າທີ່ຮັກຊາດ, ຮັກຄວາມເປັນທຳ ຢ່າງຜິດກົດໝາຍ ແລະ ປ່າເຖື່ອນທີ່ສຸດ. ເຖິງຢ່າງໃດກໍ່ຕາມການລວມລາວຄັ້ງທີໜຶ່ງແມ່ນໄລຍະທີ່ໄດ້ເຕົ້າໂຮມກຳລັງປະຕິວັດທັງເກົ່າ ແລະ ໃໝ່ຄືນມາ ທັງເປັນການສະແດງອອກເຖິງຜົນກຳໄລອັນໃຫຍ່ຫຼວງຢ່າງມະຫັດສະຈັນແຫ່ງການລວມລາວ.

ໄລຍະປະຕິບັດການລວມລາວ ຄັ້ງທີສອງ ປີ 1962 ຫາທ້າຍປີ 1964 ຄັ້ງນີ້ຝ່າຍແນວລາວຮັກຊາດມີກຳລັງປະຕິວັດເຕີບໃຫຍ່ຂະຫຍາຍຕົວ ແລະ ມີເຂດປົດປ່ອຍເປັນຂອງຕົນເອງ, ພື້ນຖານການເມືອງ ໄດ້ມີຢູ່ທຸກແຂວງທົ່ວປະເທດ, ສາມາດຍາດແຍ່ງຮ່ວມສຳພັນກັບຝ່າຍກຳລັງເປັນກາງທີ່ຮັກຊາດ ແລະ ໄດ້ຮັບການສະໜັບສະໜູນຈາກປະເທດເພື່ອນມິດຫຼາຍຂຶ້ນ. ແຕ່ກໍ່ຖືກທຳລາຍຈາກພວກສັດຕູຢ່າງສິ້ນເຊີງອີກ; ນຳພາການຕໍ່ສູ້ຕ້ານສົງຄາມທຳລາຍທາງອາກາດ ສົມທົບກັບການບຸກໂຈມຕີບຽດຍຶດເຂົ້າດິນແດນເຂດປົດປ່ອຍຂອງຝ່າຍແນວລາວຮັກຊາດ ທາງໜ້າດິນຢ່າງໜັກໜ່ວງ ແລະ ປ່າເຖື່ອນ ນັບແຕ່ທ້າຍປີ 1964 ແກ່ຍາວເຖິງທ້າຍປີ 1973 ແລະ ເປັນໄລຍະການຕໍ່ສູ້ທີ່ດຸເດືອດ, ຂ້ຽວຂາດ, ເອົາເປັນເອົາຕາຍທີ່ສຸດ.

ໄລຍະປະຕິບັດການລວມລາວ ຄັ້ງທີສາມ ທ້າຍປີ 1973 ຫາທ້າຍປີ 1975 ການລວມລາວຄັ້ງນີ້ ມີ

ຄວາມໝາຍປະຫວັດສຳຄັນໃຫຍ່ຫຼວງໃນການຕັດສິນໄຊຊະນະ ສຸດທ້າຍກໍ່ສາມາດຍຶດເອົາອຳນາດການປົກຄອງ ແລະ ເຂດປົດປ່ອຍທົ່ວປະເທດ ແລະ ກ້າວຂຶ້ນນຳພາການປະຕິວັດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໄວ້ໄດ້.

2. ສະໄໝການປະຕິວັດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເຊິ່ງສະແດງອອກ ດັ່ງນີ້:

ເປັນສະໄໝທີ່ພັກປະຊາຊົນປະຕິວັດລາວ ເປັນຜູ້ກຳອຳນາດ ແລະ ຮັບຜິດຊອບຕໍ່ໂຊກຊາຕາກຳຂອງປະເທດຊາດ, ຕໍ່ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ໝາຍຄວາມວ່າ ພັກປະຊາຊົນລາວຕ້ອງ ແບກຫາບພາລະກິດອັນໃຫຍ່ຫຼວງ, ໜັກໜ່ວງ ແລະ ຫຍຸ້ງຍາກສັບສົນກວ່າເກົ່າ ດັ່ງປະທານ ໄກສອນ ພົມວິຫານ ເວົ້າວ່າ: "ເມື່ອສຳເລັດການປະຕິວັດຊາດ ປະຊາທິປະໄຕ, ສະຖາປານາລັດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປີ 1975 ນັ້ນ ພັກເຮົາຫາກໍ່ສຳເລັດການປະຕິວັດຊາດ ຍັງບໍ່ທັນສຳເລັດການປະຕິວັດປະຊາທິປະໄຕປະຊາຊົນ"(1), ບົດຮຽນ ແລະ ພຶດຕິກຳໃນໄລຍະດັ່ງກ່າວ ແມ່ນປາຍແຫຼມແຫ່ງການນຳພາ-ຊີ້ນຳ ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແລະ ໄດ້ຢືນຢັນຢ່າງເປັນຮູບປະທຳໃຫ້ພວກເຮົາເຫັນຢ່າງຈະແຈ້ງພໍສົມຄວນ.

ມາເຖິງໄລຍະແຫ່ງການປ່ຽນແປງໃໝ່ນີ້ ພັກປະຊາຊົນປະຕິວັດລາວ ໄດ້ເຄື່ອນໄຫວໃນສະພາບການ ແລະ ເງື່ອນໄຂໃໝ່ ໝາຍຄວາມວ່າ ພັກມີການຈັດຕັ້ງ ແລະ ເຄື່ອນໄຫວຢ່າງເປີດເຜີຍທັງພາຍໃນ ແລະ ຕ່າງປະເທດ. ຕໍ່ກັບສະພາບການໜ້າທີ່ການເມືອງທີ່ເປັນໃຈກາງຂອງພັກວາງອອກ ແລະ ນຳພາປະຕິບັດສອງໜ້າທີ່ຍຸດທະສາດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໄດ້ແບ່ງອອກເປັນສອງໄລຍະປະຫວັດສາດທີ່ມີຄວາມສຳຄັນຄື:

- ໄລຍະປະຫວັດສາດທີໜຶ່ງ ທ້າຍປີ 1975 ຫາທ້າຍປີ 1986 ເຊິ່ງເປັນໄລຍະເລີ່ມຕົ້ນແຫ່ງການນຳພາ-ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ບົນເສັ້ນທາງລະບອບປະຊາທິປະໄຕປະຊາຊົນ, ສ້າງບັນດາປະຖົມປັດໃຈພື້ນຖານໃຫ້ແກ່ການກ້າວຂຶ້ນໄປສູ່ລະບອບສັງຄົມນິຍົມເທື່ອລະກ້າວ.

- ໄລຍະປະຫວັດສາດທີ່ສອງ ທ້າຍປີ 1986 ຫາປະຈຸບັນ ແມ່ນໄລຍະປ່ຽນແປງໃໝ່ຢ່າງຮອບດ້ານ, ມີຫຼັກການ ແລະ ມີຜົນສຳເລັດອັນໃຫຍ່ຫຼວງຫຼາຍດ້ານ. ນີ້ໄດ້ຢັ້ງຢືນເຖິງການວາງແນວທາງອັນຖືກຕ້ອງ, ສອດຄ່ອງ, ສະຫຼາດສ່ອງໃສ, ເບິ່ງກວ້າງເຫັນໄກຂອງພັກ ເພື່ອກ້າວຂຶ້ນສູ່ລະບອບສັງຄົມນິຍົມເທື່ອລະກ້າວ. ດັ່ງນັ້ນການກໍ່ສ້າງພັກ-ພະນັກງານ ໃນໄລຍະນີ້ກໍ່ຕ້ອງອີງໃສ່ ແລະ ຮັບໃຊ້ໜ້າທີ່ການເມືອງທີ່ເປັນໃຈກາງໃຫ້ດີທີ່ສຸດ.

ປະຈຸບັນ ທົ່ວພັກກຳລັງຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ພາຍໃຕ້ຄຳຂວັນທີ່ວ່າ: "ຍົກສູງຄວາມສາມາດນຳພາຂອງພັກ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນໃນຊາດ, ຮັບປະກັນສະຖຽນລະພາບດ້ານການເມືອງຢ່າງໜັກແໜ້ນ, ຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ, ສ້າງການຫັນປ່ຽນການພັດທະນາເສດຖະກິດ-ສັງຄົມ ໄປສູ່ຄຸນນະພາບໃໝ່ຢ່າງແຂງແຮງ, ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ, ສືບຕໍ່ນຳປະເທດຊາດພົ້ນຈາກສະຖານະພາບດ້ອຍພັດທະນາ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ" ຕະຫຼອດໄລຍະ 69 ປີຜ່ານມານີ້, ຜູ້ຂຽນເປັນສະມາ

ອ່ານຕໍ່ໜ້າ 15

(1) ຈາກປຶ້ມປະທານ ໄກສອນ ພົມວິຫານ ຍືນຍົງຄົງຕົວ ໃນພາລະກິດ ປະຕິວັດອັນຍິ່ງໃຫຍ່ຂອງປະຊາຊົນລາວບັນດາເຜົ່າຕະຫຼອດໄປ, ໜ້າ 183

ການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ສະມາຊິກພັກ ແມ່ນວຽກທີ່ສຳຄັນ ແລະ ຕ້ອງເຮັດຢ່າງເປັນປະຈຳ

ໂດຍ: ເຄນດີ ທຳມະວອນ

ຕະຫຼອດໄລຍະຜ່ານມາ ພັກເຮົາໄດ້ຖືວ່າວຽກງານການເມືອງ-ແນວຄິດ ແລະ ທິດສະດີ ແມ່ນວຽກງານທີ່ມີຄວາມສຳຄັນ, ປຽບເໝືອນເສັ້ນໄໝແດງທີ່ສອດຫ້ອຍໄປໃນທຸກວຽກງານຂອງທຸກຂັ້ນ ແລະ ໃນທຸກເວລາ, ໃນໄລຍະໃໝ່ ຂອງການປະຕິວັດປະເທດເຮົາຄື: ໄລຍະແຫ່ງການສືບຕໍ່ສ້າງ ແລະ ເສີມຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ສ້າງບັນດາປະຖົມປັດໃຈເພື່ອກ້າວຂຶ້ນສັງຄົມນິຍົມ, ພັກໄດ້ຖືເອົາວຽກງານດັ່ງກ່າວຢູ່ໃນແຖວໜ້າ ເພາະວ່າ: ການສືບຕໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ ແມ່ນໜ້າທີ່ອັນຫຍຸ້ງຍາກ, ສັບສົນ, ເປັນໜ້າທີ່ຍາວນານທີ່ຕ້ອງຜ່ານຜ່າຄວາມຫຍຸ້ງຍາກ ແລະ ການທົດສອບນາໆປະການ ຢາກເຮັດສຳເລັດໄດ້ຕ້ອງເປັນເອກະພາບທາງດ້ານແນວຄິດ, ເຊື່ອມຊຶມ ແລະ ເຂົ້າໃຈຢ່າງເລິກເຊິ່ງແນວທາງ, ແຜນນະໂຍບາຍຂອງພັກ ຖ້າບໍ່ດັ່ງນັ້ນແນວທາງຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມທີ່ວາງອອກກໍ່ຈະບໍ່ໄດ້ຮັບການປະຕິບັດ ແລະ ເປັນຈິງໄດ້.

ໄລຍະຜ່ານມາ, ອັນທີ່ພົ້ນເດັ່ນແມ່ນການດຳເນີນວຽກງານການເມືອງ-ນຳພາແນວຄິດ ຂອງພັກເຮົາ ໄດ້ຮັບການຈັດຕັ້ງປະຕິບັດສອດຫ້ອຍໄປກັບວຽກງານສ້າງພັກ, ສ້າງພະນັກງານ ແລະ ຂະບວນການສ້າງສາພັດທະນາດ້ວຍຫຼາຍຮູບການ ທີ່ສອດຄ່ອງ ແລະ ຖືບັນຫາການກໍ່ສ້າງພັກ-ພະນັກງານເປັນປັດໄຈຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງນະໂຍບາຍ ຂອງພັກ ແລະ ລັດ ທັງເປັນປັດໄຈຕັດສິນທຸກໄຊຊະນະຂອງການປະຕິວັດຢູ່ປະເທດເຮົາ. ສະນັ້ນ, ວຽກງານສຶກສາອົບຮົມການເມືອງ-ແນວຄິດ ແມ່ນມີບົດບາດ ແລະ ເປັນບັນຫາໜ້າທີ່ສຳຄັນ ແລະ ເປັນກຳລັງການເມືອງທີ່ເຂັ້ມແຂງອັນໜຶ່ງຕໍ່ການນຳພາຂອງພັກ ໃນໄລຍະເງື່ອນໄຂໃໝ່, ເພາະວ່າມັນຮັບປະກັນໃຫ້ພັກມີການພັດທະນາທາງດ້ານທິດສະດີ ແລະ ສັງລວມພຶດຕິກຳ, ບູລະນະແນວທາງ ແລະ ແຜນນະໂຍບາຍໃນດ້ານຕ່າງໆໄດ້ຢ່າງຖືກຕ້ອງ, ສອດຄ່ອງ, ຍົກສູງທັດສະນະຫຼັກໝັ້ນການເມືອງ, ປັບປຸງແບບແຜນນຳພາທີ່ມີວິທະຍາສາດ, ໃນການໂຄສະນາປຸກລະດົມມະຫາຊົນ ປະຕິບັດບັນດາຄາດໝາຍດ້ານຕ່າງໆ ໃຫ້ບັນລຸເປົ້າໝາຍທີ່ພັກເຮົາກຳນົດໄວ້.

ການສຶກສາອົບຮົມການເມືອງ-ແນວຄິດ ໂດຍສະເພາະຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດໃຫ້ພະນັກງານ, ສະມາຊິກພັກ ບໍ່ພຽງແຕ່ເປັນການຍົກລະດັບທາງດ້ານທິດສະດີ ແລະ ຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດເທົ່ານັ້ນ ຫາກຍັງເປັນການຕ້ານ ແລະ ສະກັດກັ້ນທຸກປະກົດການແນວຄິດທີ່ຜິດເຂວ, ຕ້ານການຫັນປ່ຽນໂດຍສັນຕິພາຍໃນພັກ, ຕ້ານແນວຄິດຫຼາຍພັກ, ຫຼາຍເຄົ້າ, ການສໍ້ລາດບັງຫຼວງ, ມ້າງເພຄວາມສາມັກຄີ ແລະ ອື່ນໆ ທີ່ກໍ່ໃຫ້ເກີດມີການແບ່ງແຍກຄວາມສາມັກຄີພາຍໃນພັກ, ກຸ່ມກ້ອນພາຍໃນພັກ ແລະ ຖັນແຖວພະນັກງານ-ສະມາຊິກພັກ. ຜ່ານພຶດຕິກຳຕົວຈິງໄດ້ຊີ້ໃຫ້ພວກເຮົາເຫັນຢ່າງຈະແຈ້ງວ່າ: ແນວທາງຂອງພັກ, ລະບຽບກົດໝາຍຂອງລັດ ກ່ອນຈະໄດ້ຮັບການຈັດຕັ້ງປະຕິບັດຕ້ອງມີຖັນແຖວພະນັກງານ-ສະມາຊິກພັກທີ່ມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງທີ່ໜັກແໜ້ນນຳໄປເຜີຍແຜ່ເຊື່ອມຊຶມຈັດຕັ້ງປະຕິບັດ

ໃນໝູ່ມະຫາຊົນ. ດັ່ງນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ: ສະມາຊິກພັກ, ພະນັກງານມີບົດບາດຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ ຂອງພັກ ແລະ ລັດ. ເພື່ອຮັບປະກັນໃຫ້ແນວທາງປ່ຽນແປງໃໝ່ ຂອງພັກໄດ້ຮັບການເຜີຍແຜ່ເຊື່ອມຊຶມເຂົ້າໃນຖັນແຖວພະນັກງານ-ສະມາຊິກພັກ, ຕ້ອງຮູ້ໂຄສະນາປຸກລະດົມຂົນຂວາຍປະຊາຊົນບັນດາເຜົ່າເຂົ້າຮ່ວມໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດຢ່າງເປັນເຈົ້າການ ແລະ ພ້ອມກັນຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ ຂອງພັກ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດໃນໝູ່ມະຫາຊົນຢ່າງກວ້າງຂວາງ ເລິກເຊິ່ງເຖິງຖອງທັງນີ້ກໍ່ເພື່ອແນໃສ່ຂະຫຍາຍລະບົບແນວຄິດ ຂອງພັກ, ປະກອບສ່ວນເຂົ້າໃນການສ້າງ ແລະ ປັບປຸງແຜນນະໂຍບາຍ ຂອງພັກ, ລະບຽບກົດໝາຍ ຂອງລັດ, ສຶກສາອົບຮົມໃຫ້ຄົນໃນສັງຄົມມີໂລກະທັດ, ຊີວະທັດທີ່ຖືກຕ້ອງນັ້ນກໍ່ເປັນການປະກອບສ່ວນສ້າງຄວາມເຊື່ອໝັ້ນ, ມີຄວາມຕື່ນຕົວການເມືອງ, ຕັ້ງໜ້າປະຕິບັດໜ້າທີ່ການເມືອງຂອງພັກ ໃນແຕ່ລະໄລຍະໃຫ້ເກີດດອກອອກຜົນ. ດັ່ງນັ້ນ, ວຽກງານສຶກສາອົບຮົມການເມືອງ-ແນວຄິດ ແມ່ນວຽກງານໜຶ່ງທີ່ກະທົບໂດຍກົງໃສ່ທຸກຂົງເຂດວຽກງານຂອງພັກ, ລັດ ແລະ ມະຫາຊົນໃນສັງຄົມ. ສະນັ້ນ, ວຽກງານດັ່ງກ່າວ ຈຶ່ງປຽບເໝືອນຕ່ອງໂສ້ທີ່ເກາະຫ້ອຍໄປທຸກຂົງເຂດວຽກງານ ໃນທົ່ວພັກ-ລັດ ແລະ ທົ່ວສັງຄົມ.

ການຈັດຕັ້ງປະຕິບັດວຽກງານການເມືອງ-ແນວຄິດຕໍ່ກັບສະມາຊິກພັກ-ພະນັກງານໃນໄລຍະຜ່ານມາ: ເຖິງສະພາບສາກົນມີການຜັນແປໄປຢ່າງສັບສົນ ແລະ ສະຫຼັບສັບຊ້ອນ ເຊິ່ງມີທັງກາລະໂອກາດ ແລະ ສິ່ງທ້າທາຍທົດສອບຕໍ່ການເຄື່ອນໄຫວວຽກງານການເມືອງ-ແນວຄິດ ຂອງພັກ ເວົ້າສະເພາະພາຍໃນປະເທດເຖິງວ່າມີສະຖຽນລະພາບທາງດ້ານກາເມືອງ, ສັງຄົມມີຄວາມສະຫງົບປອດໄພ ແລະ ມີເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ແຕ່ກໍ່ຍັງປະເຊີນໜ້າກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ທີ່ສົ່ງຜົນກະທົບໃນທາງລົບຕໍ່ແນວຄິດຈິດໃຈ ຂອງພະນັກງານ, ສະມາຊິກພັກ, ທະຫານຕຳຫຼວດ ແລະ ປະຊາຊົນບັນດາເຜົ່າບໍ່ໜ້ອຍເປັນຕົ້ນແມ່ນຄວາມທຸກຍາກ ຂອງປະຊາຊົນ, ໄພທຳມະຊາດ, ການປະຕິບັດລະບຽບກົດໝາຍບໍ່ເຂັ້ມງວດຂອງພົນລະເມືອງ, ການສໍ້ລາດບັງຫຼວງ ແລະ ສິ່ງປະກົດການຫຍໍ້ທໍ້ອື່ນໆ, ແຕ່ຄະນະພັກແຕ່ລະຂັ້ນ ໄດ້ເປັນເຈົ້າການນຳພາ-ຊີ້ນຳສຶກສາອົບຮົມການເມືອງ-ແນວຄິດບົນພື້ນຖານ ຫັນເອົາມະຕິກອງປະ ຊຸມໃຫຍ່ ຂອງພັກ, ມະຕິກອງປະຊຸມໃຫຍ່ ຂອງອົງຄະນະພັກຂອງຕົນ, ກົດລະບຽບຂອງພັກ, ກົດໝາຍ ຂອງລັດ ເຊື່ອມຊຶມໃຫ້ພະນັກງານ, ສະມາຊິກພັກ, ນັກຮົບ ແລະ ປະຊາຊົນບັນດາເຜົ່າດ້ວຍຫຼາຍຮູບແບບ, ຫຼາຍວິທີເຊັ່ນ: ເປີດບັ້ນດຳເນີນຊີວິດການເມືອງປັບປຸງປົວແປງພັກ-ລັດ ໃນແຕ່ລະໄລຍະ ແລະ ຈັດຕັ້ງການໂຄສະນາເຜີຍແຜ່ສະພາບການ **ພາຍໃນ ແລະ ຕ່າງປະເທດ...ໃນວັນສຳຄັນຕ່າງໆ ຂອງພັກ, ຂອງຊາດ ໃຫ້ພະນັກງານຂັ້ນຕ່າງໆ ນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນຮາກຖານ ຢ່າງທົ່ວເຖິງ. ປະຈຸບັນທົ່ວປະເທດມີພະນັກງານທັງໝົດ 172.341 ຄົນ, ຍິງ 82.366ຄົນ, ມີສະມາຊິກພັກທັງໝົດ 412.520 ສະຫາຍ, ຍິງ 112.009 ສະຫາຍ, ທຽບໃສ່ປີ 2022** ເພີ່ມຂຶ້ນ 7.954 ສະຫາຍ, ຍິງ 2.104 ສະຫາຍ.

ຜ່ານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໄດ້ເຮັດໃຫ້ພະນັກງານ, ສະມາຊິກພັກໄດ້ຮັບຮູ້ເຂົ້າໃຈ ແລະ ເປັນເອກະພາບສູງຕໍ່ແນວທາງຂອງພັກ, ມີແນວຄິດອຸ່ນອຽນທຸ່ນທ່ຽງ, ອົດທົນຜ່ານຜ່າຄວາມຫຍຸ້ງຍາກເປັນເຈົ້າການປົກປ້ອງແນວທາງການຈັດຕັ້ງຂອງພັກ, ຮູ້ຈຳແນກມິດ-ສັດຕູ, ຕ້ານການເສື່ອມຖອຍທາງດ້ານການເມືອງ, ທັດສະນະທີ່ຜິດເຂວ; ເຂົ້າໃຈທິດທາງຂອງພັກ-ລັດຖະບານໃນການແກ້ໄຂສະພາບຄວາມຫຍຸ້ງຍາກຕ່າງໆ; ຄະນະພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນສ່ວນຫຼາຍຍັງມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີຄວາມຈົງຮັກພັກດີຕໍ່ພັກ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມສາມັກຄີ ພ້ອມກັນຈັດຕັ້ງປະ

ຕິບັດໜ້າທີ່ການເມືອງທີ່ການຈັດຕັ້ງມອບໝາຍໃຫ້ມີຜົນສໍາເລັດເປັນຢ່າງດີ.

ຄຽງຄູ່ກັບຜົນສໍາເລັດຂ້າງເທິງນັ້ນ ທີ່ຄະນະພັກແຕ່ລະຂັ້ນ ໄດ້ມີຄວາມພະຍາຍາມ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວນັ້ນ, ແຕ່ກໍ່ຍັງມີຂໍ້ຄົງຄ້າງຈໍານວນໜຶ່ງທີ່ເປັນບັນຫາຕັ້ງຂຶ້ນ ຈະຕ້ອງໄດ້ຮັບການປັບປຸງແກ້ໄຂໃນຕໍ່ໜ້າເປັນຕົ້ນ:

1. ຄະນະພັກ ຈໍານວນໜຶ່ງບໍ່ທັນໄດ້ເອົາໃຈໃສ່ໃນການສຶກສາອົບຮົມການເມືອງ-ແນວຄິດ ເປັນຕົ້ນແມ່ນການຈັດຕັ້ງເຊື່ອມຊຶມແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ, ລະບຽບການ ແລະ ນິຕິກໍາຕ່າງໆຂອງພັກ-ລັດ ເຖິງວ່າໄດ້ເຮັດຫຼາຍ ແຕ່ຮູບການ, ວິທີການ ແລະ ເນື້ອໃນຍັງລວມໆ, ຊັກຊ້າ, ບໍ່ທົ່ວເຖິງທຸກເປົ້າໝາຍ, ເຮັດໃຫ້ຄວາມຮັບຮູ້, ຄວາມເຂົ້າໃຈຂອງສະມາຊິກພັກ, ພະນັກງານ-ລັດຖະກອນຈໍານວນໜຶ່ງ ບໍ່ທັນເລິກເຊິ່ງ, ບໍ່ທັນປ່ຽນຢ່າງຕັ້ງໜ້າທາງດ້ານແນວຄິດສະແດງອອກຢູ່ບ່ອນວ່າ ສະພາບແນວຄິດ ຂອງພະນັກງານ, ສະມາຊິກພັກ ຈໍານວນໜຶ່ງ ຍັງຂາດຄວາມກະຕືລືລົ້ນ ຕໍ່ໜ້າທີ່ວຽກງານ, ມີແນວຄິດປຽບທຽບຊົ່ງຊາ, ຂີ້ຄ້ານມັກງ່າຍ, ເມີນເສີຍລໍຖ້າແຕ່ຄໍາສັ່ງ, ບໍ່ທັນເປັນເຈົ້າການໃນການຄົ້ນຄິດປະດິດສ້າງ ໃນວຽກງານທີ່ຕົນຮັບຜິດຊອບ, ເຮັດໃຫ້ຫຼາຍວຽກມີລັກສະນະແກ່ຍາວ ແລະ ເກີດມີທາງສຽງຈົ່ມວ່າຈາກປະຊາຊົນ.

2. ພະນັກງານການນໍາ ແລະ ພະນັກງານຫຼັກແຫຼ່ງຍັງບໍ່ທັນຮັກສາໄດ້ຄວາມເປັນແບບຢ່າງນໍາໜ້າ ເປັນຕົ້ນແມ່ນດ້ານຄຸນທາດການເມືອງ, ແບບແຜນການນໍາພາ, ແບບແຜນການດໍາລົງຊີວິດ ຍັງມີປະກົດການຫຼົ້ມກິນຟູມເຟືອຍ, ສວຍໃຊ້ໜ້າທີ່ຕໍາແໜ່ງອັນບໍ່ຖືກຕ້ອງ ຈຶ່ງເຮັດໃຫ້ພະນັກງານ, ສະມາຊິກພັກ ມີແນວຄິດລັ່ງເລ-ຄອນແຄນເກີດແນວຄິດທໍ້ຖອຍ, ຂາດຄວາມເຊື່ອໝັ້ນຕໍ່ການນໍາພາ ຂອງພັກ ແລະ ລັດ ສະແດງອອກຢູ່ບ່ອນວ່າ ມີສະມາຊິກພັກ-ພະນັກງານຈໍານວນບໍ່ໜ້ອຍ ຂໍລາອອກຈາກການຈັດຕັ້ງ.

3. ການຈັດຕັ້ງຮາກຖານພັກຈໍານວນໜຶ່ງ ດໍາເນີນຊີວິດໜ່ວຍພັກ ບໍ່ເປັນປົກກະຕິ, ເນື້ອໃນການຮ່ວມຊີວິດພັກບໍ່ຮັບປະກັນ 03 ລັກສະນະ ໂດຍສະເພາະແມ່ນລັກສະນະຕໍ່ສູ້ບໍ່ແຂງແຮງ, ບໍ່ກ້າຕໍານິສິ່ງຂ່າວເຊິ່ງກັນແລະ ກັນ, ຈໍານວນໜຶ່ງບໍ່ຍອມຮັບເອົາການຕໍານິສິ່ງຂ່າວເຮັດໃຫ້ພາຍໃນການຈັດຕັ້ງບໍ່ມີຄວາມສະຫງົບ, ຄວາມສາມັກຄີບໍ່ໜັກແໜ້ນ.

4). ຄວາມຮັບຜິດຊອບ ຂອງຄະນະພັກ, ອໍານາດການປົກຄອງບາງບ່ອນ, ບາງຂັ້ນຕໍ່ວຽກງານການເມືອງ-ແນວຄິດຍັງບໍ່ທັນສູງເທົ່າທີ່ຄວນ, ພະນັກງານທີ່ເຮັດວຽກງານດັ່ງກ່າວມີຈໍາກັດ, ລະດັບຄວາມຮູ້, ຄວາມສາມາດດ້ານວິຊາສະເພາະຍັງຕໍ່າ, ຜູ້ທີ່ມີບົດຮຽນປະສົບການໃນວຽກງານດ້ານນີ້ຍັງມີໜ້ອຍ ໂດຍສະເພາະແມ່ນຢູ່ຂັ້ນຮາກຖານ.

ສະນັ້ນ, ເພື່ອກໍາຈັດປະກົດການທໍ້ຖອຍຕ່າງໆ ເຮັດໃຫ້ວຽກງານສຶກສາອົບຮົມການເມືອງ-ແນວຄິດດີຂຶ້ນໃນຕໍ່ໜ້າ ຄວນສຸມໃສ່ບັນຫາດັ່ງລຸ່ມນີ້:

ໜຶ່ງ. ເອົາໃຈໃສ່ປະຕິບັດທິດຊີ້ນໍາ ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກທີ່ວ່າ: ເພີ່ມທະວີການເຄື່ອນໄຫວດ້ານການເມືອງ ແລະ ນໍາພາແນວຄິດ ຢູ່ພາຍໃນການຈັດຕັ້ງພັກທຸກຂັ້ນ ຕິດພັນກັບການດໍາເນີນປົວແປງພາຍໃນຢ່າງຕໍ່ເນື່ອງ ໂດຍຖືເອົາການຕໍ່ສູ້ຕ້ານແນວຄິດຄອງເດີມ, ທັດສະນະການເມືອງທີ່ຜິດເຂວ, ແບບແຜນນໍາພາທີ່ບໍ່ຖືກຕ້ອງ ກໍ່ຄືຄ່ານິຍົມທີ່ບໍ່ເໝາະສົມຢູ່ພາຍໃນຖັນແຖວສະມາຊິກພັກ-ພະນັກງານ; ຖືເອົາວຽກງານການເມືອງ-ແນວຄິດສອດຫ້ອຍໄປທຸກການເຄື່ອນໄຫວວຽກງານຂອງພັກ ແລະ ລັດ ແນໃສ່ເຮັດໃຫ້ພະນັກງານ ໂດຍສະເພາະແມ່ນຜູ້ເປັນຫຼັກແຫຼ່ງກໍາແໜ້ນແນວທາງນະໂຍບາຍ, ມີຫຼັກໝັ້ນທັດສະນະ ແລະ ຄຸນທາດການເມືອງ ທັງມີຄຸນສົມບັດສິນທໍາປະຕິວັດ ແລະ ຄວາມຮັບຜິດຊອບສູງ ໃນການປະຕິບັດໜ້າທີ່ດ້ວຍຄວາມປອດໃສ, ມີທັດສະນະຄະຕິ ແລະ ໂລກກະທັດວິທະຍາສາດ, ສາມາດຈໍາແນກອັນຜິດ-ອັນຖືກ

ທັງມີຄວາມເປັນເຈົ້າການປົກປ້ອງແນວທາງ ແລະ ອຸດົມການຂອງພັກ, ຕີຖອຍ ແລະ ຕອບຕ້ານສິ່ງຫຍໍ້ທໍ້ພາຍໃນພັກ ແລະ ສັງຄົມ.

ສອງ, ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ນໍາເອົາແນວທາງນະໂຍບາຍ, ມະຕິ, ຄໍາສັ່ງ, ຂໍ້ກໍານົດ, ກົດລະບຽບ ຂອງພັກ ແລະ ກົດໝາຍຕ່າງໆຂອງລັດ ລົງເຜີຍແຜ່ຮໍ່າຮຽນ ໃຫ້ພະນັກງານ, ສະມາຊິກພັກ ດ້ວຍຮູບການຕ່າງໆ ເຊັ່ນ: ເຊື່ອມຊຶມ, ໂຄສະນາເຜີຍແຜ່, ປະຖະກະຖາ, ເປີດຊຸດຮຽນ, ຊຸດຝຶກອົບຮົມບໍາລຸງ, ດໍາເນີນຊີວິດການເມືອງ ແລະ ຮູບການອື່ນໆ ເພື່ອໃຫ້ເປົ້າໝາຍຕ່າງໆມີຄວາມຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ, ເປັນເຈົ້າການເຂົ້າຮ່ວມໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ສາມ, ຕ້ອງເພີ່ມທະວີວຽກງານສຶກສາອົບຮົມມູນເຊື້ອ ຂອງພັກ-ຂອງຊາດ ໃຫ້ພະນັກງານ, ສະມາຊິກພັກ, ປະຊາຊົນບັນດາເຜົ່າທຸກຊັ້ນຄົນ ໃຫ້ມີຄວາມຮັບຮູ້, ມີຄວາມທະນົງໃຈຢ່າງສຸດຊຶ້ງ ຕໍ່ມູນເຊື້ອອັນດີງາມ, ກໍາແໜ້ນ ແລະ ເຊື່ອໝັ້ນຕໍ່ແນວທາງນະໂຍບາຍ ຂອງພັກ, ສຶກສາອົບຮົມຖັນແຖວພະນັກງານ-ສະມາຊິກພັກ ເປັນແບບຢ່າງນໍາໜ້າໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍ ຂອງພັກ ແລະ ລະບຽບກົດໝາຍ ຂອງລັດຢ່າງເຂັ້ມງວດ, ສ້າງແບບແຜນວິທີ ເຮັດວຽກທີ່ເປັນວິທະຍາສາດ ທັນຍຸກສະໄໝ ຕິດແທດຕົວຈິງ, ຕິດແທດຮາກຖານ ແລະ ມີແບບແຜນດໍາລົງຊີວິດທີ່ປອດໃສ, ຂາວສະອາດ, ສົ່ງເສີມຫົວຄິດປະດິດສ້າງໃນການສະແຫວງຫາອັນໃໝ່ທີ່ກ້າວໜ້າ ແລະ ທັນສະໄໝ ເພື່ອພັດທະນາ.

ສີ່. ຄະນະພັກແຕ່ລະຂັ້ນ ຕ້ອງຖືເອົາວຽກງານດັ່ງກ່າວເປັນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງ ເປັນເຈົ້າການໃນການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ ຕ້ອງເອົາໃຈໃສ່ ແລະ ຖືເປັນບັນຫາກົກ ຂອງທຸກວຽກງານ. ຍ້ອນວ່າ: ພະນັກງານ, ສະມາຊິກພັກມີບົດບາດສໍາຄັນຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດ.

ສັງລວມແລ້ວ, ການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ ແມ່ນໜ້າທີ່ອັນສໍາຄັນ ແລະ ຮີບດ່ວນສໍາລັບການປັບປຸງກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ຖືເອົາວຽກງານດັ່ງກ່າວເປັນ ອາວຸດທີ່ແຫຼມຄົມສອດທ້ອຍເຂົ້າໃນທຸກຂົງເຂດວຽກງານ ຂອງພັກ. ດັ່ງນັ້ນ, ໃນພາລະກິດປ່ຽນແປງໃໝ່ ຂອງພັກເຮົາ, ພັກເວລາໃດກໍ່ຖືເອົາວຽກງານການເມືອງ-ແນວຄິດກັບການກໍ່ສ້າງພັກ, ພະນັກງານເປັນກົກ, ເປັນໜ້າທີ່ພື້ນຖານ, ເປັນແຖວໜ້າ, ເປັນປັດໄຈສໍາຄັນຕົ້ນຕໍ, ຮັບປະກັນລັກສະນະວິທະຍາສາດ, ຄວາມເປັນເອກະພາບລະຫວ່າງ ທິດສະດີກັບພຶດຕິກໍາ, ມີທັດສະນະຄົ້ນຄວ້າທີ່ມີວິທະຍາສາດເພື່ອກໍາໄດ້ສະພາບການ, ຮູ້ວາງແຜນຄາດຄະເນສະພາບ ຂອງສະມາຊິກພັກ-ພະນັກງານ. ເພາະສະນັ້ນ, ຄະນະພັກແຕ່ລະຂັ້ນ ຕ້ອງເພີ່ມທະວີເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ລັດຖະກອນ, ສະມາຊິກພັກ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ໂດຍປະຕິບັດຕາມຫຼັກການນໍາພາໂດຍກົງ, ຮອບດ້ານ, ເດັດຂາດ, ມີຫຼັກການ ແລະ ມີຄວາມເປັນເອກະພາບພາຍໃນພັກ. ພ້ອມກັນນັ້ນ, ກໍ່ໄດ້ເພີ່ມທະວີຄວາມເປັນເຈົ້າການເສີມຂະຫຍາຍຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ດ້ວຍຄວາມຕັ້ງໜ້າເພື່ອປະກອບສ່ວນເຂົ້າໃນການພັດທະນາຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກ ແລະ ປະຊາຊົນໃຫ້ມີຄຸນທາດການເມືອງ-ແນວຄິດທີ່ໜັກແໜ້ນ, ມີຄວາມຈົ່ງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນລາວບັນດາເຜົ່າ; ເຮັດໃຫ້ພະນັກງານ-ລັດຖະກອນ, ສະມາຊິກພັກມີລະດັບທິດສະດີການເມືອງ ແລະ ວິຊາສະເພາະນັບມື້ນັບສູງຂຶ້ນ, ມີຄຸນສົມບັດສິນທໍາປະຕິວັດ, ມີແບບແຜນດໍາລົງຊີວິດທີ່ປອດໃສ, ຂາວສະອາດ ແລະ ມີຄວາມອົດທົນສູ້ຊົນບຸກບືນ ເພື່ອພັດທະນາຍົກລະດັບຊີວິດການເປັນຢູ່ຂອງຕົນໃຫ້ດີຂຶ້ນເທື່ອລະກ້າວ...✍

ແນວຄິດຊີ້ນຳ ປະທານ ຄຳໄຕ ສີພັນດອນ ຕໍ່ກັບການຈັດຕັ້ງປະຕິບັດສອງໜ້າທີ່ຍຸດທະສາດ, ປົກປັກຮັກສາ ແລະ ສ້າງສາປະເທດຊາດ

ໂດຍ: ສັນຕິບານ

ປະທານ ຄຳໄຕ ສີພັນດອນ ແມ່ນນັກປະຕິວັດ ແລະ ແມ່ນຜູ້ນຳຮຸ່ນທຳອິດຂອງພັກເຮົາ ທີ່ມີຄວາມປີຊາສາມາດ, ອົງອາດກ້າແກ່ນ, ມີຄວາມສຸຂຸມຮອບຄອບ ແລະ ໜັກແໜ້ນໃນທຸກສະຖານະການ; ເພິ່ນທັງແມ່ນນັກຍຸດທະສາດ, ນັກຍຸດໂທບາຍ ທີ່ຄາດຄະເນສະພາບການໄກ, ຄ່ອງແຄ່ວ, ວ່ອງໄວ ທັງມີຄວາມປະດິດສ້າງ ໃນການວາງແນວທາງການເມືອງ, ຍຸດທະສາດການທະຫານເຂົ້າກັບເງື່ອນໄຂ ແລະ ຈຸດພິເສດຕົວຈິງ ຂອງປະເທດຊາດໃນແຕ່ລະໄລຍະຢ່າງຖືກຕ້ອງ ດັ່ງນັ້ນ, ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ ໂດຍໄດ້ຮັບການມອບໝາຍຈາກພັກ, ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈຈາກກອງທັບ ແລະ ປະຊາຊົນລາວບັນດາເຜົ່າ ປະທານ ຄຳໄຕ ສີພັນດອນ ສືບຕໍ່ໄດ້ຮັບການເລືອກຕັ້ງເປັນກຳມະການກົມການເມືອງສູນກາງພັກ, ໄດ້ຮັບແຕ່ງຕັ້ງເປັນຮອງນາຍົກລັດຖະມົນຕີ, ເປັນລັດຖະມົນຕີກະຊວງປ້ອງກັນປະເທດ ແລະ ສືບຕໍ່ເປັນຜູ້ບັນຊາການສູງສຸດກອງທັບປະຊາຊົນລາວ. ດ້ວຍຄວາມຮັບຜິດຊອບສູງ ແລະ ມີປະສົບການສູງຕໍ່ໜ້າທີ່ອັນສຳຄັນດັ່ງກ່າວ ເພິ່ນໄດ້ຄຽງບ່າຄຽງໄຫຼ່ກັບປະທານ ໄກສອນ ພົມວິຫານ ແລະ ບັນດາກົມການເມືອງສູນກາງພັກ ໃນການຄົ້ນຄວ້າ ກຳນົດທິດທາງ ໜ້າທີ່ຍຸດທະສາດ ຂອງການປະຕິວັດລາວໃນໄລຍະໃໝ່; ປະທານ ຄຳໄຕ ສີພັນດອນ ໄດ້ເປັນເຈົ້າການສະເໜີໃຫ້ກົມການເມືອງສູນກາງພັກ ພິຈາລະນາຕົກລົງກ່ຽວກັບການກຳນົດສອງໜ້າທີ່ຍຸດທະສາດ ຂອງການປະຕິວັດໃນໄລຍະໃໝ່ ເຊິ່ງໃນນັ້ນຖືເອົາການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເປັນໜ້າທີ່ສຳຄັນ ແຖວໜ້າຂອງການປະຕິວັດ, ຖືເອົາການພັດທະນາເສດຖະກິດ, ພັດທະນາຊັບພະຍາກອນມະນຸດ ເປັນໜ້າທີ່ໃຈກາງ ເຊິ່ງເປັນການກຳນົດໜ້າທີ່ຍຸດທະສາດທີ່ຖືກຕ້ອງ, ສອດຄ່ອງກັບສະພາບການຕົວຈິງຂອງການປະຕິວັດລາວ.

ໃນໄລຍະແຫ່ງການປົກປັກຮັກສາປະເທດຊາດ ແລະ ສ້າງສາລະບອບໃໝ່ ປະທານ ຄຳໄຕ ສີພັນດອນ ຍາມໃດກໍ່ຄຽງບ່າຄຽງໄຫຼ່ກັບປະທານ ໄກສອນ ພົມວິຫານ ແລະ ຜູ້ນຳຄົນອື່ນ ຄົ້ນຄວ້າວິໄຈບັນດາຈຸດພິເສດຂອງສະພາບການຢູ່ພາຍໃນປະເທດ, ບັນດາທ່າອ່ຽງຂອງຍຸກສະໄໝ ແລະ ໄດ້ກຳນົດແນວທາງຍຸດທະສາດຂອງການປະຕິວັດໃນໄລຍະໃໝ່ຢ່າງຖືກຕ້ອງ ເພື່ອນຳພາປະເທດຊາດກ້າວໄປສູ່ຈຸດໝາຍສັງຄົມນິຍົມເທື່ອລະກ້າວຢ່າງໜັກແໜ້ນ; ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນຖານະທີ່

ເປັນເສນາທິການໂດຍກົງໃຫ້ສູນກາງພັກນັ້ນ ປະທານ ຄໍາໄຕ ສີພັນດອນ ເປັນເຈົ້າການໄຈ້ແຍກສະພາບການດ້ານຕ່າງໆ ໂດຍສະເພາະແມ່ນກົນອຸບາຍຂອງສັດຕູ ເພິ່ນໄດ້ສະເໜີທິດທາງໜ້າທີ່ອັນຮີບດ່ວນ ເພື່ອໃຫ້ກົມການເມືອງຄົ້ນຄວ້າ ແລະ ກໍານົດເປັນແຜນນະໂຍບາຍຂອງພັກ. ເນື້ອໃນຂອງສອງໜ້າທີ່ຍຸດທະສາດ ຕາມແນວຄິດປະທານ ຄໍາໄຕ ສີພັນດອນ ແມ່ນຖືໜ້າທີ່ປົກປັກຮັກສາປະເທດຊາດເປັນໜ້າທີ່ແຖວໜ້າຂອງການປະຕິວັດ, ແນໃສ່ປັບປຸງ, ກໍ່ສ້າງກໍາລັງປະກອບອາວຸດໃຫ້ເຂັ້ມແຂງ, ສ້າງໃຫ້ທົ່ວປວງຊົນກາຍເປັນກໍາລັງປ້ອງກັນຊາດ ເພື່ອສະກັດກັ້ນກົນອຸບາຍ ແລະ ການເຄື່ອນໄຫວມ້າງເພຂອງອິດທິກໍາລັງປໍລະປັກ, ກຸ່ມຄົນບໍ່ດີ; ໜ້າທີ່ສ້າງສາປະເທດຊາດແມ່ນການຖືເອົາປະຊາຊົນ ແລະ ເສດຖະກິດເປັນໃຈກາງຂອງການພັດທະນາ, ໃນນັ້ນເອົາການພັດທະນາຊັບພະຍາກອນມະນຸດ, ພັດທະນາປະຊາຊົນໃຫ້ມີຄວາມຮູ້ກ່ຽວກັບແນວທາງນະໂຍບາຍຂອງພັກ ເປັນເຈົ້າການຜະລິດສິນຄ້າເປັນບັນຫາກົກ ເພື່ອສ້າງປະຖົມປັດໄຈສັງຄົມນິຍົມແຕ່ຮາກຖານຂຶ້ນມາ. ພຶດຕິກໍາແຫ່ງຊຸມປີຫຼັງປົດປ່ອຍ ໄດ້ຊີ້ໃຫ້ເຫັນວ່າ ປະເທດເຮົາໄດ້ກາຍເປັນປ້ອມດ້ານໜ້າຂອງການປະຕິວັດຢູ່ໃນອິນດູຈີນ ແລະ ອາຊີອາຄະເນ, ປະເຊີນໜ້າໂດຍກົງກັບການເຄື່ອນໄຫວມ້າງເພທໍາລາຍຂອງສັດຕູຢູ່ພາຍໃນ ແລະ ຈາກພາຍນອກ. ເຮັດໃຫ້ປະເທດເຮົາພົບຄວາມຫຍຸ້ງຍາກ, ສັບສົນຫຼາຍຢ່າງ. ຢູ່ພາຍໃນປະເທດ ພວກທະຫານຫຸ່ນວຽງຈັນຈໍານວນຫຼວງຫຼາຍ ຍັງບໍ່ທັນໄດ້ຮັບການສຶກສາອົບຮົມດັດສ້າງຈໍານວນໜຶ່ງໂຕນເຂົ້າປ່າ, ຈໍານວນໜຶ່ງແຕກໄປຢູ່ນໍາປະຊາຊົນຕາມທ້ອງຖິ່ນຮາກຖານຕ່າງໆ ແລະ ອີກຈໍານວນໜຶ່ງໂຕນໄປຢູ່ປະເທດໃກ້ຄຽງ, ສ່ວນໜຶ່ງທີ່ດື້ດ້ານໄດ້ເຕົ້າໂຮມກໍາລັງຄືນໃໝ່ ແລະ ສົມທົບກັບກໍາລັງປະຕິການລາວພັດຖິ່ນ ທີ່ໄດ້ຮັບການລ້ຽງເກືອ, ຝຶກແອບ, ປະກອບອາວຸດຈາກອິດທິກໍາລັງຈັກກະພັດ ແລະ ປະຕິການທາງນອກ ແລ້ວສົ່ງເຂົ້າມາກໍ່ຄວາມວຸ້ນວາຍຕ້ານຄືນລະ

ກອງປະຊຸມໃຫຍ່ ອົງຄະນະພັກກະຊວງປ້ອງກັນປະເທດ ວັນທີ 2-6 ກຸມພາ 1998

ບອບໃໝ່ ເຊັ່ນ: ການກໍ່ຄວາມບໍ່ສະຫງົບ, ການປຸ້ນຈີ້, ລອບສັງຫານພະນັກງານທ້ອງຖິ່ນ, ສະກັດລັດຕີຕາມສາຍທາງຍຸດທະສາດຕ່າງໆ, ບຸກຕີ ແລະ ຈູດເຜົາບ້ານຊ່ອງປະຊາຊົນ ອັນໄດ້ເຮັດໃຫ້ສະພາບການຢູ່ພາຍໃນປະເທດມີຄວາມສັບສົນບໍ່ໜ້ອຍ; ຍິ່ງໄປກວ່ານັ້ນບາງບ່ອນພວກເຂົາພະຍາຍາມຈະກໍ່ການລຸກຮື້ຂຶ້ນ ຫວັງປະຕິບັດແຜນການສ້າງສອງເຂດສອງກຳລັງຢູ່ພາຍໃນປະເທດ ເພື່ອເປັນເງື່ອນໄຂຮ້ອງຂໍການແຊກແຊງຈາກທາງນອກ ກໍຄື ຈັກກະພັດ, ສຳລັບທາງນອກພວກເຂົາດຳເນີນການປິດລ້ອມດ້ານເສດຖະກິດ, ຊອກທຸກວິທີໂດດດ່ຽວທາງດ້ານຕ່າງປະເທດ, ທັງໃຊ້ກຳລັງຂົ່ມຂູ່ເກາະຜິດ ແລະ ບຽດຍຶດຢູ່ຕາມເຂດຊາຍແດນຂອງປະເທດເຮົາ, ເຮັດໃຫ້ສະພາບການມີຄວາມເຄັ່ງຕຶງ ແລະ ເປັນອັນຕະລາຍທີ່ສຸດ. ທັງໝົດນັ້ນສັດຕູຫວັງສົມທົບການເຄື່ອນໄຫວມ້າງເພກໍ່ຄວາມບໍ່ສະຫງົບຢູ່ພາຍໃນກັບການກົດໜີບຢູ່ໃນລະດັບສູງຈາກທາງນອກ, ຫວັງມ້າງເພລະບອບໃໝ່, ລົບລ້າງໝາກຜົນຂອງການປະຕິວັດຢູ່ປະເທດເຮົາ.

ໃນສະພາບການດັ່ງກ່າວ ປະທານ ຄຳໄຕ ສີພັນດອນ ເປັນຜູ້ໜຶ່ງ ທີ່ໄດ້ຮັບມອບໝາຍໜ້າທີ່ເປັນຜູ້ຮັບຜິດຊອບຊີ້ນຳໃນການວາງແຜນຈັດຕັ້ງປະຕິບັດສອງໜ້າທີ່ຍຸດທະສາດ ທີ່ກ່າວມານັ້ນ ເພິ່ນໄດ້ຈັດວາງກຳລັງພະນັກງານນັກຮົບ ໃນຖັນແຖວກຳລັງປະກອບອາວຸດສົມທົບກັບຖັນແຖວພະນັກງານຂອງຂະແໜງການຕ່າງໆ, ຈັດຕັ້ງເປັນຫຼາຍກອງ, ຫຼາຍໜ່ວຍກະຈາຍລົງສູ່ທ້ອງຖິ່ນຮາກຖານ ເຮັດໜ້າທີ່ສຶກສາອົບຮົມປຸກລະດົມຂົນຂວາຍປະຊາຊົນ, ປັບປຸງລະບົບການຈັດຕັ້ງອຳນາດການປົກຄອງ ແລະ ອົງການຈັດຕັ້ງມະຫາຊົນຢູ່ຮາກຖານ, ທັງເຮັດໜ້າທີ່ສົມທົບກັບທະຫານທ້ອງຖິ່ນ, ທະຫານລາດ-ກອງຫຼອນ ເຄື່ອນໄຫວຕີສັດຕູ ແລະ ປະຕິບັດນະໂຍບາຍຂົນຂວາຍ ເລີກຮົ້ກອງປຸ້ນ, ຈັດຕັ້ງຊີວິດໃໝ່ໃຫ້ປະຊາຊົນທີ່ພົ້ນຈາກການຄອບງຳຂອງສັດຕູ ເພື່ອເຮັດໃຫ້ເຂົາເຈົ້າສາມາດທຳມາຫາກິນເປັນປົກກະຕິ, ສຳລັບຢູ່ເຂດຊາຍແດນ ເພິ່ນໄດ້ຈັດວາງກຳລັງປະກອບອາວຸດ, ຈັດຕັ້ງປະຊາຊົນປົກປັກຮັກສາເຂດຊາຍແດນ, ເດັດດ່ຽວຕ້ານທຸກການລ່ວງລ້ຳບຽດຍຶດຂອງສັດຕູ; ໃນການແກ້ໄຂບັນຫາຊາຍແດນ ເພິ່ນໄດ້ຊີ້ນຳ ແລະ ຖືເປັນສຳຄັນການເຈລະຈາແກ້ໄຂໂດຍສັນຕິ, ຫຼີກເວັ້ນການປະເຊີນໜ້າທາງດ້ານການທະຫານ; ພ້ອມກັນນັ້ນ, ປະທານຍັງໄດ້ເອົາໃຈໃສ່ ແລະ ຖືເປັນສຳຄັນການປະສານສົມທົບລະຫວ່າງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ກັບການພັດທະນາເສດຖະກິດ; ອອກແຮງພັດທະນາກໍ່ສ້າງເຂດພູດອຍຊົນເຜົ່າໃຫ້ເປັນເຂດແນວຫຼັງຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢ່າງຍາວນານ, ເປັນຕົ້ນເພິ່ນໄດ້ຊີ້ນຳໂດຍກົງການພັດທະນາເຂດພູດອຍເຮັດໃຫ້ເຂດພູດອຍມີຄວາມສະຫງົບ, ຮາກຖານການເມືອງໄດ້ຮັບການປັບປຸງນັບມື້ນັບແໜ້ນໜາ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປ່ຽນແປງນັບມື້ນັບດີຂຶ້ນ.

ໃນການຊີ້ນຳຈັດຕັ້ງປະຕິບັດ, ປະທານໄດ້ລົງໄປແຕ່ລະກົມກອງ, ທ້ອງຖິ່ນ, ຮາກຖານ ເພື່ອກຳສະພາບການຕິດຕາມກວດກາຊຸກຍູ້ ແລະ ຖອດຖອນ

ປົດຮຽນ ທັງນີ້ແມ່ນແນໃສ່ເຮັດໃຫ້ພະນັກງານນັກຮົບຊາບຊຶມກຳແໜ້ນແຜນນະໂຍບາຍຂອງພັກ, ພ້ອມກັນນັ້ນກໍ່ດັດແປງແກ້ໄຂສິ່ງຜິດເຂວ ເພື່ອປັບປຸງເພີ່ມທະວີຄວາມສາມັກຄີຂອງປະຊາຊົນບັນດາເຜົ່າ ແລະຄວາມສາມັກຄີລະຫວ່າງທະຫານກັບປະຊາຊົນ. ປະທານ ຍັງໄດ້ເອົາ ໃຈໃສ່ຕໍ່ການເພີ່ມທະວີການເຄື່ອນໄຫວທາງດ້ານການຕ່າງປະເທດ ເພື່ອຮັດແໜ້ນຄວາມສາມັກຄີກັບບັນດາປະເທດອ້າຍນ້ອງເພື່ອນມິດ, ຍາດແຍ່ງການສະໜັບສະໜູນຊ່ວຍເຫຼືອໃນດ້ານຕ່າງໆ ເພິ່ນຖືສຳຄັນການຮັດແໜ້ນຄວາມສາມັກຄີພິເສດ ການຮ່ວມສຳພັນສູ້ຮົບລະຫວ່າງປະຊາຊົນ ແລະກອງທັບ 2 ປະເທດ ລາວ-ຫວຽດນາມອ້າຍນ້ອງຢ່າງບໍ່ຢຸດຢັ້ງ ດ້ວຍການພົວພັນຮ່ວມມືຕົວຈິງຫຼາຍຮູບການ. ໂດຍພາຍໃຕ້ການນຳພາທີ່ຖືກຕ້ອງ ແລະ ສະຫຼາດສ່ອງໃສ ຂອງສູນກາງພັກ, ຂອງປະທານ ໄກສອນ ພົມວິຫານ ແລະ ດ້ວຍການຊີ້ນຳ-ນຳພາຈັດຕັ້ງປະຕິບັດດ້ວຍຄວາມຕັ້ງໜ້າ ຂອງປະທານ ຄຳໄຕ ສີພັນດອນ ໄດ້ເຮັດໃຫ້ການປະຕິບັດສອງໜ້າທີ່ຍຸດທະສາດຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງໃນຫຼາຍດ້ານ, ເຮັດໃຫ້ປະເທດຊາດມີຄວາມສະຫງົບໂດຍພື້ນຖານ, ການພັດທະນາເສດຖະກິດ-ສັງຄົມມີການຂະຫຍາຍຕົວ, ຊີວິດການເປັນຢູ່ ນັບທັງທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນບັນດາເຜົ່ານັບມື້ນັບດີຂຶ້ນ.

ປະທານ ຄຳໄຕ ສີພັນດອນ ແມ່ນນັກຍຸດທະສາດທີ່ມີວິໄສທັດທາງການເມືອງ ແລະ ການທະຫານອັນກ້ວາງໄກ ສາມາດຕີລາຄາ ແລະ ຄາດຄະເນການຜັນແປຂອງສະຖານະການ ເພື່ອເປັນເຈົ້າການໃນການແກ້ໄຂສະພາບການໄດ້ຢ່າງຖືກຕ້ອງ, ເພິ່ນກາຍເປັນເພື່ອນຮ່ວມຮົບທີ່ໃກ້ຊິດ ແລະ ສະໜິດສະໜົມທີ່ສຸດ ຂອງປະທານ ໄກສອນ ພົມວິຫານ ແລະ ຄຽງບ່າຄຽງໄຫຼ່ກັບຜູ້ນຳພັກ-ລັດຄົນອື່ນໆ ໃນການຄົ້ນຄວ້າກຳນົດແນວທາງ, ນະໂຍບາຍ, ແຜນນະໂຍບາຍ, ຍຸດທະສາດ ແລະ ວິທີປະຕິວັດທີ່ຖືກຕ້ອງສອດຄ່ອງໃຫ້ແກ່ການປະຕິວັດລາວ ໃນແຕ່ລະໄລຍະ; ການຕັດສິນໃຈ ແລະ ການເຄື່ອນໄຫວວຽກງານຂອງເພິ່ນ ເວລາໃດກໍ່ຍຶດໝັ້ນຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລື, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ທຸກຄົນຮັບຜິດຊອບ, ເຄັ່ງຄັດໃນຄວາມຮັບຜິດຊອບ, ເຂັ້ມງວດດ້ານລະບຽບວິໄນ ເພື່ອທຸ້ມເທສະຕິປັນຍາເຂົ້າໃນການປະຕິບັດໜ້າທີ່ຂອງຕົນໃຫ້ດີທີ່ສຸດ.

ສັງລວມແລ້ວ ປະທານຄຳໄຕ ສີພັນດອນ ແມ່ນນັກຍຸດທະສາດການທະຫານ ທີ່ມີຄວາມປີຊາສາມາດ, ແມ່ນແບບຢ່າງແຫ່ງຄວາມກ້າແກ່ນໝຽວແໜ້ນໃນທຸກສະຖານະການ. ບັນດາຜົນງານ, ຄຸນງາມຄວາມດີຂອງປະທານ ຄຳໄຕ ສີພັນດອນ ໄດ້ກາຍເປັນມໍລະດົກອັນລ້ຳຄ່າໃຫ້ແກ່ສະມາຊິກພັກ-ພະນັກງານ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ຕະຫຼອດຮອດປະຊາຊົນລາວບັນດາເຜົ່າ. ເນື່ອງໃນໂອກາດສະເຫຼີມສະຫຼອງວັນເກີດຄົບຮອບ 100 ປີ ຂອງປະທານ ຄຳໄຕ ສີພັນດອນ ທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນລາວ ຂໍສະແດງຄວາມຮູ້ບຸນຄຸນຢ່າງສຸດຊຶ້ງ ແລະ ຄຸນງາມຄວາມດີຂອງທ່ານ ຍັງຈະຍືນຍົງໃນດວງໃຈຂອງປະຊາຊົນລາວຕະຫຼອດໄປ...ຯ

ປັບປຸງວຽກງານກໍ່ສ້າງ-ບຳລຸງພະນັກງານ ຢູ່ລະບົບພົວພັນຕ່າງປະເທດສູນກາງພັກ

ໂດຍ: ສັງວານຄຳ ໄຊຍະແກ້ວ

ການກໍ່ສ້າງ ແລະ ບຳລຸງຖັນແຖວພະນັກງານ ແມ່ນວຽກໜຶ່ງທີ່ສຳຄັນ, ແມ່ນຄວາມຮຽກຮ້ອງຕ້ອງການອັນຈຳເປັນ ແລະ ຮີບດ່ວນ ໂດຍສະເພາະແມ່ນປະເທດເຮົາພວມດຳເນີນພາລະກິດປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ ກໍ່ຄືໄລຍະສ້າງສາ ແລະ ບູລະນະລະບອບປະຊາທິປະໄຕ ປະຊາຊົນ ເພາະວ່າພະນັກງານເປັນຜູ້ຕັດສິນຜົນໄດ້ຜົນເສຍໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບຂອງລັດ; ສະນັ້ນ, ຈຶ່ງເວົ້າໄດ້ວ່າ: ບໍ່ວ່າຢູ່ຂົງເຂດວຽກງານໃດ, ວຽກງານດີ ຫຼື ອ່ອນ, ຊ້າ ຫຼື ໄວ, ມີປະສິດທິຜົນ ຫຼື ບໍ່ ແມ່ນຂຶ້ນກັບພະນັກງານເປັນຜູ້ຕັດສິນ. ດັ່ງປະທານ ໄກສອນ ພົມວິຫານ ໄດ້ໃຫ້ທັດສະນະວ່າ: "ແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຂອງພັກຈະຖືກຕ້ອງປານໃດກໍ່ດີ ຖ້າຫາກພະນັກງານ, ສະມາຊິກພັກຫາກຂາດຄວາມຮູ້, ຄວາມສາມາດໃນດ້ານຕ່າງໆ ເພື່ອຈະນຳພາ ແລະ ຈັດຕັ້ງປະຕິບັດແລ້ວ ແນວທາງແຜນນະໂຍບາຍດັ່ງກ່າວ ກໍ່ຈະມີພຽງແຕ່ຢູ່ໜ້າເຈ້ຍເທົ່ານັ້ນ" ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໄດ້ເນັ້ນສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງໃນວຽກງານພະນັກງານວ່າ ພະນັກງານແມ່ນປັດໃຈຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງແຜນະໂຍບາຍຂອງພັກ ແລະ ວຽກງານພະນັກງານແມ່ນຂໍກຸນແຈສຳຄັນໃນຂະບວນວິວັດການຈັດຕັ້ງປະຕິບັດບົດບາດນຳພາຂອງພັກພາວະກິດປະຕິວັດ, ເພື່ອຮັບປະກັນບົດບາດຄວາມສຳຄັນດັ່ງກ່າວ, ໃນຊຸມປີຕໍ່ໜ້ານີ້ມີຄວາມຈຳເປັນຕ້ອງສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງໃນທຸກຂອດຂອງວຽກງານພະນັກງານເພື່ອຍົກລະດັບຄວາມຮູ້, ຄວາມສາມາດໃຫ້ພະນັກງານມີຄວາມສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງເວົ້າລວມ, ເວົ້າສະເພາະແມ່ນການພັດທະນາໃນຂົງເຂດວຽກງານພົວພັນຕ່າງປະເທດຂອງພັກ, ພັກໄດ້ເອົາໃຈໃສ່ກໍ່ສ້າງ ແລະ ບຳລຸງພະນັກງານເປັນລະບົບຕໍ່ເນື່ອງ, ສ້າງພະນັກງານໃຫ້ມີຄວາມຮູ້ທາງດ້ານທິດສະດີການເມືອງ-ການປົກຄອງ ແລະວິຊາສະເພາະ (ວຽກງານການຕ່າງປະເທດຂອງພັກ) ນັບມື້ຫຼາຍຂຶ້ນ.

ຄະນະພົວພັນຕ່າງປະເທດສູນກາງພັກ ແມ່ນອົງການຈັດຕັ້ງທາງການເມືອງ ທີ່ຂຶ້ນກັບສູນກາງພັກໂດຍກົງ ມີຖານະທຽບເທົ່າກັບອົງການທຽບເທົ່າກະຊວງຂອງລັດຖະບານ ຕາມມະຕິຕົກລົງຂອງກົມການເມືອງສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະພົວພັນຕ່າງປະເທດສູນກາງພັກ ສະບັບເລກທີ 310/ຄລສພ, ລົງວັນທີ 23 ກຸມພາ 2023. ມີພາລະບົດບາດ ເປັນເສນາທິການ ໂດຍກົງໃຫ້ແກ່ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ໃນການຄົ້ນຄວ້າແຜນຍຸດທະສາດ ແລະ ແນວທາງນະໂຍບາຍການພົວພັນຕ່າງປະເທດຂອງພັກ; ຕາງໜ້າສູນກາງພັກໃນການ

ພົວພັນ-ຮ່ວມມືກັບພັກການເມືອງຂອງຕ່າງປະເທດໃນຂອບເຂດສອງຝ່າຍ ແລະ ຫຼາຍຝ່າຍ ຕາມການມອບໝາຍຂອງກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ພ້ອມທັງເປັນເຈົ້າການຊີ້ນໍາ, ຄຸ້ມຄອງການເຄື່ອນໄຫວວຽກງານພົວພັນຕ່າງປະເທດຂອງອົງການຈັດຕັ້ງພັກ ແລະ ການທູດປະຊາຊົນ ໃຫ້ມີຄວາມເປັນເອກະພາບຜ່ານປະຕູດຽວ.

ຕະຫຼອດໄລຍະຜ່ານມາຄະນະພັກ, ຄະນະນໍາຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ພະຍາຍາມຊອກຫາທຸກຊ່ອງທາງ, ຊຸກຍູ້ເງື່ອນໄຂ ເພື່ອສ້າງພະນັກງານຂອງຕົນໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ ແລະ ຄວາມຮູ້, ຄວາມສາມາດ ເພື່ອສ້າງພະນັກງານໃຫ້ມີຄຸນນະພາບດີຂຶ້ນເທື່ອລະກ້າວ ໂດຍໄດ້ຖືເອົາວຽກງານການເມືອງ-ແນວຄິດເປັນກົກ, ເປັນວຽກບູລິມາສິດ ສໍາຄັນອັນດັບທໍາອິດໃນການເຄື່ອນໄຫວນໍາພາ-ຊີ້ນໍາ ແລະ ສອດທ້ອຍໄປກັບວຽກງານ ສະແດງອອກໄດ້ຈັດຕັ້ງເຊື່ອມຊຶມມະຕິ, ຄໍາສັ່ງ, ນິຕິກໍາ ແລະ ເອກະສານຕ່າງໆເປັນປົກກະຕິ, ຕໍ່ເນື່ອງເຮັດໃຫ້ພະນັກງານ-ລັດຖະກອນມີສະຕິຕໍ່ການຈັດຕັ້ງສູງຂຶ້ນ, ການບໍາລຸງ-ກໍ່ສ້າງພະນັກງານ ແມ່ນອີງໃສ່ແຜນກໍານົດພະນັກງານ, ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຕົວຈິງ ໂດຍມີການຄັດເລືອກເອົາຜູ້ທີ່ພົ້ນເດັ່ນໃນຂະບວນການ ແລະ ຖືກຕ້ອງຕາມມາດຕະຖານເງື່ອນໄຂໄປກໍ່ສ້າງ-ບໍາລຸງໂດຍສະເພາະແມ່ນພະນັກງານ ຜູ້ທີ່ມີຄຸນທາດການເມືອງທີ່ໜັກແໜ້ນ, ຄຸນສົມບັດສິນທໍາປະຕິວັດ, ຫ້າວຫັນຕໍ່ໜ້າທີ່ວຽກງານໄປຍົກລະດັບ. ສະແດງອອກໄດ້ສົ່ງພະນັກງານໄປປະຈໍາການຢູ່ຕ່າງປະເທດ 5 ສະຫາຍ, ຍິງ 2 ສະຫາຍ, ສົ່ງພະນັກງານໄປຍົກລະດັບພາສາຕ່າງປະເທດໄລຍະສັ້ນຢູ່ວິທະຍາໄລວຽງຈັນ 19 ສະຫາຍ, ສະຖາບັນການຕ່າງປະເທດ 21 ສະຫາຍ, ຝຶກອົບຮົມຢູ່ພາຍໃນ 69 ສະຫາຍ; ຝຶກອົບຮົມຢູ່ຕ່າງປະເທດ 25 ສະຫາຍ; ສົ່ງພະນັກງານໄປຍົກລະດັບໄລຍະຍາວ (ປະລິນຍາໂທ) ຢູ່ພາຍໃນ 1 ສະຫາຍ ແລະ ຕ່າງປະເທດ 2 ສະຫາຍ. ປະຈຸບັນຄະນະພົວພັນຕ່າງປະເທດສູນກາງພັກ ມີພະນັກງານທັງໝົດ 152 ສະຫາຍ, ຍິງ 53 ສະຫາຍ, ພະນັກງານມີໜ້າຕົວຈິງ 129 ສະຫາຍ, ຍິງ 42 ສະຫາຍ. ການຄຸ້ມຄອງພະນັກງານ-ລັດຖະກອນ ໄດ້ປະຕິບັດຕາມລະບຽບ, ກົດໝາຍລັດຖະກອນ ມີການປະເມີນຜົນການປະຕິບັດວຽກງານຂອງພະນັກງານ. ຄຽງຄູ່ກັບຜົນງານການກໍ່ສ້າງ-ບໍາລຸງພະນັກງານທີ່ກ່າວມາຂ້າງເທິງນັ້ນ, ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ເຫັນວ່າການກໍ່ສ້າງ ແລະ ບໍາລຸງພະນັກງານ ຢູ່ຄະນະພົວພັນຕ່າງປະເທດສູນກາງພັກ ຍັງມີບາງດ້ານທີ່ຈະຕ້ອງໄດ້ປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຕົວຈິງເຊັ່ນ:

1). ການຂຶ້ນແຜນການກໍ່ສ້າງ ແລະ ບໍາລຸງພະນັກງານຍັງຊັກຊ້າ ແລະ ບໍ່ທັນລະອຽດຈະແຈ້ງ ໂດຍສະເພາະແມ່ນພະນັກງານ ແປພາສາຕ່າງປະເທດການກໍ່ສ້າງ ແລະ ບໍາລຸງເປົ້າໝາຍຍັງບໍ່ຕິດພັນກັບການນໍາໃຊ້ເຮັດໃຫ້ຂາດພະນັກງານແປພາສາຕ່າງປະເທດ, ຜູ້ທີ່ໄດ້ຮຽນຈົບມາແລ້ວຍັງຂາດການຕິດຕາມ, ຄຸ້ມຄອງ, ນໍາໃຊ້ ຈຶ່ງເກີດມີສະພາບພະນັກງານເຫຼືອບໍ່ພໍຢູ່ບາງຂົງເຂດ.

2). ການຄັດເລືອກເປົ້າໝາຍເພື່ອໄປກໍ່ສ້າງ ແລະ ບໍາລຸງຍົກລະດັບຍັງບໍ່ທັນເລິກເຊິ່ງ, ຂາດການເລືອກເຟັ້ນຢ່າງພາວະວິໄສ ຈຶ່ງບໍ່ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງໜ້າທີ່ການເມືອງຂອງພັກແຕ່ລະໄລຍະ.

3).ການກໍ່ສ້າງ ແລະ ບໍາລຸງພະນັກງານ ບາງໄລຍະ, ບາງດ້ານບໍ່ຕິດພັນກັບການຂະຫຍາຍຕົວຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ຈຶ່ງເກີດມີ

ຄວາມຫຍຸ້ງຍາກໃນຫຼາຍດ້ານເຊັ່ນ: ການຂຶ້ນແຜນ, ການຈັດວາງ, ການບັນຈຸ ແລະ ການນຳໃຊ້ພະນັກງານ ຍັງບໍ່ທັນແທດເໝາະ ແລະ ຕອບສະໜອງກັບສະພາບຄວາມເປັນຈິງປະຈຸບັນ. ນອກນັ້ນ, ການຈັດຕັ້ງແຕ່ລະຂັ້ນເຖິງແມ່ນວ່າໄດ້ຮັບການປັບປຸງສຳເລັດເປັນສ່ວນໃຫຍ່ກໍ່ຕາມ ແຕ່ການເຄື່ອນໄຫວນຳພາບາງຂົງເຂດວຽກງານບໍ່ທັນດີເປັນຕົ້ນແມ່ນບໍ່ທັນເຄື່ອນໄຫວນຳພາ-ຊີ້ນຳຕາມພາລະບົດບາດ,ສິດ ແລະ ໜ້າທີ່ຂອງຕົນ.

4). ພະນັກງານທີ່ໄດ້ຮັບການກໍ່ສ້າງ ແລະ ບຳລຸງຍົກລະດັບດ້ານວິຊາສະເພາະແມ່ນມີຫຼາຍ, ແຕ່ຄຸນນະພາບບໍ່ທັນສູງ, ຢູ່ບາງສາຂາວິຊາສະເພາະບໍ່ທັນໄດ້ຮັບການບຳລຸງເປັນລະບົບຕໍ່ເນື່ອງ ແລະ ກໍ່ສ້າງຢ່າງຕັ້ງໜ້າ.

ເນື່ອງຈາກວ່າວຽກງານພະນັກງານເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ທັງມີຄວາມຈຳເປັນຮີບດ່ວນ ແລະ ມີຄວາມໝາຍຕັດສິນ ເຖິງຜົນສຳເລັດໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ-ລັດວາງອອກ. ສະນັ້ນ, ອົງຄະນະພັກຄະນະພົວພັນຕ່າງປະເທດສູນກາງພັກ ຕໍ່ກັບວຽກງານກໍ່ສ້າງ ແລະ ບຳລຸງພະນັກງານ ຄວນຖືເປັນວຽກງານຕົ້ນຕໍ ແລະ ເຮັດຢ່າງເນື່ອງນິດລຽນຕິດ ເພື່ອຮອງຮັບກັບການພັດທະນາໃນໄລຍະໃໝ່ໂດຍສຸມໃສ່ບາງວຽກສຳຄັນດັ່ງນີ້:

ໜຶ່ງ, ເອົາໃຈໃສ່ກໍ່ສ້າງ ແລະ ບຳລຸງພະນັກງານພາຍໃນຄະນະພົວພັນຕ່າງປະເທດສູນກາງພັກໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ ມີຄວາມຮູ້, ຄວາມສາມາດທາງດ້ານທິດສະດີມາກ-ເລນິນໃນລະດັບທີ່ແນ່ນອນມີແຜນການ, ໂຄງການ ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນສະເພາະໜ້າ ແລະ ຍາວນານ, ການບຳລຸງກໍ່ສ້າງພະນັກງານ ຕ້ອງດຳເນີນໄປ ພ້ອມກັບວຽກງານພົວພັນຕ່າງປະເທດ, ຕ້ອງເອົາໃຈໃສ່ສ້າງພະນັກງານເພດຍິງ, ຊົນເຜົ່າໃຫ້ມີຄວາມດຸ່ນດ່ຽງກັນ.

ສອງ, ພາກສ່ວນທີ່ເຮັດໜ້າທີ່ເປັນເສນາທິການໃຫ້ຄະນະພັກຂັ້ນເທິງຕ້ອງເປັນເຈົ້າການໃນການຂຶ້ນແຜນກຳນົດຕຳແໜ່ງງານໃນແຕ່ລະປີ ໃຫ້ສອດຄ່ອງ, ລະອຽດຈະແຈ້ງ ເພື່ອສະເໜີໃນການກຳນົດເປົ້າໝາຍສ້າງເປັນພະນັກງານສືບທອດປ່ຽນແທນໃນອະນາຄົດ ແລະ ຄວນມີການຕິດຕາມ, ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງພະນັກງານເປັນແຕ່ລະໄລຍະ.

ສາມ, ການຄັດເລືອກເອົາບັນດາເປົ້າໝາຍ ເພື່ອໄປກໍ່ສ້າງ ແລະ ບຳລຸງຄວນເບິ່ງແບບວິທີສັດຈະວິພາກ ແລະ ພາວະວິໄສ, ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ມີການປຶກສາຫາລືເປັນເອກະພາບໃນໝູ່ຄະນະ. ພ້ອມກັນນັ້ນ, ອີງໃສ່ຄວາມຮຽກຮ້ອງຕ້ອງການອັນຈຳເປັນ ແລະ ຮີບດ່ວນຂອງວຽກງານຕົວຈິງ ຄະນະພັກທຸກຂັ້ນຕ້ອງຖືເປັນຄວາມຮັບຜິດຊອບໂດຍກົງໃນການກຳນົດເປົ້າໝາຍການກໍ່ສ້າງ ແລະບຳລຸງພະນັກງານ.

ສີ່, ຄະນະພັກຄວນເອົາໃຈໃສ່ນຳພາອົງການຈັດຕັ້ງທີ່ເປັນເສນາທິການທີ່ເຮັດວຽກງານພະນັກງານໃນການຄົ້ນຄວ້າ, ເລືອກເຟັ້ນພະນັກງານຜູ້ທີ່ຈະໄປຍົກລະດັບຄວາມຮູ້ບົນພື້ນຖານ ຕິດພັນກັບແຜນກຳນົດພະນັກງານ ແລະ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ, ເລືອກເຟັ້ນໃຫ້ໄດ້ຜູ້ທີ່ດີ, ມີຄຸນທາດການເມືອງໜັກແໜ້ນ, ມີອະນາຄົດ ເພື່ອສ້າງໃຫ້ເປັນພະນັກງານສືບທອດປ່ຽນແທນໃນຕໍ່ໜ້າ; ພ້ອມກັນນັ້ນ, ສຸມໃສ່ແຜນການກຳນົດພະນັກງານ ປະເມີນຄືນຢ່າງລະອຽດ, ຊັດເຈນ ໂດຍເລີ່ມຈາກໜ້າທີ່ການເມືອງ ແລະ ຄວາມຮຽກຮ້ອງຕ້ອງການຂອງຂະແໜງການທີ່ຂາດແຄນ, ຄວນມີເປົ້າໝາຍສ້າງ ເພື່ອປະກອບເຂົ້າໃນຕຳແໜ່ງງານໃດໜຶ່ງ, ຫຼີກເວັ້ນສະພາບທີ່ວ່າ: ສ້າງແລ້ວບໍ່ນຳໃຊ້

ເຂົາເຈົ້າເຂົ້າໃນວຽກງານ ອັນເປັນສາເຫດພາໃຫ້ເກີດມີພະນັກງານເຫຼືອບໍ່ພໍ ແລະ ຂາດກໍາລັງໃຈໃນການສູ້ຊົນບຸກບືນຕໍ່ໜ້າທີ່ວຽກງານ ແລະ ມີແນວຄິດປຽບທຽບຊົ່ງຊາເຊິ່ງກັນ ແລະ ກັນ.

ສັງລວມແລ້ວ, ການກໍ່ສ້າງ ແລະ ບໍາລຸງພະນັກງານແມ່ນມີຄວາມສໍາຄັນທີ່ສຸດ, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດມີຜົນສໍາເລັດໃນຫຼາຍດ້ານ, ຄຽງຄູ່ກັນນັ້ນ, ກໍ່ມີຫຼາຍບັນຫາທີ່ຕັ້ງຂຶ້ນ ເຊິ່ງຄະນະພັກ-ຄະນະນໍາຂອງຄະນະພົວພັນຕ່າງປະເທດສູນກາງພັກ ຈະຕ້ອງໄດ້ເພີ່ມທະວີການນໍາພາ-ຊີ້ນໍາແກ້ໄຂຢ່າງຕັ້ງໜ້າ ໃນນີ້ບັນຫາສໍາຄັນຄະນະພັກ ແຕ່ລະຂັ້ນຕ້ອງຫັນວຽກງານກໍ່ສ້າງ-ບໍາລຸງພະນັກງານໄປສູ່ການຄຸ້ມຄອງຕາມລະບົບທີ່ເປັນເອກະພາບລວມສູນ, ຄຸ້ມຄອງວຽກໃດ ຕ້ອງຄຸ້ມຄອງຄົນໄປພ້ອມ ແລະ ປະຕິບັດນະໂຍບາຍ (ທາງດ້ານວັດຖຸ ແລະ ຈິດໃຈ) ຕໍ່ພະນັກງານ-ລັດຖະກອນຢ່າງຖືກຕ້ອງ ແລະ ເໝາະສົມ ຈຶ່ງຈະສ້າງໄດ້ພະນັກງານທີ່ມີຄວາມຮູ້ທາງດ້ານວິຊາສະເພາະ, ມີຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດທີ່ໜັກແໜ້ນ, ມີຈັນຍາບັນຕໍ່ອາຊີບຂອງຕົນຈຶ່ງຈະສາມາດປະຕິບັດໜ້າທີ່ວຽກງານພົວພັນຕ່າງປະເທດຂອງພັກ ສໍາເລັດຕາມການມອບໝາຍຂອງປະເທດຊາດຢ່າງມີຄຸນນະພາບ...ຯ

ທວນຄືນເສັ້ນທາງແຫ່ງການກໍ່ສ້າງພັກ...

ຕໍ່ຈາກໜ້າ 3

ຊິກພັກຜູ້ໜຶ່ງມີຄວາມພາກພູມໃຈ ແລະ ເຫັນແຈ້ງວ່າ: ພັກປະຊາຊົນ ປະຕິວັດລາວ ມີຄວາມເຕີບໃຫຍ່ຂະຫຍາຍຕົວທັງດ້ານຈໍານວນ ແລະ ຄຸນນະພາບ ຢ່າງເປັນລະບົບ, ຕໍ່ເນື່ອງ, ມີອຸດົມຄະຕິ, ມີນໍ້າໃຈບໍລິສຸດ, ສັດຊື່, ມີຄວາມສາມັກຄີເປັນປຶກແຜ່ນ ຮັບໃຊ້ປະເທດຊາດ-ຮັບໃຊ້ປະຊາຊົນຢ່າງສະເໝີຕົ້ນສະເໝີປາຍ. ພັກເຮົາມີຄວາມປີຊາສາມາດສະຫຼາດສ່ອງໃສບົນພື້ນຖານຫຼັກມູນທິດສະດີປະຕິວັດຂອງລັດທິມາກ-ເລນິນ, ບົດຮຽນຂອງປະເທດເພື່ອນມິດ ແລະ ດ້ວຍຄວາມເປັນເຈົ້າການຂອງຕົນເອງທີ່ມີຫົວຄິດປະດິດສ້າງ. ສິ່ງເຫຼົ່ານັ້ນ ແມ່ນວິລະກໍາອັນຍິ່ງໃຫຍ່ ທັງເປັນມູນເຊື້ອ ແລະ ບົດຮຽນອັນລໍ້າຄ່າຢ່າງມະຫັດສະຈັນທີ່ສຸດຂອງພັກ-ຂອງຊາດລາວເຮົາ. ເພື່ອສືບທອດມູນເຊື້ອປະຕິວັດອັນດີງາມ ຜູ້ຂຽນຂໍຝາກຄໍາຄິດເຫັນມາຍັງຖັນແຖວພະນັກງານ-ສະມາຊິກພັກທຸກສະຫາຍວ່າ: ພາລະກິດປະຕິວັດຍິ່ງເຕີບໃຫຍ່ຍິ່ງມີຄວາມຫຍຸ້ງຍາກສັບສົນ ແລະ ນັບມື້ນັບມີຄວາມຮຽກຮ້ອງຕ້ອງການໃນທຸກດ້ານສູງຂຶ້ນ, ສະນັ້ນ ຍິ່ງມີຄວາມຈໍາເປັນໃຫ້ພວກເຮົາຕ້ອງເພີ່ມທະວີຍົກລະດັບຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທໍາປະຕິວັດໃຫ້ສູງຂຶ້ນ, ແຕ່ຢາກເຮັດໄດ້ແນວນັ້ນ ກ່ອນອື່ນໝົດຕ້ອງເອົາໃຈໃສ່ເພີ່ມທະວີສະຕິຫຼັກໝັ້ນທັດສະນະ ແລະ ນໍ້າໃຈຕໍ່ສູ້ຊົນຊັ້ນໃນໄລຍະໃໝ່ຂອງການປະຕິວັດ ໃຫ້ຖືກຕ້ອງສອດຄ່ອງ ແລະ ແທດຕົວຈິງ; ບັນຫາສໍາຄັນໜຶ່ງອີກ ຕໍ່ກັບພະນັກງານສືບທອດ ເປັນຂອດໜຶ່ງທີ່ສໍາຄັນຕັດສິນຊາຕາກໍາຂອງປະເທດຊາດ, ການກໍ່ສ້າງຕ້ອງຢຶດໝັ້ນທັດສະນະຊົນຊັ້ນຂອງພັກ, ສ້າງຢ່າງເປັນລະບົບຕໍ່ເນື່ອງ ແລະ ເປັນປົກກະຕິໃນແຕ່ລະຕໍາແໜ່ງແຕ່ລະຂົງເຂດ, ຄວນສືບທອດຕໍາແໜ່ງໃດ, ວຽກງານໃດ, ຂົງເຂດໃດ ຖ້າສ້າງໄດ້, ສັບຊ້ອນຈັດວາງຖືກຈະມີວຽກດີມີຄຸນນະພາບ, ຄົນກໍ່ມີຄວາມພົ້ນເດັ່ນ ແຕ່ກົງກັນຂ້າມເມື່ອຈັດວາງບໍ່ຖືກຕ້ອງ, ບໍ່ສອດຄ່ອງ ຈະເຮັດເສຍເວລາ, ເສຍທັງວຽກ, ເສຍທັງຄົນ ຈຶ່ງກາຍເປັນຄໍາເວົ້າທີ່ວ່າ "ພະນັກງານເຫຼືອບໍ່ພໍ"...ຯ

ໜ່ວຍພັກກົມຈັດຕັ້ງ ແລະ ພະນັກງານ ກະຊວງພະລັງງານ ແລະ ບໍ່ແຮ່ ຖືເອົາການປັບປຸງກໍ່ສ້າງຕົນເອງ ເປັນປັດໄຈສຳຄັນ ໃນການປະຕິບັດໜ້າທີ່ການເມືອງຂອງຕົນ

ໂດຍ: ອຸດອນ ສັນນາລີ

ຮາກຖານໜ່ວຍພັກ ເປັນການຈັດຕັ້ງຂັ້ນລຸ່ມສຸດທີ່ສຳຄັນຂອງພັກ, ເປັນບ່ອນຕິດພັນກັບຮາກຖານປະຊາຊົນ, ເປັນບ່ອນເຜີຍແຜ່, ໂຄສະນາຊວນເຊື່ອ ແລະ ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ເປັນບ່ອນພົວພັນໂດຍກົງກັບມະຫາຊົນ, ຕິດພັນກັບການດຳລົງຊີວິດຂອງປະຊາຊົນ ແລະ ວຽກງານຕ່າງໆຂອງສຳນັກງານອົງການ, ເປັນໃຈກາງນຳພາເຕົ້າໂຮມຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ໃນໝູ່ມະຫາຊົນ, ເປັນບ່ອນໂຄສະນາຂະຫຍາຍພັກ, ເປັນບ່ອນສະມາຊິກພັກເຂົ້າຮ່ວມຊີວິດການເມືອງໃນແຕ່ລະເດືອນ ສິ່ງສຳຄັນແມ່ນບ່ອນນຳເອົາຄວາມມຸ່ງມາດປາຖະໜາຂອງປະຊາຊົນສ່ອງແສງ ໃຫ້ຄະນະພັກຂັ້ນເທິງ ແລະ ນຳເອົາແນວທາງອັນຖືກຕ້ອງຂອງພັກໄປຈັດຕັ້ງຜັນຂະຫຍາຍໃຫ້ປະກົດຜົນເປັນຈິງ.

ດ້ວຍບົດບາດດັ່ງກ່າວນັ້ນ, ການຈັດຕັ້ງຮາກຖານພັກ ຕ້ອງໄດ້ຈັດຕັ້ງປະຕິບັດພາລະບົດບາດຂອງຕົນພ້ອມດຽວກັນນັ້ນກໍ່ຕ້ອງໄດ້ປັບປຸງຕົນເອງຢ່າງແຂງແຮງ ໂດຍເລີ່ມຈາກການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແນໃສ່ຮັບປະກັນໃຫ້ພັກເຮົາສືບຕໍ່ຮັກສາໄດ້ບົດບາດ ແລະ ການເປັນແກນນຳໃນການນຳພາປະຕິບັດໜ້າທີ່ການເມືອງ ຈຶ່ງຮຽກຮ້ອງເຖິງຄວາມເປັນແບບຢ່າງຮອບດ້ານ ແລະ ຄວາມເປັນເຈົ້າການຂອງສະມາຊິກພັກ, ໜ່ວຍພັກ, ຮາກຖານພັກ ຕ້ອງເປັນກຳລັງແຮງສຳຄັນໃນການຝຶກຝົນຫຼໍ່ຫຼອມຕົນເອງເພື່ອເຮັດໃຫ້ບັນລຸຈຸດປະສົງແຜນການທີ່ວາງໄວ້, ໃນນັ້ນຕ້ອງຖືສຳຄັນຫຼັກການນຳພາຂອງພັກ, ການປັບປຸງບັນດາຈຸດອ່ອນຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ໃນການຈັດຕັ້ງປະຕິບັດແຜນການໃນໄລຍະຜ່ານມາເພື່ອກຳນົດທິດໃນການປັບປຸງແກ້ໄຂ ຖ້າເຮັດໄດ້ຄືແນວນັ້ນ, ເຊື່ອແນ່ວ່າ ບັນດາຄາດໝາຍສູ້ຊົນທີ່ໄດ້ກຳນົດໄວ້ນັ້ນຈະບັນລຸຕາມແຜນການທີ່ກຳນົດໄວ້.

ໜ່ວຍພັກກົມຈັດຕັ້ງ-ພະນັກງານ ແມ່ນໜ່ວຍພັກໜຶ່ງທີ່ຂຶ້ນກັບການຊີ້ນຳໂດຍກົງຂອງອົງຄະນະພັກກະຊວງພະລັງງານ ແລະ ບໍ່ແຮ່ ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງ ໃນການຄຸ້ມຄອງພັກ, ພະນັກງານ-ລັດຖະກອນ, ວຽກງານກົງຈັກການຈັດຕັ້ງ, ວຽກງານການກໍ່ສ້າງ ແລະ ປ້ອງກັນພັກ-ພະນັກງານ, ການປະຕິບັດນະໂຍບາຍຕ່າງໆຕໍ່ພະນັກງານ-ລັດຖະກອນ ແລະ ຄົ້ນຄວ້າຫັນເອົາແນວທາງ, ແຜນນະໂຍບາຍ, ທິດນຳ, ຫຼັກການຕ່າງໆຂອງພັກ-ລັດຖະບານ ກ່ຽວກັບວຽກງານຈັດຕັ້ງພັກ-ພະນັກງານ ແລະ ວຽກງານແນວຄິດທີ່ກຳນົດອອກໃນແຕ່ລະໄລຍະ ເພື່ອໃຫ້ສອດ

ຄ່ອງກັບຈຸດພິເສດຂອງຂະແໜງການ; ມີໜ້າທີ່ຄົ້ນຄວ້າຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ-ລັດຖະບານ, ແຜນການ, ແຜນງານຂອງກະຊວງໃຫ້ກາຍເປັນໂຄງການ ແລະ ແຜນວຽກລະອຽດຂອງກົມ; ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ບົດແນະນຳ ແລະ ເອກະສານຕ່າງໆຂອງພັກ, ລັດຖະບານ ທີ່ກ່ຽວຂ້ອງກັບວຽກງານຈັດຕັ້ງພັກ-ພະນັກງານ ແລະ ວຽກງານແນວຄິດໃນຂອບເຂດຄວາມຮັບຜິດຊອບ; ຂຶ້ນແຜນກຳນົດຕຳແໜ່ງງານ, ແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ຕີລາຄາຈັດປະເພດພະນັກງານ-ລັດຖະກອນ ຂອງຂະແໜງການພະລັງງານ ແລະ ບໍ່ແຮ່ ລວມທັງບັນດາລັດວິສາຫະກິດ, ປະສານສົມທົບກັບຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ພະແນກການສາຍຕັ້ງຂັ້ນທ້ອງຖິ່ນ ເພື່ອຄົ້ນຄວ້າການສອບເສັງຄັດເລືອກ, ການບັນຈຸລັດຖະກອນໃໝ່ໃສ່ຕຳແໜ່ງງານຕ່າງໆ ຂອງກະຊວງ ແລະ ພະແນກການສາຍຕັ້ງຂັ້ນທ້ອງຖິ່ນ ແລະ ອື່ນໆຕາມການຊີ້ນຳຂອງຂັ້ນເທິງ. ໜ່ວຍພັກໄດ້ຍົກສູງຄວາມຮັບຜິດຊອບຂອງຕົນໃນການສືບຕໍ່ເສີມຂະຫຍາຍມູນເຊື້ອອັນດີງາມ ແລະ ດ້ານດີ, ຜົນງານທີ່ໂດດເດັ່ນ, ເດັດດ່ຽວປັບປຸງ, ແກ້ໄຂຈຸດອ່ອນຂໍ້ຄົງຄ້າງ ແລະ ສິ່ງທ້າທາຍທົດສອບທີ່ແນໃສ່ເຊີດຊູບົດບາດຄວາມສາມາດນຳພາຂອງໜ່ວຍພັກ ແລະ ຍົກສູງຄວາມເປັນແບບຢ່າງນຳໜ້າຂອງຖັນແຖວສະມາຊິກພັກ ຮັບປະກັນໃຫ້ພັກເຮົາມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ.

ໂດຍໃນໄລຍະຜ່ານມາ ໜ່ວຍພັກໄດ້ຖືເອົາການກໍ່ສ້າງ, ປັບປຸງຕົນເອງຕາມ 5 ຫຼັກການ, 3 ທິດນຳຕິດພັນກັບພາລະບົດບາດເປັນເສນາທິການໃຫ້ແກ່ຄະນະພັກກະຊວງໃນວຽກງານກໍ່ສ້າງພັກ-ພະນັກງານເວົ້າລວມ, ເວົ້າສະເພາະແມ່ນປະຕິບັດຕາມຄຳສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ01/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຄຳແນະນຳເລກທີ 291/ຄຈສພ, ລົງວັນທີ 26 ເມສາ 2018 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ຂອງກົມການເມືອງສູນກາງພັກວ່າດ້ວຍສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ. ເວລາໃດກໍ່ໄດ້ເອົາໃຈໃສ່ສ້າງປັບປຸງຕົນເອງ ແລະ ຍົກສູງຄວາມຮັບຜິດຊອບຕົນເອງໃນການກໍ່ສ້າງ, ປັບປຸງພັກຢ່າງຕໍ່ເນື່ອງເປັນປົກກະຕິ, ຍົກສູງຄວາມຮັບຜິດຊອບການນຳຄະນະພັກ, ສະມາຊິກພັກ, ແບ່ງງານ, ແບ່ງຄວາມຮັບຜິດຊອບພາຍໃນໃນການຊີ້ນຳ-ນຳພາ ນັບແຕ່ປີ2020-2022 ແມ່ນໄດ້ຖືກຮັບຮອງ ແລະ ຢັ້ງຢືນເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ 03 ປີຕິດຕໍ່ກັນ ສະແດງອອກໃນແຕ່ລະດ້ານດັ່ງນີ້:

ດ້ານການເມືອງ-ແນວຄິດ: ຄະນະໜ່ວຍພັກໄດ້ເປັນເຈົ້າການໃນການສຶກສາອົບຮົມການເມືອງ-ແນວຄິດ ໂດຍການຊຸກຍູ້ພະນັກງານ-ສະມາຊິກພັກພາຍໃນຄວາມຮັບຜິດຊອບຂອງຕົນເຂົ້າຮ່ວມການຈັດຕັ້ງເຊື່ອມຊຶມແນວທາງ, ນະໂຍບາຍ, ນິຕິກຳ ແລະ ເອກະສານຕ່າງໆທີ່ກະຊວງຈັດຂຶ້ນ ເຮັດໃຫ້ສະມາຊິກພັກ-ພະນັກງານ ສາມາດກຳແໜ້ນ, ຮັບຮູ້, ເຂົ້າໃຈ ເຖິງແນວທາງອັນລວມຂອງພັກ-ລັດ ເປັນຕົ້ນແມ່ນມະຕິກອງປະຊຸມໃຫຍ່ຜູ້ແທນ ທົ່ວປະເທດ ຄັ້ງທີ XI ຂອງພັກ, ມະຕິ III ຂອງອົງຄະນະພັກກະຊວງ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ III ຂອງຕົນ ແລະ ວັນສຳຄັນຂອງພັກ, ຂອງຊາດຢ່າງເປັນປົກກະຕິ, ຕໍ່ເນື່ອງຜ່ານການຈັດຕັ້ງເຊື່ອມຊຶມສາມາດເວົ້າໄດ້ວ່າ ພະນັກງານ-ສະມາຊິກ

ພັກຍັງຮັກສາໄດ້ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີເຊື່ອໝັ້ນຕໍ່ການນຳພາຂອງພັກ, ເປັນເຈົ້າການໃນການປະຕິບັດໜ້າທີ່ການເມືອງທີ່ການຈັດຕັ້ງພັກ-ລັດມອບໝາຍໃຫ້ຢ່າງມີຜົນສຳເລັດ.

ດ້ານແນວຄິດ: ຄະນະໜ່ວຍພັກໄດ້ເອົາໃຈໃສ່ສຶກສາອົບຮົມສະມາຊິກພັກ, ພະນັກງານ-ລັດຖະກອນໂດຍຖືເອົາບັ້ນດຳເນີນຊີວິດການເມືອງຂອງໜ່ວຍພັກໃນແຕ່ລະເດືອນ, ຖືສຳຄັນ 3 ລັກສະນະຂອງການຮ່ວມຊີວິດພັກ ໂດຍສະເພາະແມ່ນການຕຳນິຕິຊົມຕົນເອງ, ຕິຊົມເຊິ່ງກັນ ແລະ ກັນ, ພ້ອມທັງກໍ່ສ້າງຊ່ວຍເຫຼືອເຊິ່ງກັນແລະກັນຢ່າງເປັນປົກກະຕິ.

ດ້ານການຈັດຕັ້ງ: ຄະນະໜ່ວຍພັກຍຶດໝັ້ນ ແລະ ປະຕິບັດຕາມ 5 ຫຼັກການ 3 ທິດນຳໃນການກໍ່ສ້າງ ແລະ ປັບປຸງພັກໂດຍໜ່ວຍພັກໄດ້ສຶກສາອົບຮົມໃຫ້ສະມາຊິກພັກ-ພະນັກງານ ເຄົາລົບການຈັດຕັ້ງ, ປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງເຂັ້ມງວດ, ເຂົ້າຮ່ວມຊີວິດການເມືອງປົກກະຕິສາມາດຮັບປະກັນໄດ້ 3 ລັກສະນະຄື: ລັກສະນະນຳພາ, ລັກສະນະສຶກສາອົບຮົມ ແລະ ລັກສະນະຕໍ່ສູ້ພາຍໃນໜ່ວຍພັກ, ເປັນເຈົ້າການເສຍເງິນສະຕິພັກເປັນປະຈຳທຸກເດືອນ; ພະນັກງານສະມາຊິກພັກຍົກສູງສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດຢ່າງເຂັ້ມງວດ, ເປັນແບບຢ່າງທີ່ດີໃນການເຄື່ອນໄຫວ, ດຳລົງຊີວິດດ້ວຍຄວາມປອດໃສ ບໍ່ໃຫ້ມີປະກົດການຫຍໍ້ທໍ້ຢູ່ພາຍໃນໜ່ວຍພັກ ແລະ ປະກົດການຫຍໍ້ທໍ້ສັງຄົມ; ພ້ອມດຽວກັນນັ້ນຄະນະໜ່ວຍພັກໄດ້ເອົາໃຈໃສ່ຄຸ້ມຄອງ, ຕີລາຄາຄຸນນະພາບຂອງສະມາຊິກພັກ ແລະ ໜ່ວຍພັກເປັນປົກກະຕິ; ເປັນເອກະພາບກັນໃນການປະຕິບັດນະໂຍບາຍຍ້ອງຍໍສະມາຊິກພັກ-ພະນັກງານທີ່ດີເດັ່ນ ໄປພ້ອມກັບການດຳເນີນມາດຕະການທາງດ້ານວິໄນ ຕໍ່ຜູ້ລະເມີດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດຢ່າງເຂັ້ມງວດ; ໃນການຮ່ວມຊີວິດແຕ່ລະຄັ້ງແມ່ນໄດ້ຍົກເອົາວຽກງານຂະຫຍາຍພັກຂຶ້ນມາປຶກສາຫາລືກັນໂດຍຖືເອົາຄຸນນະພາບເປັນກົກ, ບົນພື້ນຖານປະຕິບັດໃຫ້ຖືກຕ້ອງຕາມມາດຕະຖານ, ເງື່ອນໄຂ, ບາດກ້າວຂັ້ນຕອນຂອງການຂະຫຍາຍພັກທີ່ກຳນົດໄວ້ໃນກົດລະບຽບພັກຢ່າງເຂັ້ມງວດ. ປະຈຸບັນໜ່ວຍພັກມີຄະນະໜ່ວຍພັກ 03 ສະຫາຍ, ຍິງ 01 ສະຫາຍ; ມີສະມາຊິກພັກທັງໝົດ 20 ສະຫາຍ, ຍິງ 11 ສະຫາຍເປັນສະມາຊິກພັກສົມບູນ (ໄປຄົ້ນຄວ້າປະລິນຍາໂທຢູ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດ 02 ສະຫາຍ, ຍິງ 01 ສະຫາຍ; ໄປຄົ້ນຄວ້າປະລິນຍາໂທຢູ່ຕ່າງປະເທດ 02 ສະຫາຍ, ຍິງ 01 ສະຫາຍ); ມີພະນັກງານທັງໝົດ 24 ສະຫາຍ, ຍິງ 11 ສະຫາຍ; ດ້ານວິຊາສະເພາະປະກອບມີປະລິນຍາໂທຈຳນວນ 09 ສະຫາຍ, ຍິງ 04 ສະຫາຍ, ປະລິນຍາຕີຈຳນວນ 11 ສະຫາຍ, ຍິງ 05 ສະຫາຍ.

ດ້ານແບບແຜນການນຳພາ: ຄະນະໜ່ວຍພັກໄດ້ເອົາໃຈໃສ່ປັບປຸງແບບແຜນວິທີນຳພາ ແລະ ວິທີເຮັດວຽກໂດຍປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ບຸກຄົນຂຶ້ນກັບການຈັດຕັ້ງ, ມີແບ່ງວຽກໃຫ້ບຸກຄົນຮັບຜິດຊອບ, ມອບຄວາມຮັບຜິດຊອບໃຫ້ສະມາຊິກພັກແຕ່ລະພະແນກນຳພາ-ຊີ້ນຳ, ມີການວາງແຜນ, ສະຫຼຸບຕີລາຄາປະເມີນຜົນ ແລະ ປະຕິບັດລະບອບສ່ອງແສງລາຍງານໃຫ້ຂັ້ນເທິງເປັນປົກກະຕິ.

ດ້ານການນຳພາປະຕິບັດໜ້າທີ່ການເມືອງ: ຄະນະ

ໜ່ວຍພັກໄດ້ຍົກສູງຄວາມຮັບຜິດຊອບຂອງຕົນໃນການນຳພາ-ຊີ້ນຳສະມາຊິກພັກ-ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ເປັນເຈົ້າການໃນຊຸກຍູ້, ຕິດຕາມການປະຕິບັດໜ້າທີ່ການເມືອງ ສະແດງອອກສະມາຊິກພັກ-ພະນັກງານແມ່ນຍົກສູງສະຕິຕໍ່ການຈັດຕັ້ງ, ມີນ້ຳໃຈຮັກຊາດ, ເຄົາລົບກົດລະບຽບພັກ, ກົດໝາຍຂອງລັດ; ຮັກສາໄດ້ບົດບາດ, ຈັນຍາບັນ, ຈັນຍາທຳຂອງພະນັກງານຈັດຕັ້ງໄດ້ເປັນຢ່າງດີ, ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຫົວຄິດປະດິດສ້າງ, ຫ້າວຫັນຕັ້ງໜ້າຈັດຕັ້ງປະຕິບັດໜ້າທີ່ການເມືອງດ້ວຍຄວາມຮັບຜິດຊອບ.

ຄຽງຄູ່ກັບຜົນງານ ແລະ ຜົນສຳເລັດທີ່ຍາດມາໄດ້ຂອງໜ່ວຍພັກກົມຈັດຕັ້ງ ແລະ ພະນັກງານ, ກະຊວງພະລັງງານ ແລະ ບໍ່ແຮ່ ທີ່ກ່າວມານັ້ນ, ກໍ່ຍັງມີບາງຂໍ້ຄົງຄ້າງທີ່ຈະຕ້ອງສືບຕໍ່ປັບປຸງແກ້ໄຂເປັນຕົ້ນ:

1). ສະມາຊິກພັກຈຳນວນໜຶ່ງ ຍັງບໍ່ໄດ້ເອົາໃຈໃສ່ຕັ້ງໜ້າເຊື່ອມຊຶມແນວທາງ, ແຜນນະໂຍບາຍ ແລະ ນິຕິກຳຕ່າງໆທີ່ຕິດພັນກັບຄວາມຮັບຜິດຊອບຂອງຕົນ ສະແດງອອກໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງບາງດ້ານຍັງບໍ່ທັນເຮັດໄດ້ດີ, ຄວາມຮັບຮູ້, ເຂົ້າໃຈຄວາມຮັບຜິດຊອບບໍ່ທັນສູງ, ບາງຄັ້ງຊັກຊ້າ, ແກ່ຍາວບໍ່ທັນຕາມກຳນົດເວລາ;

2). ສະມາຊິກພັກພາຍໃນໜ່ວຍພັກໄດ້ມີຄວາມຮັບຮູ້, ເຂົ້າໃຈຕໍ່ແນວທາງລວມ ແລະ ບາງສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມ, ກົງກັນຂ້າມຍັງມີສະມາຊິກພັກຈຳນວນໜຶ່ງມີແນວຄິດທໍ້ຖອຍ, ບໍ່ທັນເປັນເຈົ້າການໃນການຊອກຮູ້ຮໍ່າຮຽນ ແລະ ພັດທະນາຕົນເອງ, ມີແນວຄິດຈົງຈຽມບໍ່ກ້າຕຳນິສິ່ງຂ່າວໝູ່ເພື່ອນ;

3). ດ້ານການຈັດຕັ້ງເຖິງວ່າຈະມີຄວາມພະຍາຍາມໃນການປັບປຸງ, ບັນຈຸ, ສັບຊ້ອນພະນັກງານ-ສະມາຊິກພັກເຂົ້າຕຳແໜ່ງງານຂັ້ນຕ່າງໆໃຫ້ມີຄວາມຖືກຕ້ອງ, ສອດຄ່ອງກັບສະພາບເງື່ອນໄຂຕົວຈິງແລ້ວກໍ່ຕາມແຕ່ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການໃນສະເພາະໜ້າ ເຫັນວ່າຍັງບໍ່ທັນພຽງພໍກັບຄວາມຕ້ອງການຂອງໜ້າທີ່ວຽກງານຕົວຈິງ;

4). ການຮ່ວມຊີວິດພັກພາຍໃນໜ່ວຍພັກບາງຄັ້ງຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ຍັງບໍ່ທັນຮັບປະກັນໄດ້ 3 ລັກສະນະ ໂດຍສະເພາະ ແມ່ນຄວາມກ້າຫານໃນການຕິຊົມຕົນເອງ, ຕິຊົມໝູ່ເພື່ອນ ແລະ ບໍ່ທັນເປັນເຈົ້າການໃນຊ່ວຍເຫຼືອກໍ່ສ້າງເຊິ່ງກັນ ແລະ ກັນຢ່າງຈິງຈັງຂອງສະມາຊິກພັກ-ພະນັກງານບາງສະຫາຍຍັງມີລັກສະນະເກງອົກເກງໃຈກັນ ເຮັດການຫັນປ່ຽນພາຍໃນບໍ່ທັນເຂັ້ມແຂງເທົ່າທີ່ຄວນ; ແບບແຜນວິທີນຳພາ, ແບບແຜນວິທີເຮັດວຽກຂອງສະມາຊິກພັກບາງສະຫາຍ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນສະແດງອອກການປະຕິບັດໜ້າທີ່ວຽກງານຍັງມີລັກສະນະລໍຖ້າແຕ່ຄຳສັ່ງ, ຂາດການຄົ້ນຄວ້າ ແລະ ບໍ່ທັນມີຫົວຄິດປະດິດສ້າງອັນໃໝ່ໃນການພັດທະນາ, ຖືເບົາຕໍ່ການສ່ອງແສງລາຍງານ.

ເພື່ອສືບຕໍ່ຮັກສາມູນເຊື້ອ ແລະ ເສີມຂະຫຍາຍຜົນສຳເລັດກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຮັບປະກັນເຮັດໃຫ້ບັນດາຂໍ້ຄົງຄ້າງໄດ້ຮັບການແກ້ໄຂຢ່າງຂາດຕົວ ຄະນະໜ່ວຍພັກ, ສະມາຊິກພັກແຕ່ລະສະຫາຍຂອງໜ່ວຍພັກກົມຈັດຕັ້ງ ແລະ ພະນັກງານ, ກະຊວງພະລັງງານ ແລະ ບໍ່ແຮ່ ຕ້ອງໄດ້ຍົກສູງຄວາມເປັນເຈົ້າການປັບບາງເນື້ອໃນດັ່ງລຸ່ມນີ້:

ໜຶ່ງ. ຄະນະໜ່ວຍພັກ, ສະມາຊິກພັກທຸກສະຫາຍຕ້ອງເພີ່ມທະວີຄວາມເປັນແບບຢ່າງນຳໜ້າຂອງ

ຕົນ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ມະຫາຊົນ, ສ້າງໃຫ້ໄດ້ແນວຄິດ ແລະ ການກະທຳທີ່ດີ, ເຊີດຊູນ້ຳໃຈປະຕິວັດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຕັ້ງໜ້າເສີມຂະຫຍາຍຄວາມສາມັກຄີເປັນເອກະພາບພາຍໃນໜ່ວຍພັກ, ຕ້ານແນວຄິດຫຼາຍພັກ, ຫຼາຍເຄົ້າ, ກຸ່ມກ້ອນ, ເດັດຂາດຕ້ານພະຍາດອາດຍາສິດ, ສວຍໃຊ້ໜ້າທີ່ຕຳແໜ່ງ, ສໍ້ລາດບັງຫຼວງ ແລະ ອື່ນໆ;

ສອງ. ຄະນະໜ່ວຍພັກ ຕ້ອງເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ສ້າງເງື່ອນໄຂໃຫ້ພະນັກງານ-ສະມາຊິກພັກຂອງຕົນ ໄດ້ຮັບການຍົກລະດັບຄວາມຮູ້ຄວາມສາມາດທາງດ້ານທິດສະດີການເມືອງ, ຊຸກຍູ້ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນເປັນເຈົ້າການເຂົ້າຮ່ວມເຊື່ອມຊຶມແນວທາງ, ແຜນນະໂຍບາຍ ແລະ ນິຕິກຳຕ່າງໆທີ່ການຈັດຕັ້ງຈັດຂຶ້ນເປັນປົກກະຕິ, ຕໍ່ເນື່ອງ ເພື່ອເຮັດໃຫ້ເຂົາເຈົ້າຮັບຮູ້, ເຂົ້າໃຈຕໍ່ແນວທາງ, ແຜນນະໂຍບາຍຂອງພັກ ແລະ ຄວາມຮັບຜິດຊອບໜ້າທີ່ການເມືອງຂອງສະມາຊິກພັກ-ພັກນັກງານ.

ສາມ. ຄະນະໜ່ວຍພັກ ຕ້ອງຍົກສູງຄວາມຮັບຜິດຊອບຂອງຕົນໃນການປະຕິບັດໜ້າທີ່ການເມືອງສືບຕໍ່ນຳພາ-ຊີ້ນຳສະມາຊິກພັກ-ພະນັກງານພາຍໃນຄວາມຮັບຜິດຊອບຂອງຕົນປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ III ຂອງໜ່ວຍພັກ ໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ກຳນົດໄວ້; ພ້ອມກັນນັ້ນ ກໍ່ຕ້ອງເປັນແບບຢ່າງໃນສ້າງແຜນ ແລະ ປະຕິບັດແຜນການກໍ່ສ້າງໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄວາມຖືກຕ້ອງຕາມມາດຕະຖານເງື່ອນໄຂ, ບາດກ້າວ, ຂັ້ນຕອນທີ່ກຳນົດໄວ້ຄຳສັ່ງ, ບົດແນະນຳ ແລະ ກົດລະບຽບພັກໃຫ້ສຳເລັດຜົນ;

ສີ່. ຄະນະໜ່ວຍພັກເປັນເຈົ້າການຊີ້ນຳ-ນຳພາປັບປຸງກົງຈັກການຈັດຕັ້ງໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນຢ່າງເປັນປົກກະຕິ ເພື່ອຮັບປະກັນໃນການບໍລິຫານວຽກງານຕ່າງໆ ກຳແໜ້ນທ່າແຮງບົ່ມຊ້ອນ, ຄວາມຮູ້, ຄວາມສາມາດ, ພອນສະຫວັນຂອງສະມາຊິກພັກ-ພະນັກງານ ແຕ່ລະສະຫາຍ ເພື່ອສັບຊ້ອນໃສ່ໜ້າວຽກທີ່ເໝາະສົມ ພ້ອມກັນນັ້ນກໍ່ປັບປຸງແບບແຜນວິທີເຮັດວຽກໃຫ້ຄ່ອງແຄ້ວ, ເອົາໃຈໃສ່ປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງໃຫ້ກົມກຽວກັນ; ນຳພາອົງການຈັດຕັ້ງມະຫາຊົນເຄື່ອນໄຫວຕາມພາລະບົດບາດຂອງໃຜລາວ.

ສັງລວມແລ້ວ, ກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງໜ່ວຍພັກກົມຈັດຕັ້ງ ແລະ ພະນັກງານ ແມ່ນການສືບຕໍ່ເສີມຂະຫຍາຍມູນເຊື້ອອັນດີງາມຜ່ານມາ, ທັງເປັນການປັບປຸງ, ກໍ່ສ້າງ, ເຊີດຊູບົດບາດຄວາມສາມາດການນຳພາຂອງການຈັດຕັ້ງຮາກຖານພັກ, ເປັນແກນນຳໃນລະບົບການເມືອງ ເພື່ອຮັບປະກັນເຮັດວຽກງານຈັດຕັ້ງ ແລະ ພະນັກງານໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງກາຍເປັນເສນາທິການໃຫ້ແກ່ອົງຄະນະພັກ, ຄະນະນຳກະຊວງພະລັງງານ ແລະ ບໍ່ແຮ່ ໃນວຽກງານກໍ່ສ້າງພັກ-ພະນັກງານທີ່ມີຄຸນນະພາບ ຢ່າງແທ້ຈິງ...ຯ

ເພີ່ມທະວີວຽກງານຂະຫຍາຍພັກ ຢູ່ຮາກຖານພັກບ້ານ ເມືອງຂວາ ແຂວງຜົ້ງສາລີ

ໂດຍ: ບົວຊ້ອນ ອາລີ

ການຈັດຕັ້ງຮາກຖານ ແມ່ນພື້ນຖານຂອງພັກ ເປັນແກນນຳໃນລະບົບການເມືອງຢູ່ຮາກຖານ, ເປັນບ່ອນດຳເນີນຊີວິດຂອງສະມາຊິກພັກ, ເປັນບ່ອນສຶກສາອົບຮົມກໍ່ສ້າງ ແລະ ຮັບເອົາມະຫາຊົນກ້າວໜ້າ ເຂົ້າເປັນສະມາຊິກພັກ, ເປັນບ່ອນຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ກົດລະບຽບພັກ ແລະ ກົດໝາຍຂອງລັດໃຫ້ປະກົດຜົນເປັນຈິງ. ການຈັດຕັ້ງຮາກຖານພັກປະກອບດ້ວຍ: ຄະນະພັກຮາກຖານ, ໜ່ວຍພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ເຊິ່ງຈັດຕັ້ງຂຶ້ນຕາມບ້ານ, ຫົວໜ່ວຍບໍລິຫານ, ຫົວໜ່ວຍວິຊາການ, ໂຮງຮຽນ, ໂຮງໝໍ, ກົມກອງຕ່າງໆ.

ພັກເຮົາຍາມໃດ ກໍ່ຖືເອົາວຽກງານຂະຫຍາຍພັກເປັນວຽກງານທີ່ສຳຄັນ ແລະ ເປັນຍຸດທະສາດຂອງພັກ ໃນໄລຍະຜ່ານມາຄະນະພັກແຕ່ລະຂັ້ນໄດ້ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນ ແລະ ໄດ້ຊີ້ນຳ-ນຳພາຮາກຖານພັກທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຈັດຕັ້ງປະຕິບັດໜ້າທີ່ການເມືອງ ໃນນັ້ນ, ໜ້າທີ່ການເມືອງໜຶ່ງທີ່ສຳຄັນແມ່ນວຽກງານຂະຫຍາຍພັກຕິດພັນກັບການປັບປຸງພັກ, ຍົກສູງຄຸນນະພາບ ແລະ ຄວາມສາມາດນຳພາຂອງການຈັດຕັ້ງຮາກຖານພັກ ແລະ ສະມາຊິກພັກ; ຖືດຳເນີນວຽກງານຂະຫຍາຍພັກເປັນປົກກະຕິ, ຕໍ່ເນື່ອງ ເພື່ອແນໃສ່ສ້າງຖັນແຖວພະນັກງານ-ສະມາຊິກໃຫ້ເຕີບໃຫຍ່ ເຂັ້ມແຂງ, ເພີ່ມກຳລັງແຮງສູ້ຮົບຂອງພັກ ແລະ ເພີ່ມທະວີບົດບາດຂອງພັກ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ໂດຍເລີ່ມຈາກການເລືອກເຟັ້ນເອົາບັນດາບຸກຄົນຜູ້ທີ່ດີເດັ່ນ, ຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີຫົວຄິດປະດິດສ້າງ, ມີແບບແຜນດຳລົງຊີວິດທີ່ປອດໃສໃນຖັນແຖວຊົນຊັ້ນກຳມະກອນ, ຖັນແຖວນັກຮຽນ ຮູ້ປັນຍາຊົນປະຕິວັດ ແລະ ປະຊາຊົນຜູ້ອອກແຮງງານເຂົ້າເປັນສະມາຊິກພັກ.

ການເພີ່ມທະວີວຽກງານຂະຫຍາຍພັກຢູ່ຮາກຖານພັກບ້ານ ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງ, ເປັນປັດໄຈ ແລະ ເງື່ອນໄຂເຮັດໃຫ້ທ່ອພັກມີກຳລັງແຮງສູ້ຮົບທີ່ເຂັ້ມແຂງຢູ່ຮາກຖານບ້ານ, ຖ້າການຈັດຕັ້ງພັກໄດ້ຮັບການປັບປຸງເຂັ້ມແຂງ, ໜັກແໜ້ນທ່ອເຖິງ ແລະ ເຄື່ອນໄຫວ ເປັນປົກກະຕິ ແລະ ມີສະມາຊິກພັກທີ່ປອດໃສ, ເຂັ້ມແຂງ, ໜັກແໜ້ນມີຄຸນນະພາບກໍ່ຈະເຮັດໃຫ້ການຈັດຕັ້ງຮາກຖານບ້ານຢູ່ບ່ອນນັ້ນມີຄວາມໜັກແໜ້ນ ແລະ ນຳພາ-ຊີ້ນຳຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ໄປຕາມທິດທີ່ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໄດ້ໃຫ້ທັດສະນະໄວ້ວ່າ: "ເພື່ອຮັບປະກັນການຈັດຕັ້ງປະຕິບັດທິດທາງ ແລະ ບັນດາຄາດໝາຍຕົ້ນຕໍທີ່ພັກວາງອອກສຳລັບໃນຊຸມປີຕໍ່ໜ້າຕ້ອງສືບຕໍ່ປັບປຸງການຈັດຕັ້ງພັກແຕ່ລະຂັ້ນໃຫ້ມີຄວາມເຂັ້ມແຂງ, ເດັດດ່ຽວແກ້ໄຂບັນຫາທີ່ຄົງຄ້າງ ຢູ່ພາຍໃນພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນເປັນແກນນຳໃນລະບົບການເມືອງ; ໃນການຂະຫຍາຍສະມາຊິກພັກໃໝ່ ຕ້ອງຖືຄຸນນະພາບເປັນກົກ, ເດັດດ່ຽວແກ້ໄຂສະມາຊິກ

ພັກທີ່ເສຍທາດຂາດຄຸນ, ຂາດສະຕິຮັບຜິດຊອບຕໍ່ໜ້າທີ່ ແລະ ຂາດຄວາມເປັນແບບຢ່າງໃນການດໍາລົງຊີວິດ ຫຼື ມີການລະເມີດວິໄນຂອງພັກ ແລະ ກົດໝາຍຂອງລັດອອກຈາການຈັດຕັ້ງດ້ວຍວິທີການ ແລະ ມາດຕະການຕົວຈິງຢ່າງ ເດັດຂາດ, ເໝາະສົມ ແລະ ທັນການ".

ອົງຄະນະພັກເມືອງຂວາ ແຂວງຜົ້ງສາລີ ແມ່ນອົງຄະນະພັກໜຶ່ງທີ່ຖືສໍາຄັນ ແລະ ເອົາໃຈໃສ່ໃນວຽກງານຂະຫຍາຍພັກ ຢູ່ຂັ້ນຮາກຖານບ້ານ ໂດຍມະຕິກອງປະຊຸມໃຫຍ່ ຜູ້ແທນອົງຄະນະພັກເມືອງຂວາ ຄັ້ງທີ XV ໄດ້ວາງທິດທາງຈຸດສຸມໄວ້ວ່າ: ສືບຕໍ່ປັບປຸງການຈັດຕັ້ງພັກແຕ່ລະຂັ້ນໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນຮອດປີ 2024 ໃຫ້ໄດ້ 40, 81%, ເອົາໃຈໃສ່ສະກັດກັ້ນ, ແກ້ໄຂພະຍາດອາດຍາສິດ, ຜະເດັດການ, ກຸ່ມກ້ອນ, ເຊື້ອສາຍ, ຂາດລະບຽບວິໄນ, ບໍ່ນັບຖືການຈັດຕັ້ງ ແລະ ລະເມີດຕໍ່ກົດລະບຽບພັກ, ປະຕິບັດການເລືອກເຟັ້ນຜູ້ທີ່ມີຜົນສໍາເລັດໃນການປະຕິບັດໜ້າທີ່ວຽກງານ ແລະ ພົ້ນເດັ່ນຈາກຂະບວນການຕົວຈິງ ເພື່ອຂະຫຍາຍເຂົ້າພັກ; ປະຕິບັດຕາມກົນໄກເປີດກວ້າງ ໃຫ້ມະຫາຊົນມີສ່ວນຮ່ວມໃນການສ້າງພັກ ແລະ ຂະຫຍາຍພັກ, ສູ້ຊົນຂະຫຍາຍສະມາຊິກພັກໃໝ່ໃຫ້ເພີ່ມຂຶ້ນທັງປະລິມານ ແລະ ຄຸນນະ ພາບ.

ໄລຍະຜ່ານມາ, ອົງຄະນະພັກເມືອງຂວາ ເວລາໃດກໍ່ໄດ້ມີຄວາມພະຍາຍາມໃນການຊີ້ນໍາ-ນໍາພາຄະນະພັກແຕ່ລະຂັ້ນ ໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂອງຕົນ ໃຫ້ບັນລຸຜົນສໍາເລັດ ໂດຍສະເພາະແມ່ນວຽກງານຂະຫຍາຍພັກຢູ່ຮາກຖານພັກບ້ານ ໂດຍປະຕິບັດຕາມວິທີການ, ຂັ້ນຕອນ ແລະ ບາດກ້າວຈັດຕັ້ງປະຕິບັດການຂະຫຍາຍພັກ ຕາມກົດລະບຽບພັກປະຊາຊົນປະຕິວັດລາວ; ຄໍາສັ່ງກົມການເມືອງສູນກາງພັກເລກ ທີ 064/ກມສພ; ຄໍາແນະນໍາຂອງຄະນະຈັດຕັ້ງສູນກາງພັກເລກທີ 201/ຄຈສພ ແລະ ຂັ້ນແຂວງກໍ່ໄດ້ສ້າງນິຕິກໍາເພີ່ມເຕີມເປັນອັນລະອຽດ ເພື່ອໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ ໂດຍໄດ້ຈັດຕັ້ງປະຕິບັດ 2 ຂັ້ນຕອນຄື: ຂັ້ນຕອນທີ 1) ກະກຽມຢູ່ຂັ້ນເມືອງ (ສັງລວມເອກະສານທີ່ກ່ຽວຂ້ອງເພື່ອລົງຈັດຕັ້ງປະຕິບັດຢູ່ຂັ້ນບ້ານ) ແລະ ຂັ້ນຕອນທີ 2) ລົງຈັດຕັ້ງປະຕິບັດຢູ່ໜ່ວຍພັກບ້ານດ້ວຍບາດກ້າວ ແລະ ຂັ້ນຕອນດັ່ງນີ້:

ເລີ່ມຈາກກໍານົດເປົ້າໝາຍໂດຍແມ່ນຄະນະໜ່ວຍພັກເປັນຜູ້ສະເໜີເປົ້າໝາຍຂະຫຍາຍພັກໃນກອງປະຊຸມຮ່ວມຊີວິດປະຈໍາເດືອນຢູ່ໃນໜ່ວຍພັກຕົນ, ການເປີດຮຽນສະໜັບສະໜູນໂດຍມອບໃຫ້ເລຂາຄະນະພັກຮາກຖານກຸ່ມບ້ານເປັນຜູ້ສັງລວມ ແລະ ແຈ້ງໃຫ້ເລຂາໜ່ວຍພັກບ້ານແລ້ວນໍາສົ່ງເປົ້າໝາຍ ຂອງແຕ່ລະໜ່ວຍພັກ ທີ່ຂຶ້ນກັບກຸ່ມບ້ານຂອງຕົນເຂົ້າຮຽນສະໜັບສະໜູນ, ເຊິ່ງຈັດຂຶ້ນຢູ່ຈຸດດຽວ (ຢູ່ກຸ່ມ), ພ້ອມກັນນັ້ນໜ່ວຍພັກບ້ານໃດທີ່ມີເງື່ອນໄຂແມ່ນ ໜ່ວຍພັກບ້ານເປັນຜູ້ເປີດຮຽນ ຕາມການມອບສິດຂອງຄະນະພັກຂັ້ນເທິງ, ອອກມະຕິແຕ່ງຕັ້ງສະມາຊິກພັກສົມບູນຂອງແຕ່ລະໜ່ວຍພັກທີ່ມີເປົ້າໝາຍຮຽນສະໜັບສະໜູນ 2 ສະຫາຍ ຕິດຕາມມະຫາຊົນ ທີ່ມີຄວາມກ້າວໜ້າຕໍ່ 1 ຄົນ; ດໍາເນີນການຕິດຕາມໃນໄລຍະ 5 ເດືອນ ແລະ ໂດຍການຢັ້ງຢືນຈາກສະມາຊິກພັກສົມບູນ 02 ສະຫາຍຜູ້ຕິດຕາມຢູ່ແຕ່ລະໜ່ວຍພັກ ຈຶ່ງນໍາສົ່ງເປົ້າໝາຍຂອງຕົນສືບຕໍ່ຮຽນລະບຽບພັກຢູ່ຈຸດກຸ່ມບ້ານ ໂດຍແມ່ນສະຫາຍເລຂາຄະນະພັກຮາກຖານກຸ່ມເປັນຜູ້ເປີດຮຽນຕາມການມອບສິດຂອງຄະນະພັກຂັ້ນເທິງ, ຫຼັງຈາກນັ້ນ ສໍາເນົາເອກະສານນໍາສະເໜີເຖິງຄະນະຈັດຕັ້ງເມືອງ ເພື່ອອອກໃບຢັ້ງຢືນການຮຽນລະບຽບພັກ; ຕິດຕາມຈາກການຮຽນລະບຽບພັກ 4 ເດືອນແລ້ວ, ເລຂາຄະນະພັກຮາກຖານກຸ່ມບ້ານສົ່ງລາຍຊື່, ປະຫວັດ, ພ້ອມທັງສໍາເນົາເອກະສານໃຫ້ຄະນະຈັດ

ຕັ້ງເມືອງ ເພື່ອສະເໜີໃຫ້ຄະນະປະຈຳພັກເມືອງພິຈາລະນາ, ຄົ້ນຄວ້າອອກມະຕິຕົກລົງຮັບເຂົ້າເປັນສະມາຊິກພັກ;

ຫຼັງຈາກຮັບສະມາຊິກພັກແລ້ວມອບໃຫ້ຄະນະພັກເມືອງຜູ້ຊີ້ນຳບ້ານ ແລະ ຄະນະປະຈຳຜູ້ຊີ້ນຳກຸ່ມຊ່ວຍພາກສ່ວນທີ່ກ່ຽວໃນການຕິດຕາມຕື່ມ; ຜ່ານສະໄໝສຳຮອງຄົບ 12 ເດືອນແລ້ວ ໂດຍການຢັ້ງຢືນຜົນຂອງການຕິດຕາມຜູ້ກ່ຽວ ພ້ອມທັງສັງເກດຕີລາຄາເຖິງຄວາມກ້າວໜ້າ, ຄວາມບຸກບືນ ພັດທະນາຕົນເອງຈາກສ່ວນທີ່ຮັບຜິດຊອບໃນການຕິດຕາມແລ້ວ ສະຫາຍເລຂາຄະນະພັກຮາກຖານກຸ່ມບ້ານ ຈຶ່ງນຳສະເໜີໃຫ້ຄະນະຈັດຕັ້ງເມືອງ ເພື່ອເລື່ອນຈາກສະມາຊິກພັກສຳຮອງຂຶ້ນເປັນສະມາຊິກພັກສົມບູນ ໂດຍຜ່ານຂະບວນການຄົ້ນຄວ້າຮັບຮອງຈາກຄະນະປະຈຳພັກເມືອງຈຶ່ງອອກມະຕິຮັບຮອງ; ການຈັດພິທີຮັບເຂົ້າພັກ ແມ່ນມອບໃຫ້ເລຂາໜ່ວຍພັກເປັນຜູ້ຈັດຕັ້ງປະຕິບັດ ໂດຍການເຂົ້າຮ່ວມໂອ້ລົມຈາກສະຫາຍເລຂາຄະນະພັກຮາກຖານກຸ່ມບ້ານ.

ຜ່ານການຈັດຕັ້ງປະຕິບັດວຽກງານດັ່ງກ່າວເຫັນວ່າ ຄະນະພັກແຕ່ລະຂັ້ນໄດ້ຍົກສູງຄວາມຮັບຜິດຊອບຕົນເອງ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນທີ່ກຳນົດໄວ້ໃນກົດລະບຽບພັກເປັນເຈົ້າການໃນການປະກອບສ່ວນຢ່າງຕັ້ງໜ້າໃນວຽກງານກໍ່ສ້າງ ແລະ ຂະຫຍາຍພັກແມ່ນໄປຕາມ 5 ຫຼັກການ, 3 ທິດນຳ ທີ່ພັກໄດ້ກຳນົດໄວ້ຢ່າງເຂັ້ມງວດ, ຖືເອົາຄຸນນະພາບເປັນກົກ, ເອົາປະລິມານເປັນສິ່ງສຳຄັນ, ເຮັດໃຫ້ຮາກຖານພັກຫຼາຍບ່ອນມີຄຸນນະພາບ; ຄະນະພັກ ກໍ່ຄືສະມາຊິກພັກໄດ້ເຕີບໃຫຍ່ເຂັ້ມແຂງໃນທຸກຂົງເຂດ; ສະແດງອອກສະມາຊິກພັກຫຼາຍສະຫາຍໄດ້ກາຍເປັນສະມາຊິກພັກແຂງ, ຫຼາຍໜ່ວຍພັກກາຍເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃນແຕ່ລະປີໄດ້ເພີ່ມຂຶ້ນ, ມາຮອດປະຈຸບັນສາມາດລຶບລ້າງບ້ານຂາວໄດ້ 100%, ກາຍເປັນປັດໄຈໜຶ່ງເຮັດໃຫ້ພັກມີກຳລັງແຮງທີ່ເຂັ້ມແຂງຢູ່ຮາກຖານ, ເປັນບ່ອນອີງອັນແໜ້ນແກ່ນ ແລະ ເປັນຫົວຈັກຫຼັກແຫຼ່ງໃນການນຳພາ-ຊີ້ນຳ ແລະ ນຳພາປະຊາຊົນຢູ່ຮາກຖານບ້ານຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດໃຫ້ປະກົດຜົນເປັນຈິງ, ເຮັດໃຫ້ຖັນແຖວສະມາຊິກພັກເຕີບໃຫຍ່ຂະຫຍາຍຕົວເພີ່ມຂຶ້ນທາງດ້ານປະລິມານ ແລະ ຄຸນນະພາບ.

ມາຮອດປະຈຸບັນ ທົ່ວອົງຄະນະພັກເມືອງມີ 123 ໜ່ວຍພັກ, ໃນນີ້ອ້ອມຂ້າງສຳນັກງານມີ 38 ໜ່ວຍພັກ ແລະ ຮາກຖານບ້ານມີ 85 ໜ່ວຍພັກ; ມີຄະນະພັກຮາກຖານ 10 ຄະນະພັກຮາກຖານ, ໄດ້ຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ 65 ໜ່ວຍ, ໃນນີ້; ໜ່ວຍພັກບ້ານ 38 ໜ່ວຍ ແລະ ໜ່ວຍພັກສຳນັກງານ 27 ໜ່ວຍເທົ່າກັບ 53,2% ຂອງຈຳນວນໜ່ວຍພັກທັງໝົດ, ມີໜ່ວຍພັກກາງ 4 ໜ່ວຍເທົ່າກັບ 3,27%, ບໍ່ມີໜ່ວຍພັກອອ່ນ. ໃນທົ່ວເມືອງມີສະມາຊິກພັກຈຳນວນ 1,999 ສະຫາຍ, ຍິງ 515 ສະຫາຍ, ໃນນີ້, ມີສະມາຊິກພັກຮາກຖານບ້ານຈຳນວນ 1,182 ສະຫາຍ, ຍິງ 211 ສະຫາຍ; ສະມາຊິກພັກອ້ອມຂ້າງສຳນັກງານ 462 ສະຫາຍ, ຍິງ 212 ສະຫາຍ; ສະມາຊິກພັກທີ່ຈັດເປັນປະເພດແຂງມີ 1371 ສະຫາຍ, ຍິງ 365 ສະຫາຍກວມ 33,9% ປະເພດກາງມີ 266 ສະຫາຍ, ຍິງ 50 ສະຫາຍກວມ 59%; ປະເພດອ່ອນ 9 ສະຫາຍ; ບໍ່ໄດ້ຈັດປະເພດ 261 ສະຫາຍ, ຍິງ 77 ສະຫາຍກວມ 53%; ບໍ່ໄດ້ປະເມີນ 12 ສະຫາຍ, ກວມ 19%, ເສຍທາດ 2 ສະຫາຍ. ຖ້າທຽບໃສ່ໃນໄລຍະຜ່ານມາ ຈຳນວນສະມາຊິກພັກ, ໜ່ວຍພັກ, ສະມາຊິກພັກແຂງ ແລະ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ກໍ່ໄດ້ເພີ່ມຂຶ້ນ.

ຄຽງຄູ່ກັບຜົນສໍາເລັດດັ່ງກ່າວນັ້ນ, ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການແຫ່ງການນໍາພາຂອງພັກໃນໄລຍະໃໝ່ແລ້ວເຫັນວ່າການຍົກສູງຄຸນນະພາບວຽກງານຂະຫຍາຍພັກຢູ່ຮາກຖານບ້ານ ເມືອງຂວາ ແຂວງຜົ້ງສາລີຍັງມີຂໍ້ຈໍາກັດຈໍານວນໜຶ່ງເປັນຕົ້ນແມ່ນ:

1. ຄະນະພັກຈໍານວນໜຶ່ງ ຍັງບໍ່ທັນໄດ້ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມ, ກໍາແໜ້ນເນື້ອໃນກົດລະບຽບພັກ ແລະ ນິຕິກໍາ ກ່ຽວກັບວຽກງານຂະຫຍາຍພັກ, ບໍ່ທັນເຂົ້າໃຈຢ່າງເລິກເຊິ່ງ ຈຶ່ງເຮັດໃຫ້ວຽກງານດັ່ງກ່າວບໍ່ໄດ້ຮັບການຈັດຕັ້ງປະຕິບັດໄດ້ຕາມຄາດໝາຍເທົ່າທີ່ຄວນ ສະແດງໃຫ້ເຫັນຢູ່ບ່ອນວ່າບາງໜ່ວຍພັກການຂະຫຍາຍພັກ ບໍ່ບັນລຸຕາມຄາດໝາຍທີ່ກໍານົດໄວ້.

2. ຄະນະພັກ, ຄະນະນໍາບໍ່ທັນໄດ້ເອົາໃຈໃສ່ຢ່າງເລິກເຊິ່ງ ແລະ ທົ່ວເຖິງການຊີ້ນໍາການ ຈັດຕັ້ງປະຕິບັດຢູ່ຮາກຖານພັກບ້ານ ຍັງມີຫຼາຍບ່ອນຍັງບໍ່ທັນຍົກສູງບົດບາດການນໍາພາຂອງພັກ ໂດຍສະເພາະຮາກຖານພັກຢູ່ເຂດຫ່າງໄກສອກຫຼີກຍັງບໍ່ທົ່ວເຖິງ, ຊີ້ນໍາບາງຄັ້ງຍັງແບບລວມໆ ເຮັດໃຫ້ການຈັດຕັ້ງປະຕິບັດ ຢູ່ຂັ້ນຮາກຖານກ່ຽວກັບວຽກງານຂະຫຍາຍພັກຍັງເຮັດບໍ່ທັນໄດ້ດີ, ບໍ່ມີລັກສະນະຕໍ່ເນື່ອງ, ຊັກຊ້າ, ບໍ່ທັນກໍານົດໄດ້ເປົ້າໝາຍຊັດເຈນ ແລະ ບໍ່ໄປຕາມຂັ້ນຕອນຂອງການຂະຫຍາຍພັກ, ສະແດງອອກຜ່ານມາ ການຂະຫຍາຍພັກຍັງບໍ່ທັນຮັບປະກັນໄດ້ລັກສະນະສືບທອດ ເຊັ່ນວ່າ: ມີສະມາຊິກພັກຈໍານວນໜຶ່ງບໍ່ຮູ້ໜັງສື ຈຶ່ງໃຫ້ການສ້າງພະນັກງານສືບທອດຂັ້ນບ້ານບໍ່ໄປຕາມຄາດໝາຍທີ່ແຜນກໍານົດພະນັກງານກໍານົດໄວ້.

3. ຄວາມເປັນເຈົ້າການຮັບຜິດຊອບຂອງການຈັດຕັ້ງຮາກຖານພັກບາງໜ່ວຍພັກ ກ່ຽວກັບການຂົນຂວາຍມະຫາຊົນເຂົ້າພັກຍັງບໍ່ທັນສູງ ແລະ ເຮັດບໍ່ທັນໄດ້ດີ ຈຶ່ງເຮັດໃຫ້ຄວາມຮັບຮູ້ຂອງເປົ້າໝາຍ ຕໍ່ວັດຖຸປະສົງ, ທາດແທ້ ແລະ ອຸດົມການຂອງພັກ; ອີກດ້ານໜຶ່ງບັນດາເນື້ອໃນ, ວິທີການໂຄສະນາຂົນຂວາຍຍັງເຮັດບໍ່ທັນໄດ້ດີ, ບໍ່ທັນສ້າງຄວາມດຶງດູດໃຈໃຫ້ແກ່ມະຫາຊົນ ໃນການສະໝັກໃຈຢາກເຂົ້າພັກຍັງບໍ່ທັນເລິກເຊິ່ງ, ເຮັດໃຫ້ມະຫາຊົນທີ່ມີຄວາມກ້າວໜ້າຈໍານວນໜຶ່ງບໍ່ຢາກເຂົ້າພັກ.

4. ສະມາຊິກພັກຈໍານວນໜຶ່ງ ຢູ່ບາງໜ່ວຍພັກຍັງບໍ່ທັນຮັກສາໄດ້ຄວາມເປັນແບບຢ່າງນໍາ ໂດຍສະເພາະແມ່ນແບບແຜນການນໍາພາ, ແບບແຜນການດໍາລົງຊີວິດ ສະແດງອອກຢູ່ບ່ອນວ່າ ຢູ່ຂັ້ນຮາກຖານພັກບາງບ່ອນປະຊາຊົນຈໍານວນໜຶ່ງຍັງຂາດຄວາມເຊື່ອໝັ້ນ, ເຫຼື້ອມໃສສັດທາຕໍ່ພັກ, ເກີດມີແນວຄິດແບ່ງແຍກການຂະຫຍາຍເຂົ້າພັກມີລັກສະນະສ້າງກຸ່ມກ້ອນ, ຈຸ່ມເຈື້ອ, ພັກພວກ ເຊິ່ງເປັນປະກົດການທີ່ບໍ່ດີກະທົບໃສ່ບົດບາດ ແລະ ອິດທິພົນຂອງພັກ.

ເພື່ອເປັນການຍົກສູງຄຸນນະພາບວຽກງານຂະຫຍາຍພັກຢູ່ຮາກຖານພັກບ້ານ ເມືອງຂວາ ແຂວງຜົ້ງສາລີ ໄປຕາມທິດທາງແຜນການທີ່ກໍານົດໄວ້ ຮັບປະກັນໄດທາງດ້ານປະລິມານ ແລະ ຄຸນນະພາບເປັນກົກນັ້ນ ຕາມທັດສະນະຂອງຜູ້ຂຽນຂໍມີຄໍາເຫັນແລກປ່ຽນບາງດ້ານດັ່ງນີ້:

ໜຶ່ງ. ຄະນະພັກແຕ່ລະຂັ້ນ ຕ້ອງເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງເປັນປົກກະຕິ, ຕໍ່ເນື່ອງ ເພື່ອໃຫ້ເຂົາເຈົ້າຮັບຮູ້ເຂົ້າໃຈເຖິງບົດບາດການນໍາພາຂອງພັກ, ບັນດາຈຸດໝາຍ, ເປົ້າໝາຍ, ແນວທາງ, ແຜນນະໂຍບາຍຂອງພັກ. ພ້ອມນັ້ນ ກໍ່ຕ້ອງເອົາໃຈໃສ່ໃນການຈັດຕັ້ງເຊື່ອມຊຶມເອກະສານທີ່ຕິດພັນກັບວຽກງານຂະຫຍາຍພັກ ເປັນຕົ້ນແມ່ນບາດກ້າວ, ຂັ້ນຕອນ ແລະ ວິທີການທີ່ກໍານົດໄວ້ໃນກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI, ຄໍາສັ່ງກົມການເມືອງສູນກາງພັກ ເລກທີ 064/ກມສພ, ຄໍາແນະນໍາ

ຂອງຄະນະຈັດຕັ້ງສູນກາງພັກ ເລກທີ 201/ຄຈສພ ແລະ ນິຕິກໍາເພີ່ມເຕີມ ຂອງຂັ້ນແຂວງ, ລະບຽບການທີ່ກໍານົດໄວ້ຢ່າງເຂັ້ມງວດ.

ສອງ. ຄະນະພັກ, ອົງການເສນາທິການທີ່ເຮັດວຽກງານກໍ່ສ້າງພັກ ຕ້ອງເອົາໃສ່ນໍາພາ-ຊີ້ນໍາຢ່າງໃກ້ຊິດຕິດແທດຕໍ່ການຈັດຕັ້ງຮາກຖານພັກ ຖືເອົາວຽກງານຂະຫຍາຍພັກແມ່ນຄວາມຮັບຜິດຊອບໂດຍກົງຂອງຄະນະພັກແຕ່ລະຂັ້ນ, ຄະນະໜ່ວຍພັກ ພ້ອມດຽວກັນນັ້ນ, ຄະນະພັກແຕ່ລະຂັ້ນ, ສະມາຊິກພັກແຕ່ລະສະຫາຍ ຕ້ອງຍົກສູງຄວາມເປັນເຈົ້າການຂະຫຍາຍພັກ, ເອົາໃຈໃສ່ໃນການນໍາພາ-ຊີ້ນໍາຢູ່ໃນຂອບເຂດຄວາມຮັບຊອບຂອງຕົນ ຖືເອົາຂະບວນການຂະຫຍາຍພັກຕິດພັນກັບຂະບວນການຕົວຈິງໃນແຕ່ລະຂົງເຂດວຽກງານ ເປັນບັນທັດຖານໜຶ່ງທີ່ແນໃສ່ຮັບປະກັນຄຸນນະພາບເປັນຫຼັກ.

ສາມ. ການຂະຫຍາຍພັກ ຄະນະພັກ, ຄະນະໜ່ວຍພັກ ຕ້ອງໄດ້ວາງທິດທາງແຜນການກໍ່ສ້າງເປັນແຕ່ລະໄລຍະ ຄາດໝາຍສູ້ຊົນຂອງກອງປະຊຸມຂັ້ນຂອງຕົນແຕ່ລະສະໄໝ ແລະ ແຜນການກໍ່ສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຕ້ອງໄດ້ກໍານົດລະອຽດ, ຊັດເຈນທາງດ້ານຈໍານວນ ກ້າວໄປເຖິງການ ຮັບປະກັນດ້ານຄຸນນະພາບ, ຖືເອົາການຂະຫຍາຍພັກຕິດພັນກັບແຜນນໍາມົດພະນັກງານຂັ້ນບ້ານ, ແນໃສ່ຜູ້ທີ່ຢູ່ໃນອົງການຈັດຕັ້ງມະຫາຊົນ, ຊາວໜຸ່ມ, ແມ່ຍິງ ແລະ ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງບ້ານ.

ສີ່. ການຂະຫຍາຍພັກຕ້ອງຕິດພັນກັບການກໍ່ສ້າງ-ປັບປຸງພັກ ການຂະຫຍາຍພັກ ຕ້ອງແນໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງແຕ່ລະຂົງເຂດວຽກງານ, ຖືເອົາຜົນງານ, ຜົນສໍາເລັດເປັນໄມ້ຫຼາວັດແທກ ເພື່ອໃຫ້ກາຍເປັນກໍາລັງແຮງອັນສໍາຄັນຂອງພັກ ທັງຮັບປະກັນທາງດ້ານຄຸນນະພາບຢ່າງແທ້ຈິງ; ອີກບັນຫາໜຶ່ງແມ່ນຄວາມເປັນເອກະພາບພາຍໃນໜ່ວຍພັກ ໃນການກໍານົດເປົ້າໝາຍຊັດເຈນໃນການກໍ່ສ້າງ-ຂະຫຍາຍເຂົ້າພັກ ເພື່ອຫຼີກລ້ຽງບັນຫາກ່ຽວກັບຄົນຂ້ອຍ ຄົນເຈົ້າ, ຈຸ້ມເຈື້ອເຊື້ອສາຍ, ພັກພວກ; ສິ່ງສໍາຄັນທີ່ສຸດແມ່ນຕ້ອງເອົາຜູ້ທີ່ມີປະຫວັດທີ່ຈະແຈ້ງ, ຂາວສະອາດ ເປັນແບບຢ່າງນໍາໜ້າໃນທຸກວຽກງານ ແລະ ຂະບວນການຂອງມະຫາຊົນແທ້ຈິງ.

ສັງລວມແລ້ວ, ວຽກງານຂະຫຍາຍພັກແມ່ນວຽກງານທີ່ສໍາຄັນ ແລະ ເປັນຍຸດທະສາດຂອງພັກໃນວຽກງານກໍ່ສ້າງພັກ-ພະນັກງານ; ເປັນວຽກງານທີ່ຄະນະພັກແຕ່ລະຂັ້ນຕ້ອງໄດ້ເອົາໃຈໃສ່ຢ່າງເລິກເຊິ່ງ ໂດຍຕິດພັນກັບການປັບປຸງພັກ, ຍົກສູງຄຸນນະພາບ ແລະ ຄວາມສາມາດນໍາພາຂອງການຈັດຕັ້ງຮາກຖານພັກ ແລະ ສະມາຊິກພັກ, ເຮັດໃຫ້ການຂະຫຍາຍສະມາຊິກພັກຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບຢ່າງແທ້ຈິງເວົ້າລວມ, ເວົ້າສະເພາະຢູ່ຮາກຖານພັກບ້ານ ຕ້ອງຖືເອົາວຽກງານດັ່ງກ່າວເປັນບັນຫາສໍາຄັນ ແລະ ຄວາມຮັບຜິດຊອບໂດຍກົງ ເພາະບ້ານເປັນບ່ອນທີ່ຕິດພັນກັບພື້ນຖານການດໍາລົງຊີວິດຂອງປະຊາຊົນບັນດາເຜົ່າ, ແມ່ນບ່ອນທີ່ຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ, ບ່ອນຮັບໃຊ້ບໍລິການປະຊາຊົນ ສະນັ້ນ, ຄະນະພັກຕ້ອງໄດ້ຖືສໍາຄັນ ແລະ ເອົາໃຈໃສ່ໃນການຄົ້ນຄວ້າ, ເຊື່ອຊຶມ, ກໍາແໜ້ນບັນດານິຕິກໍາຕ່າງໆທີ່ສູນກາງພັກວາງອອກເຮັດໃຫ້ຄະນະພັກ, ສະມາຊິກພັກແຕ່ລະ ສະຫາຍຮັບຮູ້, ເຂົ້າໃຈ, ກໍາແໜ້ນ ແລະ ຈັດຕັ້ງໃຫ້ປະກົດຜົນເປັນຈິງ, ທັງຮັບໃຫ້ກໍາລັງແຮງສູ້ຮົບຂອງພັກໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງແຕ່ລະຂະແໜງການຂອງສູນກາງ ແລະ ທ້ອງຖິ່ນຮາກຖານໃຫ້ບັນລຸຕາມແນວທາງທີ່ໄດ້ກໍານົດໄວ້ຢ່າງມີຜົນສໍາເລັດ...ຯ

ຍ້ອນມີການນໍາພາ-ຊີ້ນໍາທີ່ດີ ຈຶ່ງເຮັດ ໃຫ້ບ້ານໂພນແກ້ວ ມີການພັດທະນາຢ່າງຕໍ່ເນື່ອງ

ໂດຍ: ແສງຄໍາ ຈິດຕະວົງ

ການພັດທະນາບ້ານແມ່ນໜ້າທີ່ຂອງທຸກການຈັດຕັ້ງ ແລະ ພົນລະເມືອງທຸກຄົນ ໂດຍພາຍໃຕ້ການຊີ້ນໍາ-ນໍາພາຢ່າງໃກ້ຊິດຕິດແທດຂອງຄະນະໜ່ວຍພັກບ້ານນັ້ນໆ, ດັ່ງໜ່ວຍພັກບ້ານໂພນແກ້ວ ເປັນຮາກຖານພັກໜຶ່ງທີ່ຂຶ້ນກັບການຊີ້ນໍາ-ນໍາພາຂອງຄະນະບໍລິຫານງານພັກເມືອງຜົ້ງສາລີ, ແຂວງຜົ້ງສາລີ, ເປັນໜ່ວຍພັກທີ່ຕັ້ງຢູ່ເທດສະບານເມືອງ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1997 ປະຈຸບັນມີຄະນະໜ່ວຍພັກ 3 ສະຫາຍ, ຍິງ 1 ສະຫາຍ, ມີສະມາຊິກພັກສົມບູນ 12 ສະຫາຍ, ຍິງ 5 ສະຫາຍ, ສະມາຊິກພັກສໍາຮອງ 2 ສະຫາຍ ເປັນເພດຍິງ ແລະ ມີມະຫາຊົນກ້າວໜ້າ 6 ສະຫາຍ, ທົ່ວບ້ານມີ 371 ຫຼັງຄາເຮືອນ, ມີ 405 ຄອບຄົວ, ມີພົນລະເມືອງທັງໝົດ 1.833 ຄົນ, ຍິງ 902 ຄົນ, ມີ 7 ຊົນເຜົ່າຢູ່ຮ່ວມກັນ. ປະຊາຊົນພາຍໃນບ້ານມີມູນເຊື້ອດຸໝັ່ນຂະຫຍັນພຽນ ແລະ ບ້ານມີທ່າແຮງບົ່ມຊ້ອນໃນການຜະລິດກະສິກໍາເປັນສິນຄ້າ ເພື່ອປະກອບສ່ວນໃນການພັດທະນາບ້ານ ເຊິ່ງອາຊີບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນ ປູກຊາ, ປູກຢາງພາລາ, ໝາກແໜ່ງ, ລ້ຽງສັດ-ນ້ອຍໃຫຍ່ ແລະ ປູກພືດຕາມລະດູການ.

ເພື່ອເຄື່ອນໄຫວນໍາພາປະຕິບັດໜ້າທີ່ການເມືອງຂອງຕົນ ຄະນະໜ່ວຍພັກໄດ້ເອົາໃຈໃສ່ເຄື່ອນໄຫວນໍາພາ-ຊີ້ນໍາຢ່າງຮອບດ້ານ ໂດຍໄດ້ຖືເອົາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕິດພັນກັບການນໍາພາສ້າງເສດຖະກິດ ເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນພາຍໃນບ້ານ ໂດຍໄດ້ມີການແບ່ງງານ, ແບ່ງຄວາມຮັບຜິດຊອບຢ່າງລະອຽດໃຫ້ແກ່ຄະນະພັກ, ສະ

ມາຊິກພັກ ນຳພາ-ຊີ້ນຳ ຕາມ 5 ໜ່ວຍງານຄື: ໜ່ວຍງານບໍລິຫານ ແລະ ການປົກຄອງ, ໜ່ວຍງານພັກ ແລະ ອົງການຈັດຕັ້ງມະຫາຊົນ, ໜ່ວຍງານເສດຖະກິດ ແລະ ການເງິນ, ໜ່ວຍງານວັດທະນະທຳ-ສັງຄົມ ແລະ ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊິ່ງຕະຫຼອດການຊີ້ນຳ-ນຳພາໃນໄລຍະຜ່ານມາ ສາມາດຍາດໄດ້ຜົນສຳເລັດແຕ່ລະດ້ານດັ່ງນີ້:

ດ້ານການເມືອງ-ແນວຄິດ: ຄະນະໜ່ວຍພັກໄດ້ນຳເອົາມະຕິ, ຄຳສັ່ງ, ລະບຽບ, ກົດໝາຍ, ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ພັກ, ມະຕິກອງປະໃຫຍ່ ຄັ້ງທີ XI ຂອງອົງຄະນະພັກແຂວງ, ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງອົງຄະນະພັກເມືອງເວົ້າລວມ, ເວົ້າສະເພາະມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງໜ່ວຍພັກ, ສະມາຊິກພັກ ຄະນະໜ່ວຍພັກ ໄດ້ນຳເອົາເນື້ອໃນມະຕິດັ່ງກ່າວໄປເຜີຍແຜ່, ເຊື່ອມຊຶມໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້, ເຂົ້າໃຈຕໍ່ແນວທາງຂອງພັກ-ລັດ ແລະ ນຳໄປຈັດຕັ້ງຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຕາມແຕ່ລະໜ້າວຽກ; ນອກນັ້ນ ກໍ່ໄດ້ເອົາໃຈໃສ່ໃນການສຶກສາອົບຮົມ ແນວຄິດໃຫ້ແກ່ຄະນະບ້ານທຸກໜ່ວຍງານຢ່າງຕໍ່ເນື່ອງ ເພື່ອຮັບປະກັນຄວາມສາມັກຄີໃຫ້ແໜ້ນແຟ້ນ, ເປັນແບບຢ່າງທີ່ດີໃຫ້ແກ່ພໍ່ແມ່ປະຊາຊົນ ໂດຍຖືເອົາການປະຊຸມປະຈຳເດືອນເປັນບ່ອນສຶກສາອົບຮົມ ເຮັດໃຫ້ພາຍໃນໜ່ວຍພັກມີຄວາມສະຫງົບ, ສະມາຊິກພັກມີຄວາມອຸ່ນອຽນທຸ່ນທ່ຽງ, ປະຊາຊົນພາຍໃນບ້ານມີຄວາມເຊື່ອໝັ້ນຕໍ່ການນຳພາຂອງໜ່ວຍພັກ, ພາຍໃນບ້ານມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ ແລະ ໄດ້ຮັບການພັດທະນາຂຶ້ນເປັນກ້າວໆ.

ວຽກງານກໍ່ສ້າງພັກ: ຄະນະໜ່ວຍພັກ ໄດ້ກໍ່ສ້າງ ແລະ ປັບປຸງພັກຕາມ 5 ຫຼັກການ, 3 ທິດນຳຂອງພັກ ຖືສຳຄັນວຽກງານປັບປຸງ ແລະ ຂະຫຍາຍພັກ ໂດຍຕິດພັນກັບຂະບວນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນທິດນຳຕົ້ນຕໍ ເພື່ອຫັນມາເປັນແຜນການ, ແຜນງານລະອຽດ ໂດຍອີງໃສ່ເນື້ອໃນທີ່ກຳນົດໄວ້ໃນຄຳສັ່ງຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ຈາກນັ້ນຈຶ່ງນຳເອົາແຜນການດັ່ງກ່າວໄປເຜີຍແຜ່ໃຫ້ອົງການປົກຄອງບ້ານ, ແນວໂຮມບ້ານ ແລະ ອົງການຈັດຕັ້ງມະຫາຊົນ ທີ່ຢູ່ໃນຂອບເຂດການນຳພາຂອງໜ່ວຍພັກ ເພື່ອເປັນເອກະພາບໃນການຈັດຕັ້ງປະຕິບັດ ເຊິ່ງໃນໄລຍະຜ່ານມາຄະນະໜ່ວຍພັກ ໄດ້ເປັນເຈົ້າການໃນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ສາມາດຍາດໄດ້ຜົນງານ ແລະ ໄດ້ຮັບໃບຢັ້ງຢືນເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໄດ້ 5 ປີລຽນຕິດ. ວຽກງານຂະຫຍາຍພັກ ໄດ້ປະຕິບັດຕາມກົດລະບຽບພັກ, ຕາມຫຼັກການ, ທິດນຳ, ບາດກ້າວ, ມາດຕະຖານ ແລະ ເງື່ອນໄຂທີ່ກຳນົດໄວ້ໃນກົດລະບຽບພັກໂດຍຖືເອົາຄຸນນະພາບເປັນຫຼັກ, ເລືອກເຟັ້ນເອົາມະຫາຊົນຜູ້ດີເດັ່ນໃນຂະບວນການວຽກງານຕົວຈິງ ເພື່ອເປັນເປົ້າໝາຍຂະຫຍາຍເຂົ້າພັກ. ນອກນັ້ນ, ກໍ່ຍັງໄດ້ປຸກລະດົມສະມາຊິກພັກທຸກສະຫາຍເປັນແບບຢ່າງນຳໜ້າໃນການປະຕິບັດລະບຽບຕ່າງໆ ຂອງພັກ, ກົດໝາຍ ຂອງລັດຢ່າງເຂັ້ມງວດ, ແຕ່ລະເດືອນໄດ້ມີການຮ່ວມຊີວິດພັກ ແລະ ເສຍເງິນສະຕິຕາມລະບຽບການຂອງພັກພ້ອມທັງສົ່ງເງິນສະຕິພັກໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ຄະນະໜ່ວຍພັກໄດ້ຖືສຳຄັນໃນວຽກງານດັ່ງກ່າວ ໂດຍໄດ້ເອົາໃຈໃສ່ໃນການແກ້ໄຂບັນຫາຢາເສບຕິດ ເພາະເຫັນວ່າບັນຫາດັ່ງກ່າວເປັນບັນຫາທີ່ສ້າງຄວາມບໍ່ສະ

ຫງໍບ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມພາຍໃນບ້ານ, ເປັນບັນຫາທີ່ຖ່ວງດຶງການພັດທະນາເສດຖະກິດ-ສັງຄົມ, ສະນັ້ນ, ຄະນະໜ່ວຍພັກ, ອົງການປົກຄອງບ້ານ ໄດ້ສົມທົບກັບກອງຫຼອນບ້ານ, ປກສ-ປກຊ ແລະ ຄະນະຮັບຜິດຊອບຂັ້ນກຸ່ມບ້ານ, ຂັ້ນເມືອງ ເອົາໃຈໃສ່ຢ່າງຕັ້ງໜ້າເພື່ອແກ້ໄຂບັນຫາດັ່ງກ່າວ, ໂດຍໄດ້ມີການເກັບກຳສະຖິຕິຄົນເຂົ້າ-ຄົນອອກບ້ານເປັນປົກກະຕິ ແລະ ນຳເອົາລະບຽບກົດໝາຍ, ນິຕິກຳຕ່າງໆ, ຜົນຮ້າຍ ແລະ ໄພອັນຕະລາຍຂອງການເສບຢາເສບຕິດ ເພື່ອຈັດຕັ້ງເຜີຍແຜ່ໃຫ້ແກ່ຊາວໜຸ່ມ, ໄວໜຸ່ມ, ພໍ່ແມ່ປະຊາຊົນ ແລະ ບັນດາກຸ່ມເປົ້າໝາຍທີ່ພົວພັນກັບສິ່ງເສບຕິດ ໄດ້ຮັບຮູ້ພ້ອມກັບການສ້າງບົດບັນທຶກສັນຍາ 4 ບໍ່ ແລະ ເຊັນໂປ້ກັບແຕ່ລະຄອບຄົວພາຍໃນບ້ານ.

ດ້ານການພັດທະນາເສດຖະກິດ-ສັງຄົມ: ໂດຍອີງໃສ່ທ່າແຮງບົ່ມຊ້ອນ ເຊິ່ງເປັນບ້ານເທດສະບານເມືອງ ມີເນື້ອທີ່ທຳການຜະລິດຫຼາຍສົມຄວນ ມີ 15.567 ເຮັກຕາ, ຄະນະໜ່ວຍພັກ ໄດ້ເອົາໃຈໃສ່ສ້າງເງື່ອນໄຂອຳນວຍຄວາມສະດວກ ໄດ້ຊຸກຍູ້ເລັ່ງໃສ່ການປູກຝັງ-ລ້ຽງສັດເປັນຕົ້ນຕໍ ເພື່ອຕອບສະໜອງດ້ານສະບຽງອາຫານ ແລະ ໄດ້ສົ່ງເສີມບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການພໍ່ຄ້າຊາວຂາຍ ສາມາດສ້າງລາຍຮັບທັງໝົດ 13 ຕື້ກວ່າກີບຕໍ່ປີ, ສະເລ່ຍລາຍຮັບໃສ່ຫົວຄົນ 9 ລ້ານກວ່າກີບຕໍ່ຄົນຕໍ່ປີ ເຊິ່ງລາຍຮັບຕົ້ນຕໍແມ່ນໄດ້ຈາກການປູກຊາຂາຍ ກາຍເປັນສິນຄ້າທີ່ມີຊື່ສຽງຂອງບ້ານ ກໍ່ຄືຂອງເມືອງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນນັບມື້ດີຂຶ້ນເປັນກ້າວໆ ສາມາດສ້າງຄອບຄົວຕົວແບບໄດ້ຈຳນວນ 10 ຄອບຄົວ, ໃນນີ້ ມີຄອບຄົວຕົວແບບດ້ານການປູກຝັງ 1 ຄອບຄົວ, ລ້ຽງສັດ 4 ຄອບຄົວ, ໂຮງງານອົບຊາ 4 ຄອບຄົວ ແລະ ຕົວແບບການເຮັດບໍລິສັດ 1 ຄອບຄົວ. ນອກຈາກນັ້ນ, ຍັງໄດ້ນຳພາປະຊາຊົນພາຍໃນບ້ານສ້າງທຳກອງ, ສ້າງທໍ່ທົດນ້ຳພະພຸດທະຮູບ, ປັບປຸງບູລະນະວັດ ແລະ ໄດ້ສ້າງຂະບວນການອອກແຮງງານລວມຢ່າງເປັນປົກກະຕິ ເພື່ອຕ້ອນຮັບວັນບຸນສຳຄັນຂອງຊາດ, ຂອງພັກ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ, ຍັງເຫັນໄດ້ດ້ານອ່ອນ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງສືບຕໍ່ແກ້ໄຂ ເປັນຕົ້ນແມ່ນ: 1). ການນຳພາເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍບັນດາມະຕິ, ຄຳສັ່ງ, ບົດແນະນຳຕ່າງໆ ຂອງພັກ ຍັງເຮັດບໍ່ທັນໄດ້ດີ, ຂອດການນຳພາ-ຊີ້ນຳຂອງຄະນະໜ່ວຍພັກ ຍັງຊຸກຊ້ຳ; ການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າບໍ່ທັນເຮັດຢ່າງຕໍ່ເນື່ອງ; 2). ການຄົ້ນຄວ້າຫັນເອົາແນວທາງນະໂຍບາຍຂອງພັກ-ລັດ ມາເປັນແຜນງານ, ແຜນການ, ໂຄງການປະຕິບັດເຂົ້າໃນວຽກງານຕົວຈິງ, ຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກຈຳນວນໜຶ່ງຍັງບໍ່ທັນໄດ້ດີ, ຄວາມຮັບຮູ້, ເຂົ້າໃຈ ຕໍ່ແນວທາງນະໂຍບາຍຂອງພັກ ຍັງບໍ່ທັນເລິກເຊິ່ງເທົ່າທີ່ຄວນ; ການຂະຫຍາຍເຂົ້າພັກຍັງຫຍຸ້ງຍາກຫຼາຍສົມຄວນ ເຖິງແມ່ນວ່າຈະລົງຊຸກຍູ້ປຸກລະດົມຂົນຂວາຍແລ້ວກໍ່ຕາມ ແຕ່ມະຫາຊົນຈຳນວນໜຶ່ງກໍ່ຍັງບໍ່ຢາກເຂົ້າພັກ ສາເຫດຍ້ອນຄວາມຮັບຮູ້ເຂົ້າໃຈຍັງບໍ່ທັນເລິກເຊິ່ງ; 3). ການແກ້ໄຂຄວາມທຸກຍາກຂອງປະຊາຊົນພາຍໃນບ້ານ ເຖິງວ່າພະຍາຍາມສູງແຕ່ຍັງມີບາງຄອບຄົວບໍ່ພົ້ນທຸກ ສາເຫດຍ້ອນແບບແຜນການດຳເນີນຊີວິດ ແລະ ຂາດຄວາມບຸກບືນ.

ຕໍ່ກັບຂໍ້ຄົງຄ້າງດັ່ງກ່າວນັ້ນ ຄະນະໜ່ວຍພັກ ຈະຕ້ອງໄດ້ເອົາໃຈໃສ່ສືບຕໍ່ແກ້ໄຂ ເປັນຕົ້ນແມ່ນ: ສືບຕໍ່ສ້າງແຜນກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນວຽກງານຕົ້ນຕໍ ພ້ອມກັນນັ້ນ ຕ້ອງໄດ້ກຳນົດເອົາຄາດໝາຍສູ້ຊົນຂອງຕົນທີ່ໄດ້ກຳນົດໄວ້ ມາສ້າງເປັນແຜນງານ, ໂຄງການລະອຽດ ພ້ອມທັງມອບໃຫ້ສະຫາຍສະມາຊິກພັກຮັບຜິດຊອບ; ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ-ລັດ ໃຫ້ເລິກເຊິ່ງກວ່າເກົ່າ ເພື່ອໃຫ້ເຂົາເຈົ້າກາຍເປັນກຳລັງແຮງທີ່ສຳຄັນ ນຳພາ-ຊີ້ນຳ ປະຕິບັດໜ້າທີ່ຂອງຕົນທີ່ໄດ້ຮັບມອບໝາຍໃຫ້ສຳເລັດ; ສືບຕໍ່ປັບປຸງແບບແຜນຮ່ວມຊີວິດຂອງໜ່ວຍພັກ ໃຫ້ມີເນື້ອໃນເລິກເຊິ່ງ ໂດຍຍົກໃຫ້ເຫັນຈຸດອ່ອນຂອງແຕ່ລະສະຫາຍໃນຄະນະພັກ, ສະມາຊິກພັກ ໃຫ້ມີການປ່ຽນແປງ ທັງນີ້ກໍ່ເພື່ອສ້າງໃຫ້ແຕ່ລະສະຫາຍມີຄວາມກ້າວໜ້າ; ຖືເອົາມະຫາຊົນເປັນກຳລັງແຮງເພື່ອເຮັດໃຫ້ໜ່ວຍພັກມີຄວາມເຂັ້ມແຂງ ເອົາໃຈໃສ່ຕິດຕາມ, ກວດກາການເຄື່ອນໄຫວຂອງມະຫາຊົນຜູ້ກ້າວໜ້າ ແລະ ເພື່ອສະເໜີໃຫ້ຄະນະພັກຂັ້ນເທິງຮັບເຂົ້າເປັນສະມາຊິກພັກສຳຮອງ ຕາມລະບຽບການຂອງພັກ.

ເວົ້າລວມແລ້ວ, ໜ່ວຍພັກບ້ານໂພນແກ້ວ ສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ກໍ່ຍ້ອນການນຳພາ-ຊີ້ນຳຂອງຄະນະພັກຂັ້ນເທິງຢ່າງໃກ້ຊິດຕິດແທດ, ສະເໜີຕົ້ນສະເໜີປາຍ, ຊຸກຍູ້ສົ່ງເສີມໃນທຸກດ້ານ, ບວກກັບຄວາມເອົາໃຈໃສ່ຂອງຄະນະໜ່ວຍພັກ, ການປະກອບສ່ວນຢ່າງຕັ້ງໜ້າຂອງປະຊາຊົນບັນດາເຜົ່າພາຍໃນບ້ານ ກໍ່ຄືການຈັດຕັ້ງສັງຄົມຂັ້ນຕ່າງໆ ແລະ ສະມາຊິກພັກບ້ານ ເຊິ່ງຍາມໃດກໍ່ຖືເອົາແນວທາງນະໂຍບາຍຂອງພັກ-ລັດເປັນບັນຫາສຳຄັນຕົ້ນຕໍ ຈຶ່ງເຮັດໃຫ້ໜ່ວຍພັກສາມາດປະຕິບັດໜ້າທີ່ໄດ້ສະດວກ ແລະ ສ້າງເງື່ອນໄຂທີ່ອຳນວຍໃນການນຳພາ-ຊີ້ນຳເພື່ອໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ຕະຫຼອດມາ...ຯ

ຍົກສູງວຽກງານກໍ່ສ້າງ-ບຳລຸງ ພະນັກງານ ຢູ່ອົງການໄອຍະການປະຊາຊົນສູງສຸດ

ໂດຍ: ທິບພະກອນ ມະນີວົງ

ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວກໍ່ໄດ້ກຳນົດວ່າ: ເພື່ອສ້າງເປັນແຫຼ່ງພະນັກງານສືບທອດທີ່ມີເພດຍິງ, ເຜົ່າ ແລະ ຂົງເຂດການເຄື່ອນໄຫວອັນຫຼາກຫຼາຍບົນພື້ນຖານຂອງແຜນກຳນົດອັນຖືກຕ້ອງ, ການຈັດຕັ້ງທີ່ກ່ຽວຂ້ອງແຕ່ລະຂັ້ນຕ້ອງຮັບປະກັນການດຳເນີນການບຳລຸງ-ກໍ່ສ້າງ ໃຫ້ພະນັກງານທີ່ນອນໃນເປົ້າໝາຍຢ່າງເປັນລະບົບ, ຜ່ານໂຮງຮຽນ ແລະ ຜ່ານຂະບວນການຕົວຈິງຕ້ອງສົມທົບລະຫວ່າງການບຳລຸງສ້າງຍົກລະດັບຄວາມຮູ້, ຄວາມສາມາດ ກັບການຊຸກຍູ້ ແລະ ປຸກລະດົມການຝຶກຝົນ, ຫຼໍ່ຫຼອມດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນໃນການປະພຶດປະຕິບັດ ຂອງສະມາຊິກພັກ-ພະນັກງານທີ່ນອນໃນແຜນກຳນົດ ບັນລຸຕາມມາດຕະຖານ ແລະ ເງື່ອນໄຂ". ໂດຍສະເພາະຢູ່ອົງການໄອຍະການສູງສຸດຍິ່ງມີຄວາມຈຳເປັນຕ້ອງໄດ້ເອົາໃຈໃສ່ກໍ່ສ້າງບຳລຸງ-ພະນັກງານ ເພາະວ່າອົງການໄອຍະການ ແມ່ນອົງການໜຶ່ງທີ່ເຮັດໜ້າທີ່ຕິດຕາມກວດກາຂອງລັດ, ມີພາລະບົດບາດຕິດຕາມ ແລະ ກວດກາການເຄົາລົບ ແລະ ປະຕິບັດກົດໝາຍຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ພົນລະເມືອງ ເພື່ອໃຫ້ມີຄວາມຖືກຕ້ອງ, ເປັນເອກະພາບ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍ. ເປັນຕົ້ນຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບຂອງບັນດາກະຊວງ, ອົງການລັດ ທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ແລະ ພົນລະເມືອງ. ການຕິດຕາມກວດການີ້ ເອີ້ນວ່າການຕິດຕາມກວດກາທົ່ວໄປ; ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ; ດຳເນີນການສືບສວນ-ສອບສວນຄະດີໃດໜຶ່ງ ເປັນທັງໝົດ ຫຼື ບາງສ່ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ; ສັ່ງຟ້ອງຜູ້ຖືກຫາຂຶ້ນສານ; ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ; ຕິດຕາມກວດກາການປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ; ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ; ຕິດຕາມກວດກາ ການຄົ້ນຄວ້າ, ການສະເໜີ ແລະ ການຈັດຕັ້ງປະຕິບັດການໃຫ້ອະໄພຍະໂທດຕາມລັດຖະດຳລັດຂອງປະທານປະເທດ; ປະສານສົມທົບກັບອົງການສືບສວນ-ສອບສວນ ແລະ ອົງການອື່ນ

ທີ່ກ່ຽວຂ້ອງ ດໍາເນີນການສະກັດກັ້ນ, ຕ້ານອາຊະຍາກໍາ ຫຼື ການກະທໍາຜິດ ແລະ ການລະເມີດກົດໝາຍ ພ້ອມທັງລຶບລ້າງບັນດາສາເຫດ ແລະ ເງື່ອນໄຂທີ່ພາໃຫ້ການກະທໍາຜິດເກີດຂຶ້ນ; ຮື້ຟື້ນຄະດີຕາມກົດໝາຍ ໃນກໍລະນີທີ່ມີຫຼັກຖານໃໝ່; ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ດ້ວຍບົດບາດ ແລະ ຄວາມໝາຍຄວາມສໍາຄັນດັ່ງກ່າວ ອົງການໄອຍະການປະຊາຊົນສູງສຸດ ໄດ້ຍົກສູງຄວາມຮັບຜິດຊອບຂອງຕົນໃນການເພີ່ມທະວີການນໍາພາ-ຊີ້ນໍາວຽກງານພະນັກງານ ເປັນຕົ້ນແມ່ນວຽກງານບໍາລຸງ-ສ້າງພະນັກງານທີ່ຢູ່ໃນສິດຄຸ້ມຄອງຂອງຕົນ ຕິດພັນກັບແຜນກໍານົດພະນັກງານ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄວາມຮຽກຮ້ອງຕ້ອງການໃນຂະແໜງການຕົນ; ເລີ່ມຈາກຄົ້ນຄວ້າສັບຊ້ອນເປົ້າໝາຍໄປບໍາລຸງສ້າງ ບົນພື້ນຖານແຜນກໍານົດພະນັກງານທີ່ກໍານົດໄວ້, ມີການຄົ້ນຄວ້າຕົກລົງເປັນເອກະພາບພາຍໃນຄະນະພັກ ແລະ ຮັບປະກັນຖືກຕ້ອງຕາມມາດຕະຖານ, ເງື່ອນໄຂທີ່ກໍານົດໄວ້ ໂດຍເລັ່ງໃສ່ພະນັກງານຮຸ່ນກາງ, ຮຸ່ນໜຸ່ມ, ຊົນເຜົ່າ ແລະ ເພດຍິງ. ໝາຍວ່າການຍົກສູງຄຸນນະພາບການກໍ່ສ້າງ ແລະ ບໍາລຸງພະນັກງານ, ສະມາຊິກພັກ ຕ້ອງດໍາເນີນຢ່າງເປັນປົກກະຕິ, ຕໍ່ເນື່ອງ, ທັງກັບທີ່ ແລະ ສົ່ງໄປກໍ່ສ້າງຢູ່ສະຖາບັນພາຍໃນ ແລະ ຕ່າງປະເທດ ທັງໝົດນັ້ນຕ້ອງຮັບປະກັນໄດ້ 3 ຮຸ່ນ 3 ປະເພດ ເພື່ອໄປຍົກລະດັບຄວາມຮູ້ແນໃສ່ເສີມສ້າງຄວາມສາມາດອັນໃໝ່ ເພື່ອນໍາໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຢູ່ບັນດາກົມກອງ, ຂະແໜງການຕົນໃຫ້ມີຜົນສໍາເລັດ ແລະ ມີປະສິດທິພາບ.

ສະແດງອອກໄລຍະຜ່ານມາໄດ້ສົ່ງພະນັກງານໄປກໍ່ສ້າງທາງດ້ານວິຊາສະເພາະທັງໝົດ ຈໍານວນ 228 ທ່ານ, ຍິງ 100 ທ່ານ; ໃນນີ້, ລະດັບປະລິນຍາເອກ ຈໍານວນ 1 ທ່ານ, ປະລິນຍາໂທ ຈໍານວນ 63 ທ່ານ, ຍິງ 20 ທ່ານ, ປະລິນຍາຕີ ຈໍານວນ 153 ທ່ານ, ຍິງ 74 ທ່ານ; ຊັ້ນສູງ ຈໍານວນ 11 ທ່ານ, ຍິງ 6 ທ່ານ. ຈົບລະດັບທິດສະດີຊັ້ນສູງ ຈໍານວນ 34 ສະຫາຍ, ຍິງ 6 ສະຫາຍ, ຊັ້ນກາງ ຈໍານວນ 2 ສະຫາຍເພດຍິງ, ຊັ້ນຕົ້ນ 1 ສະຫາຍເພດຍິງ, ບໍ່ໄດ້ຜ່ານທິດສະດີ ຈໍານວນ 93 ສະຫາຍ, ຍິງ 35 ສະຫາຍ. ນອກນີ້ໄດ້ສົ່ງພະນັກງານໄປຝຶກອົບຮົມທິດສະດີການເມືອງຂັ້ນຕົ້ນ ໄລຍະ 3 ເດືອນຈໍານວນ 65 ສະຫາຍ, ຍິງ 23 ສະຫາຍ, ໄລຍະສັ້ນ 45 ວັນຈໍານວນ 98 ສະຫາຍ, ຍິງ 46 ສະຫາຍ, ຝຶກອົບຮົມວຽກງານໄອຍະການແກ່ພະນັກງານວິຊາການທີ່ຈະຂຶ້ນເປັນຜູ້ຊ່ວຍພະນັກງານໄອຍະການ ມີຈໍານວນ 9 ທ່ານ, ຍິງ 3 ທ່ານ ແລະ ໄດ້ຈັດກອງປະຊຸມຖອດຖອນບົດຮຽນໃນການຕິດຕາມກວດກາດໍາເນີນຄະດີອາຍາກ່ຽວກັບອາຊະຍະກໍາສັດນໍ້າ ແລະ ສັດປ່າຂອງອົງການໄອຍະການປະຊາຊົນເຊັ່ນ: ຝຶກອົບຮົມອະນຸລັກສັດປ່າ ປະຈໍາ ສປປ ລາວ, ອົງການຢູນິເຊບ, ອົງການໄຈກ້າ, ແຜນງານ ASEAN-ACT, ອົງການມູນນິທິເອເຊຍ ປະຈໍາ ສປປ ລາວ, ໂຄງການໃຫ້ບໍລິການທາງກົດໝາຍ ແລະ ການເສີມຂະຫຍາຍຂີດຄວາມສາມາດໃຫ້ຝຶກອົບຮົມ ແລະ ສະຖາບັນຝຶກອົບຮົມທາງດ້ານຍຸຕິທໍາ ຢູ່ ສປປ ລາວ ມີຈໍານວນ 154 ທ່ານ, ຍິງ 74 ທ່ານ, ຈັດກອງປະຊຸມເຜີຍແຜ່ປື້ມຄູ່ມືການຕິດຕາມກວດກາການດໍາເນີນຄະດີອາຍາການຄ້າມະນຸດ ແລະ ຄໍາແນະນໍາຮ່ວມລະຫວ່າງອົງການໄອຍະການປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສານປະຊາຊົນສູງສຸດ ທີ່ແຂວງຫຼວງພະບາງ ແລະ ແຂວງ

ວຽງຈັນ, ມີຈໍານວນ 157 ທ່ານ, ຍິງ 44 ທ່ານ, ຈັດກອງປະຊຸມຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂຢາເສບຕິດ ຂອງອົງການໄອຍະການປະຊາຊົນສູງສຸດ ທີ່ແຂວງຄໍາມ່ວນ, ມີຈໍານວນທັງໝົດ 92 ທ່ານ, 35 ທ່ານ, ຈັດຝຶກອົບຮົມວຽກງານໄອຍະການໃຫ້ແກ່ພະນັກງານວິຊາການກົດໝາຍ ຂອງອົງການໄອຍະການປະຊາຊົນທົ່ວປະເທດ, ມີຈໍານວນ 120 ທ່ານ, ຍິງ 40 ທ່ານ.

ສົ່ງໄປບໍາລຸງຢູ່ຕ່າງປະເທດ, ໄດ້ຝຶກອົບຮົມພະນັກງານໄອຍະການ ທີ່ໂຮງຮຽນບໍາລຸງກໍ່ສ້າງພະນັກງານໄອຍະການນະຄອນໂຮ່ຈິມິງ ສສ ຫວຽດນາມ ຈໍານວນ 20 ທ່ານ, ຍິງ 12 ທ່ານ, ບໍາລຸງກົດໝາຍ ແລະ ປົກຄອງຢູ່ມະຫາວິທະຍາໄລກວາງຊີ ສປ ຈີນ (ໄລຍະ 15 ວັນ) ຈໍານວນ 15 ທ່ານ ຍິງ 7 ທ່ານ, ໄດ້ຝຶກອົບຮົມໃຫ້ພະນັກງານເຂົ້າຮ່ວມວຽກງານໄອຍະການ ທີ່ສະຖາບັນກວາງຊີ ສປ ຈີນ (ໄລຍະ 10 ວັນ) ຈໍານວນ 15 ທ່ານ ຍິງ 6 ທ່ານ. ການຍົກສູງຄຸນນະພາບການກໍ່ສ້າງ, ບໍາລຸງພະນັກງານ ໂດຍເນັ້ນໜັກໃສ່ 3 ດ້ານຄື: ຄຸນທາດດ້ານການເມືອງ, ຄວາມຮູ້ທາງດ້ານທິດສະດີ, ວິຊາສະເພາະນັບທັງພາສາຕ່າງປະເທດ, ແບບແຜນວິທີການນໍາພາໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ໂດຍຖືເອົາຄຸນທາດການເມືອງເປັນກົກເພື່ອໃຫ້ເປັນພົນລະເມືອງ, ພະນັກງານ-ລັດຖະກອນມີຄວາມຮູ້, ຄວາມສາມາດ, ມີສຸຂະພາບແຂງແຮງ, ມີຄຸນທາດການເມືອງໜັກແໜ້ນ, ມີນໍ້າໃຈຮັກຊາດ, ຮັກລະບອບໃໝ່, ມີແບບແຜນດໍາລົງຊີວິດທີ່ສົດໃສກ້າວໜ້າ, ມີຄວາມສີວິໄລທາງດ້ານຈິດໃຈ, ມີລະບຽບວິໄນເຂັ້ມງວດ ແລະ ຍຸຕິທໍາ.

ປະຈຸບັນອົງການໄອຍະການປະຊາຊົນສູງສຸດປະກອບມີກົງຈັກຊ່ວຍວຽກຄື: ມີຄະນະກໍາມະການໄອຍະການປະຊາຊົນ, ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ, ເຝິກອົບຮົມໄອຍະການ ແລະ ບັນດາພະແນກ; ພະນັກງານ-ລັດຖະກອນຢູ່ອົງການໄອຍະການປະຊາຊົນສູງສຸດ ມີທັງໝົດ 228 ທ່ານ, ຍິງ 100 ທ່ານ, ພະນັກງານການນໍາຂັ້ນສູງມີ 1 ທ່ານ (ກໍາມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ), ມີຮອງ 2 ທ່ານ, ຮອງເລຂາຄະນະບໍລິຫານງານພັກ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ກໍາມະການຄະນະປະຈໍາພັກ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ; ຂັ້ນຫົວໜ້າກົມມີ 10 ທ່ານ, ຍິງ 3 ທ່ານ, ຮອງຫົວໜ້າກົມມີ 22 ທ່ານ, ຍິງ 5 ທ່ານ, ຂັ້ນຫົວໜ້າພະແນກມີ27 ທ່ານ, ຍິງ 10 ທ່ານ, ຂັ້ນຮອງຫົວໜ້າພະແນກມີ 50 ທ່ານ, ຍິງ 17 ທ່ານ.

ຄຽງຄູ່ຜົນສໍາເລັດຄືດັ່ງກ່າວ ກໍ່ຍັງມີຂໍ້ຄົງຄ້າງຈໍານວນໜຶ່ງທີ່ອົງການໄອຍະການປະຊາຊົນສູງສຸດຈະຕອ້ງສືບຕໍ່ເອົາໃຈໃສ່ຕໍ່ວຽກງານການກໍ່ສ້າງ-ບໍາລຸງພະນັກງານເປັນຕົ້ນແມ່ນ:

1. ພາຍຫຼັງທີ່ມີການສ້າງແຜນກໍານົດພະນັກງານສໍາເລັດແລ້ວນັ້ນ, ການຂຶ້ນແຜນກໍ່ສ້າງ-ບໍາລຸງພະນັກງານ ຍັງມີຄວາມຊັກຊ້າ, ການກໍ່ສ້າງ-ບໍາລຸງພະນັກງານບໍ່ທັນຖືກຕ້ອງຕາມມາດຕະຖານເງື່ອນໄຂທີ່ກໍານົດໄວ້ ໝາຍຄວາມວ່າ: ພາຍຫຼັງມີແຜນກໍານົດແລ້ວ, ແຕ່ແຜນກໍ່ສ້າງ, ບໍາລຸງຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ແລະ ຈຸດປະສົງຂອງການສົ່ງພະນັກງານໄປກໍ່ສ້າງ-ບໍາລຸງ ເພື່ອຫຍັງ, ຕ້ອງບັນລຸຄວາມຮູ້ດ້ານໃດ ແລະ ເພື່ອບັນຈຸສັບຊ້ອນໃສ່ຕໍາແໜ່ງໃດ, ຈໍານວນໜຶ່ງແມ່ນສົ່ງໄປກໍ່ສ້າງ-ບໍາລຸງຕາມຄວາມຕ້ອງການດ້ານວຸດທິການສຶກສາຂອງບຸກຄົນ ເພື່ອມີໜ້າຕາໃນສັງຄົມ; ມີບາງ

ບ່ອນຄະນະພັກບໍ່ທັນກໍາໄດ້ເປົ້າໝາຍ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ, ບໍ່ທັນຮູ້ແຈ້ງວ່າເປົ້າໝາຍໃດທີ່ຕ້ອງການສົ່ງໄປກໍ່ສ້າງ ແລະ ເປົ້າໝາຍໃດສົ່ງໄປບໍາລຸງ.

2. ການຂຶ້ນແຜນການກໍ່ສ້າງ ແລະ ບໍາລຸງພະນັກງານ ຍັງປະຕິບັດບໍ່ທັນໄດ້ດີ, ເຖິງວ່າມີກໍານົດແຜນການໄວ້ແລ້ວ, ແຕ່ການປະຕິບັດບາງຄັ້ງຄາວຍັງບໍ່ທັນເປັນໄປຕາມແຜນການທີ່ກໍານົດໄວ້, ຂັ້ນຕອນ ແລະ ວິທີການປະຕິບັດຍັງບໍ່ທັນເອກະພາບກັນເທົ່າທີ່ຄວນ ການເລືອກເຟັ້ນພະນັກງານໄປກໍ່ສ້າງ ແລະ ບໍາລຸງ ບາງຄັ້ງຍັງບໍ່ທັນອີງໃສ່ມາດຕະຖານ-ເງື່ອນໄຂ ທີ່ກໍານົດໄວ້ຢ່າງເຂັ້ມງວດ, ການລົງທຶນກໍ່ສ້າງ ແລະ ບໍາລຸງພະນັກງານຍັງມີຄວາມຈໍາກັດຫຼາຍດ້ານ, ເຖິງແມ່ນວ່າມີກໍ່ຍັງບໍ່ມີໄດ້ກໍານົດຈຸດສຸມລະອຽດ, ສົ່ງໄປຮຽນແລ້ວຍັງຂາດການຕິດຕາມ-ກວດກາ ບໍ່ເບິ່ງແຍງດູແລ, ອັນເຮັດໃຫ້ພະນັກງານຈໍານວນໜຶ່ງ ຄວາມບຸກບືນສູ້ຊົນໃນການພັດທະນາຕົນເອງບໍ່ສູງ.

2. ການຄຸ້ມຄອງພະນັກງານ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ກໍາພະນັກງານບໍ່ແໜ້ນ, ຂາດກົນໄກ ກວດກາຕິດຕາມຢ່າງຕໍ່ເນື່ອງ, ການປະຕິບັດກົດໝາຍພະນັກງານ-ລັດຖະກອນ ຍັງບໍ່ທັນຄົບຖ້ວນ ແລະ ເຂັ້ມງວດ, ການແບ່ງໜ້າທີ່ຮັບຜິດຊອບ ແລະ ກໍານົດຕໍາແໜ່ງງານຍັງບໍ່ທັນລະອຽດຈະແຈ້ງເທົ່າທີ່ຄວນ.

3. ການກໍ່ສ້າງ-ບໍາລຸງພະນັກງານ ບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການອັນຮີບດ່ວນຂອງໜ້າທີ່ການເມືອງ ໂດຍສະເພາະແມ່ນການບໍາລຸງ-ກໍ່ສ້າງພະນັກງານທາງດ້ານວິຊາຊີບ ໃຫ້ເປັນວິຊາການທີ່ຊໍານານງານ, ເປັນຊ່ຽວຊານຢູ່ແຕ່ລະຂະແໜງການບໍ່ທັນໄດ້ຮັບການເອົາໃຈໃສ່ເທົ່າທີ່ຄວນ ແລະ ການຊອກຫາແຫຼ່ງທຶນຍັງບໍ່ທັນເຮັດໄດ້ດີ, ຍັງມີລັກສະນະລໍຖ້າແຕ່ທຶນຂອງລັດ; ພະນັກງານຈໍານວນໜຶ່ງຄວາມກະຕືລືລົ້ນໃນການຍົກລະດັບຄວາມຮູ້ຂອງຕົນເອງບໍ່ທັນສູງ, ບໍ່ທັນເອົາໃຈໃສ່ຊອກຮູ້ຮໍ່າຮຽນເທົ່າທີ່ຄວນ.

4. ການຕີລາຄາພະນັກງານ ແລະ ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານພົ້ນເດັ່ນໃນການເຄື່ອນໄຫວວຽກງານການຕີລາຄາຍັງມີລັກສະນະສະເລ່ຍ, ບໍ່ທັນສົມຄູ່ກັບຜົນງານຕົວຈິງ ແລະ ຍັງຂາດການກໍານົດນະໂຍບາຍສົ່ງເສີມຕໍ່ຜູ້ດີ, ຜູ້ເກັ່ງ, ຜູ້ຊໍານານໃນຂະແໜງການຕ່າງໆ; ການປະຕິບັດລະບອບນະໂຍບາຍ ຕໍ່ພະນັກງານທີ່ສົ່ງໄປກໍ່ສ້າງ-ບໍາລຸງ ຍັງບໍ່ທັນເໝາະກັບສະພາບເງື່ອນໄຂເສດຖະກິດຕົວຈິງ ເຮັດໃຫ້ການຍົກລະດັບຄວາມຮູ້ຍັງພົບຄວາມຫຍຸ້ງຍາກ.

ເພື່ອຍົກສູງວຽກງານກໍ່ສ້າງ-ບໍາລຸງພະນັກງານ ຢູ່ອົງການໄອຍະການປະຊາຊົນສູງສຸດໃຫ້ນັບມື້ມີຄຸນນະພາບ ແລະ ມີປະສິດທິຜົນສູງຂຶ້ນ, ສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ ກໍ່ຄືໃນສະເພາະໜ້າ ແລະ ຍາວນານນັ້ນ ຕາມທັດສະນະຂອງຜູ້ຂຽນຄວນເອົາໃຈໃສ່ດັ່ງນີ້:

ໜຶ່ງ, ການກໍ່ສ້າງພະນັກງານຕ້ອງເລີ່ມຈາກຄວາມຮຽກຮ້ອງຕ້ອງການຕົວຈິງຂອງໜ້າທີ່ການເມືອງ, ໜ້າທີ່ວຽກງານວິຊາສະເພາະ ແລະ ອີງໃສ່ການເຕີບໃຫຍ່ຂະຫຍາຍຕົວຂອງສູນກາງສະຫະພັນກໍາມະບານລາວເວົ້າລວມ, ເວົ້າສະເພາະແມ່ນການກໍ່ສ້າງ-ບໍາລຸງພະນັກງານຢູ່ໄອຍະການປະຊາຊົນສູງສຸດແຕ່ລະໄລຍະ, ການກໍ່ສ້າງ ແລະ ບໍາລຸງຕ້ອງມີແຜນກໍານົດພະນັກງານລະອຽດ ໂດຍອີງຕາມມະຕິວ່າດ້ວຍການສ້າງແຜນກໍານົດພະນັກງານນໍາພາ-ຄຸ້ມຄອງຂອງກົມການເມືອງສູນກາງພັກສະບັບເລກທີ 032/ກມສພ, ມະຕິວ່າດ້ວຍມາດຕະຖານຂອງພະນັກງານນໍາພາ-ຄຸ້ມຄອງ

ຂອງກົມການເມືອງສູນກາງພັກສະບັບເລກທີ 030/ກມສພ ເປັນພື້ນຖານ ພ້ອມກັນນັ້ນ, ກໍ່ຕ້ອງດຳເນີນການສ້າງແຜນກໍ່ສ້າງພະນັກງານ ໂດຍຕ້ອງມີເປົ້າໝາຍວ່າຈະເລັ່ງໃສ່ພະນັກງານຂັ້ນໃດ, ມີຂະແໜງການຫຍັງທີ່ຈຳເປັນ ແລະ ຂາດເຂີນບໍ່ຄວນສ້າງແບບລວມໆ ຫຼື ແລ້ວແຕ່ຂັ້ນເທິງຈະແບ່ງໃຫ້, ການກໍ່ສ້າງພະນັກງານນຳພາ-ຄຸ້ມຄອງຕ້ອງຖືເອົາຄຸນນະພາບເປັນກົກ.

ສອງ, ອົງການເສນາທິການທີ່ມີໜ້າທີ່ຮັບຜິດຊອບກ່ຽວກັບວຽກງານກໍ່ສ້າງ-ບຳລຸງພະນັກງານເຊັ່ນ: ກົມຈັດຕັ້ງ-ພະນັກງານ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການຕ້ອງເສີມຂະຫຍາຍບົດບາດເປັນເສນາທິການໃຫ້ແກ່ຄະນະຄະນະພັກ, ຄະນະນຳຕ້ອງເອົາໃຈໃສ່ໃນການຈັດວາງສັບຊ້ອນ, ເລືອກເຟັ້ນ, ສ້າງແຜນກຳນົດ ແລະ ສັງລວມປະເມີນຄວາມຕ້ອງການໃນສະເພາະໜ້າ ແລະ ຍາວນານ ໃນແຕ່ລະປະເພດພະນັກງານ, ແຕ່ລະຂະແໜງການໃຫ້ລະອຽດຈະແຈ້ງ, ຕ້ອງຄາດຄະເນຄວາມອາດສາມາດມີການປ່ຽນແປງ ແລະ ປັບປຸງລະບົບການຈັດຕັ້ງ, ຄົ້ນຄວ້າປະກອບຄົນໃສ່ວຽກໃຫ້ຖືກຕ້ອງຕາມໜ້າທີ່ວຽກງານວິຊາສະເພາະ ແລະ ຄວາມຊຳນິຊຳນານງານໃນປະສົບການຕົວຈິງ. ພ້ອມກັນນັ້ນ, ສະຖາບັນຄົ້ນຄວ້າແລະຝຶກອົບຮົມໄອຍະການ ກໍ່ຕ້ອງສ້າງຫຼັກສູດການຮຽນ-ການສອນໃຫ້ເປັນລະບົບ, ເຮັດຢ່າງຕໍ່ເນື່ອງ, ເປັນປົກກະຕິ ຈຶ່ງຈະສາມາດຮັບປະກັນຄຸນນະພາບໃນການກໍ່ສ້າງ ແລະ ບຳລຸງພະນັກງານໄອຍະການໃນອະນາຄົດ.

ສາມ, ຄະນະພັກແຕ່ລະຂັ້ນ ຕ້ອງໄດ້ເອົາໃຈໃສ່ຢ່າງຈິງຈັງກ່ຽວກັບການຍົກສູງຄຸນນະພາບຂອງວຽກງານພະນັກງານ, ຖືເອົາບັນຫານີ້ເປັນກົກ ເພາະຖ້າສ້າງໄດ້ພະນັກງານດີເດັ່ນມີຄຸນນະພາບ, ມີຄວາມຮູ້ຄວາມສາມາດ, ມີທັດສະນະຫຼັກໝັ້ນ, ມີຄວາມຊື່ສັດບໍລິສຸດກໍ່ຈະເຮັດໃຫ້ຄະນະພັກແຕ່ລະຂັ້ນມີຄວາມເຂັ້ມແຂງ, ສາມາດເປັນຕົວແທນໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ, ສາມາດເຮັດສຳເລັດໜ້າທີ່ການເມືອງຂອງພັກ, ປະເທດຊາດມີຄວາມໝັ້ນຄົງ ແລະ ມີສະຖຽນລະພາບ, ສັງຄົມມີຄວາມສີວິໄລ ແລະ ຍຸຕິທຳ.

ສັງລວມແລ້ວ: ການຍົກສູງວຽກງານກໍ່ສ້າງ-ບຳລຸງພະນັກງານ ຢູ່ອົງການໄອຍະການປະຊາຊົນສູງສຸດແມ່ນການສ້າງຄວາມເຂັ້ມແຂງພາຍໃນອົງການ, ແມ່ນຄວາມຈຳເປັນຕ້ອງໄດ້ຍົກສູງໄປຄຽງຄູ່ກັບບັນດາກົງຈັກທົ່ວລະບົບການເມືອງ, ຕິດພັນກັບການພັດທະນາລະບົບການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການນິຕິບັນຍັດ, ສານປະຊາຊົນ ແລະ ອົງການຈັດຕັ້ງອື່ນໆ ເພື່ອຮັບປະກັນການບໍລິການຮັບໃຊ້ວຽກງານທຸກຂະແໜງການໃຫ້ມີຄວາມເຂັ້ມແຂງຮັບປະກັນຈຸດໝາຍປາຍທາງ ແລະ ປະຕິບັດໄດ້ຕາມແຜນການ, ແຜນຍຸດທະສາດ, ວິໄສທັດທີ່ຂັ້ນເທິງວາງໄວ້. ພ້ອມນັ້ນຍັງເອົາໃຈໃສ່ຍົກສູງຄຸນນະພາບການກໍ່ສ້າງ-ບຳລຸງພະນັກງານທີ່ເຮັດວຽກຈັດຕັ້ງພະນັກງານໃຫ້ຮັບປະກັນດ້ານວິຊາສະເພາະ, ມີຄວາມຊຳນິຊຳນານບົນພື້ນຖານການກໍ່ສ້າງ-ບຳລຸງ ເພື່ອເຮັດໜ້າທີ່ຕາມລະບຽບກົດໝາຍມີຄວາມເຂັ້ມງວດ, ທັງເປັນການຍົກລະດັບພາລະບົດບາດຂອງອົງການໄອຍະການປະຊາຊົນສູງສຸດໃຫ້ມີຄຸນນະພາບ, ເປັນພື້ນຖານໃຫ້ການສ້າງລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວ ປະຊາຊົນໄດ້ຮັບຄວາມຍຸຕິທຳຕໍ່ລະບຽບກົດໝາຍ...ຯ

ເພີ່ມທະວີການນຳພາຂອງພັກ ຕໍ່ກັບວຽກງານ ພະນັກງານ ຢູ່ກະຊວງເຕັກໂນໂລຊີ ແລະ ການສື່ສານ

ໂດຍ: ອອນ ພອນວັນດີດ

ພັກເຮົາດຳເນີນພາລະກິດປ່ຽນແປງໃໝ່ທີ່ມີຫຼັກການຮອບດ້ານ ຂອງພັກຕາມກົນໄກເສດຖະກິດຕະຫຼາດ; ແນໃສ່ສ້າງພື້ນຖານເສດຖະກິດໃຫ້ມີການເຕີບໂຕຢ່າງຕໍ່ເນື່ອງ ເພື່ອຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ສືບຕໍ່ກໍ່ສ້າງບັນດາປະຖົມປັດໃຈໃຫ້ແກ່ການກ້າວຂຶ້ນຕາມຈຸດໝາຍສັງຄົມນິຍົມຂອງປະເທດຊາດເທື່ອລະກ້າວນັ້ນ; ຕໍ່ໜ້າສະພາບດັ່ງກ່າວ, ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ການເລັ່ງທວງຂອງສະພາບການໃນໄລຍະໃໝ່, ພັກເຮົາມີຄວາມຈຳເປັນຕ້ອງໄດ້ສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງວຽກງານພະນັກງານ ເພື່ອແກ້ໄຂຄວາມບໍ່ເປັນເອກະພາບ, ຄວາມບໍ່ເຂັ້ມງວດຕໍ່ທິດນຳ, ຫຼັກການ ຂອງພັກ, ກົດໝາຍ, ລະບຽບການ ກ່ຽວກັບການປະຕິບັດວຽກງານພະນັກງານ ແລະ ການເສື່ອມຖອຍດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດກໍຄືປະກົດການຫຍໍ້ທໍ້ຕ່າງໆ ໃນຖັນແຖວພະນັກງານຢ່າງເຂັ້ມງວດ.

ສະນັ້ນ, ການເພີ່ມທະວີການນຳພາຂອງພັກ ຕໍ່ກັບວຽກງານພະນັກງານແມ່ນໜ້າທີ່ຍຸດທະສາດສຳຄັນ ຂອງພັກ ແລະ ລັດເວົ້າລວມ, ເວົ້າສະເພາະແມ່ນຄວາມຮັບຜິດຊອບຂອງຄະນະພັກກະຊວງເຕັກໂນໂລຊີ ແລະ ການສື່ສານແມ່ນຄວາມຈຳເປັນພາວະວິໄສ, ທັງເປັນຄວາມຮຽກຮ້ອງຕ້ອງການຂອງການປະຕິວັດໃນເງື່ອນໄຂໃໝ່, ພັກເຮົາຍາມໃດກໍ່ໃຫ້ທັດສະນະວ່າ: ພະນັກງານເປັນກ້ອນທຶນອັນປະເສີດຂອງພັກ, ຂອງປະຊາຊົນ, ເປັນຜູ້ຕັດສິນຜົນໄດ້ຜົນເສຍໃນການຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ໃນພຶດຕິກຳໄດ້ຊີ້ໃຫ້ເຫັນວ່າ: ພະນັກງານເປັນຜູ້ເຜີຍແຜ່ ແລະ ຈັດຕັ້ງປະຕິບັດແນວທາງຂອງພັກ, ເປັນຜູ້ເກັບກຳລາຍງານສະພາບການຄວາມມຸ່ງມາດປາຖະໜາຂອງປະຊາຊົນ ເພື່ອລາຍງານໃຫ້ຂັ້ນເທິງ ແລະ ນຳເອົາສະພາບການຂ່າວສານຕ່າງໆໄປເຜີຍແຜ່ໃຫ້ປະຊາຊົນຮັບຮູ້ ແລະເຂົ້າໃຈ; ເວົ້າລວມແລ້ວພະນັກງານເປັນຂົວຕໍ່ລະຫວ່າງຂັ້ນເທິງກັບປະຊາຊົນ, ບໍ່ວ່າຢູ່ໃນຂົງເຂດໃດກໍ່ຕາມວຽກງານຈະດີ ຫຼື ອ່ອນ, ຊ້າ ຫຼື ໄວ, ມີປະສິດທິຜົນ ຫຼື ບໍ່ມັນຂຶ້ນກັບພະນັກງານເປັນຜູ້ຕັດສິນ.

ຄະນະພັກກະຊວງເຕັກໂນໂລຊີ ແລະ ການສື່ສານເວລາໃດກໍຍົກສູງຄວາມຮັບຜິດຊອບຂອງຕົນເອງຕໍ່ວຽກງານພະນັກງານ ເປັນຍຸດທະສາດສຳຄັນ ແລະ ເປັນວຽກງານອັນຮີບດ່ວນ ຂອງອົງຄະນະພັກກະຊວງແມ່ນການເສີມຂະຫຍາຍຄຸນປະໂຫຍດດ້ານຕັ້ງໜ້າຂອງຖັນແຖວພະນັກງານ, ຍົກສູງຄຸນນະພາບພະນັກງານໃຫ້ສົມກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນຊຸມ

ປີຜ່ານມາ ອົງຄະນະພັກກະຊວງເຕັກໂນໂລຊີ ແລະ ການສື່ສານໄດ້ເອົາໃຈໃສ່ຊີ້ນຳ-ນຳພາຕໍ່ວຽກງານດັ່ງກ່າວດ້ວຍຄວາມເປັນເຈົ້າການຢ່າງແທດເຖິງ, ນຳພາເຄື່ອນໄຫວວຽກງານພະນັກງານຕາມແນວທາງຂອງພັກ, ຍົກສູງຄວາມຮັບຜິດຊອບຂອງອົງການເສນາທິການທີ່ເຮັດວຽກງານພັກ-ພະນັກງານໃນການຈັດຕັ້ງຜັນຂະຫຍາຍບັນດານິຕິກຳຕ່າງໆທີ່ຕິດພັນກັບວຽກງານພະນັກງານເຊັ່ນ: ມະຕິກົມການເມືອງສູນກາງພັກສະບັບເລກທີ 030/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍມາດຕະຖານພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງກົມການເມືອງສູນກາງພັກສະບັບເລກທີ 031/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍວຽກງານຄຸ້ມຄອງພະນັກງານ ແລະ ມະຕິຂອງກົມການເມືອງສູນກາງພັກສະບັບເລກທີ 032/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງກົມການເມືອງສູນກາງພັກ ເລກທີ 073/ກມສພ, ລົງວັນທີ 14 ພຶດສະພາ 2019 ມະຕິວ່າດ້ວຍການສ້າງແຜນກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ແລະ ບົດແນະນຳຂອງຄະນະຈັດຕັ້ງສູນກາງພັກສະບັບເລກທີ 292/ຄຈສພ,ລົງວັນທີ 26 ເມສາ 2018 ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກວ່າດ້ວຍມາດຕະຖານພະນັກງານນຳພາ-ຄຸ້ມຄອງ, ວຽກງານຄຸ້ມຄອງພະນັກງານ ແລະ ວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງຄະນະບໍລິຫານງານສູນ ກາງພັກ ສະບັບເລກທີ 04/ຄບສພ, ລົງວັນທີ 30 ກັນຍາ 2021 ວ່າດ້ວຍການເພີ່ມທະວີການນຳພາຂອງພັກ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງວຽກງານພະນັກງານ ເພື່ອເຮັດໃຫ້ວຽກງານພະນັກງານສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກ ກໍ່ຄືອົງຄະນະພັກກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ສຸມໃສ່ຈັດຕັ້ງປະຕິບັດໃນໄລຍະຜ່ານມາສະແດງອອກໃນແຕ່ລະໜ້າວຽກດັ່ງນີ້:

ການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ: ຜ່ານມາຄະນະພັກ, ຄະນະນຳແຕ່ລະຂັ້ນໄດ້ເອົາໃຈໃສ່ຊີ້ນຳການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງເປັນເຈົ້າການບົນພື້ນຖານການເສີມຂະຫຍາຍປະຊາທິປະໄຕຢ່າງກວ້າງຂວາງ ໂດຍໃຫ້ພະນັກງານຫຼັກແຫຼ່ງມີສ່ວນຮ່ວມໃນການຄົ້ນຄວ້າປະກອບຄຳຄິດເຫັນ ແລະ ລົງຄະແນນສຽງຕໍ່ເປົ້າໝາຍທີ່ຈະເຂົ້າໃນແຜນກຳນົດແຕ່ລະປະເພດ. ແຜນກຳນົດດັ່ງກ່າວໄດ້ເປັນບ່ອນອີງອັນສຳຄັນໃນການວາງແຜນບຳລຸງ-ກໍ່ສ້າງພະນັກງານໃນແຕ່ລະດ້ານ ແລະ ສັບຊ້ອນ, ຈັດວາງເພາະໃນແຜນກຳນົດໄດ້ລະບຸຈະແຈ້ງວ່າຢູ່ໃນຕຳແໜ່ງມີເປົ້າໝາຍທີ່ຈະສ້າງສືບທອດໃນຕໍ່ໜ້າ;

ວຽກງານຄຸ້ມຄອງ-ປ້ອງກັນພະນັກງານ: ປະຕິບັດຕາມຫຼັກການນຳພາຂອງພັກໂດຍກົງ, ເປັນເອກະພາບ ແລະ ມີການແບ່ງງານຂັ້ນຄຸ້ມຄອງພະນັກງານຢ່າງຈະແຈ້ງ, ຄະນະພັກແຕ່ລະຂັ້ນໄດ້ຄຸ້ມຄອງປ້ອງກັນພະນັກງານຕາມຂອບເຂດສິດຂອງຕົນ; ນຳໃຊ້ເຕັກໂນໂລຊີເຂົ້າໃນການຄຸ້ມຄອງຂໍ້ມູນບັນຊີ, ສະຖິຕິ ເຮັດໃຫ້ຂໍ້ມູນພະນັກງານເປັນລະບົບຊັດເຈນຂຶ້ນ; ເກັບກຳຊີວະປະຫວັດຕົ້ນກຳເນີດ, ປະຫວັດການເຄື່ອນໄຫວ, ການພົວພັນສັງຄົມ, ຄວາມຮູ້, ຄວາມສາມາດ, ຄວາມສຳນານງານ, ສາມາດເປັນພື້ນຖານໃຫ້ແກ່ການຄົ້ນຄວ້າ, ສັບຊ້ອນ, ຈັດວາງ ແລະ ການປະຕິບັດນະໂຍບາຍພະນັກງານໄດ້ດີພໍສົມຄວນ; ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີພະນັກງານ-ລັດຖະກອນທັງໝົດຈຳນວນ 627 ຄົນ, ຍິງ 267ຄົນ, ໃນນີ້ມີ ລັດຖະມົນຕີ,

ຮອງລັດຖະມົນຕີ ຈໍານວນ 04 ຄົນ ແລະ ມີຜູ້ຊ່ວຍຄະນະນໍາກະຊວງຈໍານວນ 04 ຄົນ, ຕໍາແໜ່ງບໍລິຫານປະເພດ 1 ມີ 2 ຄົນ, ຕໍາແໜ່ງບໍລິຫານປະເພດ 2 ມີ 17 ຄົນ, ຕໍາແໜ່ງບໍລິຫານປະເພດ 3 ມີ 46 ຄົນ, ຍິງ 13 ຄົນ, ຕໍາແໜ່ງບໍລິຫານປະເພດ 4 ມີ 94 ຄົນ, ຍິງ 39 ຄົນ, ຕໍາແໜ່ງບໍລິຫານປະເພດ 5 ມີ 155 ຄົນ, ຍິງ 70 ຄົນ. ເຫັນໄດ້ວ່າ ຖັນແຖວພະນັກງານ-ສະມາຊິກພັກຢູ່ກະຊວງເຕັກໂນໂລຊີ ແລະ ການສື່ສານໄດ້ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ; ສາມາດເປັນຫຼັກແຫຼ່ງແກ່ນສານຂອງພັກ-ລັດຢູ່ໃນກົມກອງທ້ອງຖິ່ນໃນການຊີ້ນໍາ-ນໍາພາ, ຈັດຕັ້ງຜັນຂະຫຍາຍແຜນແນວທາງນະໂຍບາຍ, ລະບຽບຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດມີຜົນສໍາເລັດເປັນກ້າວໆມາ.

ວຽກງານບໍາລຸງ-ກໍ່ສ້າງພະນັກງານ: ຄະນະພັກແຕ່ລະຂັ້ນໄດ້ເອົາໃຈໃສ່ກໍ່ສ້າງ-ບໍາລຸງພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍໄດ້ສົ່ງພະນັກງານໄປຍົກລະດັບທິດສະດີການເມືອງ ແລະ ການປົກຄອງ ຢູ່ພາຍໃນ ແລະ ຕ່າງປະເທດ ທັງໄລຍະສັ້ນ ແລະ ໄລຍະຍາວ, ເປັນເຈົ້າການໃນການປະຕິບັດຕາມທິດບຸກທະລຸທາງດ້ານຊັບພະຍາກອນມະນຸດ ໄດ້ຖືເອົາການກໍ່ສ້າງພະນັກງານຕາມແຜນກໍານົດພະນັກງານ, ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 072/ກມສພ, ລົງວັນທີ 14 ພຶດສະພາ 2019 ໂດຍປະຕິບັດຕາມແຈ້ງການຂອງຄະນະຈັດຕັ້ງສູນການພັກ ບົນພື້ນຖານແມ່ນຕິດພັນກັບການຂຶ້ນແຜນກໍານົດ-ກໍ່ສ້າງພະນັກງານນໍາພາ-ຄຸ້ມຄອງ ຢູ່ແຕ່ລະຂັ້ນໃຫ້ເປັນລະບົບຕໍ່ເນື່ອງ. ສົ່ງໄປກໍ່ສ້າງ-ບໍາລຸງພະນັກງານດ້ານວິຊາສະເພາະ ແລະ ດ້ານທິດສະດີທັງພາຍໃນ ແລະ ຕ່າງປະເທດໄດ້ທັງໝົດ 155 ສະຫາຍ; ໃນນັ້ນ, ດ້ານທິດສະດີການເມືອງ: ຮຽນບໍາລຸງ 45 ວັນຈໍານວນ 3 ຊຸດມີຈໍານວນຜູ້ເຂົ້າຮ່ວມທັງໝົດ 129 ສະຫາຍ, ຍິງ 65 ສະຫາຍ, ຂັ້ນສູງ 2 ສະຫາຍ; ດ້ານວິຊາສະເພາະ: ປະລິນຍາຕີ 4 ສະຫາຍ, ຍິງ 2 ສະຫາຍ, ປະລິນຍາໂທ 20 ສະຫາຍ, ຍິງ 8 ສະຫາຍ ແລະ ຝຶກອົບຮົມວິຊາສະເພາະຕ່າງໆທັງພາຍໃນ ແລະ ຕ່າງປະເທດ 90 ທ່ານ, ຍິງ 27 ທ່ານ; ພ້ອມດຽວກັນນັ້ນ, ກໍ່ເອົາໃຈໃສ່ກໍ່ສ້າງພະນັກງານກັບທີ່ເປັນສ່ວນຫຼາຍຕິດພັນກັບຂະບວນການຕົວຈິງຢູ່ຂັ້ນຮາກຖານ.

ວຽກງານປະຕິບັດນະໂຍບາຍ: ໄດ້ເອົາໃຈໃສ່ປະຕິບັດລະບອບນະໂຍບາຍ ແລະ ສະຫວັດດີການ ຕໍ່ພະນັກງານ-ລັດຖະກອນ ເປັນຕົ້ນແມ່ນປະຕິບັດນະໂຍບາຍພະນັກງານເກີດລູກ, ຄອບຄົວຂອງພະນັກງານ ເຈັບເປັນນອນໂຮງໝໍ, ຄອບຄົວພະນັກງານເກີດລູກ, ພະນັກງານບໍານານ, ຄອບຄົວພະນັກງານເສຍຊີວິດ; ຂໍອອກບັດປະກັນສັງຄົມໃຫ້ພະນັກງານ ແລະ ຄອບຄົວພະນັກງານຈໍານວນ 45 ບັດ; ປະຕິບັດນະໂຍບາຍເງິນອຸດໜູນເກີດລູກນໍາປະກັນສັງຄົມໃຫ້ແກ່ຄອບຄົວພະນັກງານ ແລະ ພະນັກງານຈໍານວນ 68 ຄົນ, ອະນຸມັດໃຫ້ພະນັກງານອອກພັກການຮັບອຸດໜູນບໍານານຂອງສູນກາງ 5 ຄົນ, ຍິງ 1 ທ່ານ ຕາມກົດໝາຍ ແລະ ລະບຽບການທີ່ ທີ່ໄດ້ກໍານົດໄວ້.

ຄຽງຄູ່ກັບຜົນງານ ແລະ ຄວາມເອົາໃຈໃສ່ຢ່າງຕັ້ງໜ້າ ຂອງຄະນະພັກກະຊວງເຕັກໂນໂລຊີ ແລະ ການສື່ສານໃນການຈັດຕັ້ງປະຕິບັດວຽກງານພະນັກງານ ເຫັນວ່າຍັງມີບາງດ້ານທີ່ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂເປັນຕົ້ນແມ່ນ:

1. ການສ້າງແຜນກໍ່ສ້າງ-ບໍາລຸງພະນັກງານທີ່ພວມດໍາລົງຕໍາແໜ່ງນໍາພາ-ຄຸ້ມຄອງ ກໍ່ຄືພະນັກງານສືບທອດປ່ຽນແທນຢູ່ບາງຂົງເຂດວຽກງານບໍ່ທັນສອດຄ່ອງກັບຄວາມເປັນຈິງຍັງບໍ່ທັນຕອບສະໜອງໄດ້ກັບຄວາມ

ຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່, ພະນັກງານເພດຍິງ, ເຜົ່າ ແລະ ການຫັນເປັນໜຸ່ມຍັງມີໜ້ອຍ; ການບັນຈຸສັບຊ້ອນພະນັກງານເຂົ້າໃນບັນດາຕໍາແໜ່ງງານຍັງມີລັກສະນະຊັກຊ້າ.

2. ການບໍາລຸງ-ກໍ່ສ້າງພະນັກງານຍັງບໍ່ທັນເປັນລະບົບຕໍ່ເນື່ອງ, ບໍ່ທັນຕິດແທດກັບແຜນພັດທະນາເສດຖະກິດ-ສັງຄົມ, ການກໍ່ສ້າງບໍ່ທັນຕິດພັນກັບການນໍາໃຊ້ພະນັກງານ, ບໍ່ທັນມີແຜນກໍານົດລະອຽດເພື່ອເປັນບ່ອນອີງໃນການບໍາລຸງ-ກໍ່ສ້າງພະນັກງານ, ບາງຂະແໜງການເຫຼືອ, ບາງຂະແໜງການຂາດພະນັກງານ, ຜູ້ທີ່ຮຽນຈົບມາແລ້ວກໍ່ຂາດການຕິດຕາມ, ຄຸ້ມຄອງ ແລະ ນໍາໃຊ້; ສະນັ້ນຈຶ່ງເກີດມີພະນັກງານເຫຼືອບໍ່ພໍ.

3. ການສັບຊ້ອນພະນັກງານຍັງບໍ່ຖືກກັບວິຊາສະເພາະ, ພອນສະຫວັນ ແລະ ຄວາມຮູ້-ຄວາມສາມາດຂອງແຕ່ລະຄົນທີ່ຮຽນມາ ແລະ ການຄົ້ນຄວ້າກໍານົດລະບອບນະໂຍບາຍຕໍ່ພະນັກງານບໍ່ທັນແທດເໝາະກັບເງື່ອນໄຂເສດຖະກິດ-ສັງຄົມປະຈຸບັນ.

4. ສະມາຊິກພັກ-ພະນັກງານຈໍານວນໜຶ່ງຄຸນທາດການເມືອງບໍ່ທັນໜັກແໜ້ນ, ຄວາມເປັນແບບຢ່າງໃນການປະຕິບັດລະບຽບຂອງພັກ, ກົດໝາຍຂອງລັດບໍ່ທັນໄດ້ດີ, ບໍ່ທັນເຂັ້ມງວດ, ສະຕິຕໍ່ການຈັດຕັ້ງ, ລະບຽບ, ກົດໝາຍ, ສວຍໃຊ້ໜ້າທີ່ຕໍາແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວ, ສໍ້ລາດບັງຫຼວງ ແລະ ອື່ນໆ.

ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານພະນັກງານໃຫ້ໄປຕາມທິດທີ່ກໍານົດໄວ້ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ເຮັດໃຫ້ວຽກງານຮັບປະກັນໄດ້ທາງດ້ານຄຸນນະພາບ, ພະນັກງານມີຄຸນສົມບັດສິນທໍາປະຕິວັດ, ມີຄວາມໜັກແໜ້ນທາງດ້ານການເມືອງ, ມີລະດັບຄວາມຮູ້ທາງດ້ານວິທະຍາສາດທີ່ແນ່ນອນນັບທາງດ້ານພາສາຕ່າງປະເທດສາມາດເຮັດຫຼ້ອນໜ້າທີ່ ທີ່ພັກ-ລັດ ແລະ ການຈັດຕັ້ງມອບໝາຍໃຫ້; ຄະນະພັກ, ອົງການເສນາທິການທີ່ເຮັດວຽກງານພະນັກງານ ຕ້ອງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດບາງເນື້ອໃນດັ່ງນີ້:

ໜຶ່ງ, ຄະນະພັກຕ້ອງຖືສໍາຄັນການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານເປັນປົກກະຕິ, ຍົກສູງສະຕິປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງເຂັ້ມງວດ ແນໃສ່ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນຖັນແຖວພະນັກງານ, ກໍາໃຫ້ໄດ້ ແລະ ເອົາໃຈໃສ່ແກ້ໄຂແຕ່ຫົວທີ ຕໍ່ຜູ້ທີ່ມີຈຸດອ່ອນ, ຂໍ້ບົກຜ່ອງ, ພ້ອມນັ້ນ ກໍ່ເອົາໃຈໃສ່ດໍາເນີນມາດຕະການທາງວິໄນຢ່າງເດັດຂາດຕໍ່ພະນັກງານລະເມີດລະບຽບກົດໝາຍ.

ສອງ, ຄະນະພັກຕ້ອງເພີ່ມທະວີຄວາມເປັນເຈົ້າການ ແລະ ຍົກສູງຄວາມຮັບຜິດຊອບຂອງຕົນຕໍ່ການຈັດຕັ້ງຜັນຂະຫຍາຍບັນດານິຕິກໍາຕ່າງໆ ກ່ຽວກັບວຽກພະນັກງານ ໂດຍສະເພາະແມ່ນມະຕິຂອງຄະນະບໍລິຫານງານສູນກາງພັກ ເລກທີ 04/ຄບສພ, ວ່າດ້ວຍການສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງໃນວຽກງານພະນັກງານ ແລະ ນິຕິກໍາທີ່ສ້າງຂຶ້ນໃໝ່ເປັນຕົ້ນ ມະຕິ ເລກທີ 21/ກມສພ, ລົງວັນທີ 08 ພະຈິກ 2022 ວ່າດ້ວຍການຕີລາຄາພະນັກງານ, ມະຕິເລກທີ 13/ກມສພ, ລົງວັນທີ 11 ມັງກອນ 2024 ວ່າດ້ວຍການເລືອກເຟັ້ນ ແຕ່ງຕັ້ງ, ສັບປ່ຽນໜ້າທີ່ ຂອງພະນັກງານນໍາພາ-ຄຸ້ມຄອງ, ບົດແນະນໍາ ເລກທີ 13/ຄຈສພ, ລົງວັນທີ 11 ມັງກອນ 2024 ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການເລືອກເຟັ້ນ ແຕ່ງຕັ້ງ, ສັບປ່ຽນໜ້າທີ່ຂອງພະນັກງານນໍາພາ-ຄຸ້ມຄອງ, ບົດແນະນໍາ ເລກທີ 14/ຄຈສພ, ລົງວັນທີ 11 ມັງກອນ 2024 ກ່ຽວກັບການຈັດຕັ້ງປະຕິບັດມະຕິ ຂອງ

ກົມການເມືອງສູນກາງພັກ ວ່າດ້ວຍການຕີລາຄາພະນັກງານ ເພື່ອນຳພາ-ຊີ້ນຳການຈັດຕັ້ງເຜີຍແຜ່, ເຊື່ອມຊຶມໃຫ້ເລິກເຊິ່ງ, ກວ້າງຂວາງ, ທົ່ວເຖິງ ແລະ ຜັນຂະຫຍາຍໃຫ້ເປັນອັນລະອຽດ, ສອດຄ່ອງກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ.

ສາມ, ອົງການຈັດຕັ້ງທີ່ມີບົດບາດເປັນເສນາທິການໃຫ້ແກ່ຄະນະພັກແຕ່ລະຂັ້ນກ່ຽວກັບວຽກງານພະນັກງານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງເອົາໃຈໃສ່ປະສານສົມທົບແຕ່ຫົວທີໃນການສ້າງ ແລະ ປັບປຸງນິຕິກຳກ່ຽວກັບວຽກງານພະນັກງານໃຫ້ຄົບຖ້ວນ, ຮັດກຸມ ແລະ ຈະແຈ້ງ, ທັງຈັດຕັ້ງເຜີຍແຜ່, ເຊື່ອມຊຶມນິຕິກຳເຫຼົ່ານັ້ນໃຫ້ຄະນະພັກແຕ່ລະຂັ້ນ ໃຫ້ຮັບຮູ້, ເຂົ້າໃຈ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ຊັດເຈນ, ພາວະວິໄສ, ເຂັ້ມງວດ ແລະ ມີປະສິດທິຜົນສູງ.

ສີ່, ຄະນະພັກຕ້ອງຖືສຳຄັນ ການປະຕິບັດລະບອບຄຸ້ມຄອງພະນັກງານຢ່າງເຂັ້ມງວດ, ມີລັກສະນະວິທະຍາສາດ, ຮັບປະກັນຄວາມຖືກຕ້ອງໂປ່ງໃສ, ຮອບຄອບ, ຖີ່ຖ້ວນ, ເລິກເຊິ່ງ, ຍຸຕິທຳ, ຮັດກຸມ ແລະ ເປັນລະບົບຕໍ່ເນື່ອງ ໂດຍເລີ່ມຈາກການເກັບກຳບັນຊີ, ສະຖິຕິ, ປະຫວັດຕົ້ນກຳເນີດ, ປະຫວັດການເຄື່ອນໄຫວ, ການພົວພັນສັງຄົມ ແລະ ການປ່ຽນແປງຂອງສະມາຊິກພັກ-ພະນັກງານ ແລະ ລັດຖະກອນ, ເສີມຂະຫຍາຍບົດບາດຕິດຕາມການກວດກາຂອງຄະນະກວດກາແຕ່ລະຂັ້ນ, ຜູ້ທີ່ເຮັດວຽກງານກວດກາ ແລະ ບັນດາອົງການຈັດຕັ້ງມະຫາຊົນ ຢ່າງໃກ້ຊິດ ແລະ ເປັນປົກກະຕິ.

ສັງລວມແລ້ວ, ພັກເຮົາໄດ້ຖືວຽກງານພະນັກງານເປັນວຽກຍຸດທະສາດໜຶ່ງທີ່ສຳຄັນ ແລະ ມີບົດບາດຕັດສິນທຸກວຽກງານ. ສະນັ້ນ, ຄະນະພັກ, ຄະນະນຳທຸກຂັ້ນ ໂດຍສະເພາະເສນາທິການການ, ຜູ້ເຮັດວຽກງານພະນັກງານຊ່ວຍຄະນະພັກກ່ຽວກັບວຽກງານພະນັກງານ ຕ້ອງຍົກສູງຄວາມຮັບຜິດຊອບ, ກຳແໜ້ນ, ຖືເອົາວຽກງານພະນັກງານເປັນໜ້າທີ່ໃຈກາງ ແລະ ເປັນວຽກທີ່ຕ້ອງເຮັດເປັນປະຈຳຢ່າງເນື່ອງນິດລຽນຕິດ, ມີຄວາມເປັນເອກະພາບ, ທັງຮັບປະກັນໄດ້ຫຼັກການພັກນຳພາເດັດຂາດ, ໂດຍກົງ, ຮອບດ້ານ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ແລະ ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ, ຮອບຄອບ, ເລິກເຊິ່ງ, ຍຸຕິທຳ ແລະ ຄຳນຶງເຖິງຜົນປະໂຫຍດລວມຂອງຊາດ, ຂອງປະຊາຊົນ, ຖ້າເຮັດໄດ້ຄືແນວນັ້ນ, ເຊື່ອແນ່ວ່າການຈັດຕັ້ງພັກ-ລັດຈະປະກອບດ້ວຍຜູ້ທີ່ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດທີ່ໜັກແໜ້ນ, ມີຈັນຍາບັນ, ຈັນຍາທຳ ແລະ ມີຄວາມຮູ້ຄວາມສາມາດກາຍເປັນພະນັກງານສືບທອດທີ່ດີມີຄຸນນະພາບແຕ່ລະຂັ້ນ, ແຕ່ລະຕຳແໜ່ງງານ ເປັນກຳລັງແຮງທີ່ສຳຄັນໃນການປະກອບສ່ວນຜັນຂະຫຍາຍແນວທາງຂອງພັກນະໂຍບາຍລະບຽບກົດໝາຍ ຂອງລັດວາງອອກຢ່າງມີຜົນສຳເລັດ...ຯ

ແກ້ຄຳຜິດສະບັບ: 263 ປະຈຳປີ 2024/1. ໜ້າທີ 13 ແຖວທີ 38 ຄຳສັ່ງເລກທີ 416/ຄລສພ (ຜິດ) ຖືກແທ້ແມ່ນຄຳສັ່ງເລກທີ 411/ຄລສພ

ເພີ່ມທະວີການນຳພາຂອງພັກ ຕໍ່ການຄຸ້ມຄອງນັກຮຽນ-ນັກສຶກສາ ກົມໃຫຍ່ການເມືອງ ກະຊວງປ້ອງກັນຄວາມສະຫງົບ

ໂດຍ: ສິດທິສັກ ເກດຕະວົງ

ພັກປະຊາຊົນປະຕິວັດລາວ ນັບແຕ່ໄດ້ຮັບການສ້າງຕັ້ງເປັນຕົ້ນມາ ຍາມໃດກໍ່ໄດ້ໃຫ້ຄວາມສຳຄັນຕໍ່ວຽກງານພະນັກງານ, ເພາະວຽກງານພະນັກງານ ແມ່ນໜຶ່ງໃນບັນຫາສຸດທີ່ສຳຄັນ ພົວພັນເຖິງການກຳອຳນາດ ແລະ ການຄົງຕົວຂອງພັກເຮົາ ກໍ່ຄືຜົນສຳເລັດຂອງພາລະກິດປ່ຽນແປງໃໝ່ຮອບດ້ານ ມີຫຼັກການ ຂອງພັກ, ທັງແມ່ນບັນຫາຮີບດ່ວນສະເພາະໜ້າ ແລະ ທັງເປັນບັນຫາຍຸດທະສາດ ພື້ນຖານຍາວນານ ເພື່ອສ້າງໃຫ້ມີກຳລັງຖັນແຖວພະນັກງານສືບທອດປ່ຽນແທນທີ່ພຽບພ້ອມ ແລະ ປ່ຽມລົ້ນໄປດ້ວຍຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ທີ່ໜັກແໜ້ນ, ມີນ້ຳໃຈເສຍສະຫຼະສູງ, ເປັນແບບຢ່າງທີ່ດີໃນການດຳລົງຊີວິດ, ມີຈັນຍາບັນ, ຈັນຍາທຳ, ມີຄວາມຮູ້ຄວາມສາມາດ-ຊຳນິຊຳນານງານ, ມີແບບແຜນເຮັດວຽກແບບວິທະຍາສາດ, ຮັບໃຊ້ປະຊາຊົນ ແລະ ປະເທດຊາດຢ່າງສຸດໃຈ, ສືບທອດພາລະກິດປະຕິວັດຂອງພັກ ແລະ ຂອງຊາດລາວ ໃຫ້ຍືນຍົງຄົງຕົວ ເວົ້າລວມ, ເວົ້າສະເພາະຂົງເຂດກຳລັງປະກອບອາວຸດ ແມ່ນຂົງເຂດໜຶ່ງທີ່ພັກລັດເຮົາໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຊີ້ນຳຢ່າງໃກ້ຊິດບົນພື້ນຖານທິດທາງລວມທີ່ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໄດ້ສຸມໃສ່ເພີ່ມທະວີບົດບາດການນຳພາເດັດຂາດ, ໂດຍກົງ, ຮອບດ້ານຂອງພັກ ຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ປະຕິບັດຍຸດທະສາດຮັກສາຄວາມໝັ້ນຄົງທາງການເມືອງ, ສ້າງ ແລະ ປັບປຸງຕາໜ່າງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຂອງພັກຢ່າງແຂງແຮງ, ສຶກສາອົບຮົມການເມືອງ-ແນວຄິດ, ຍົກສູງສະຕິຮັກຊາດ, ສະຕິລະວັງຕົວຕໍ່ການເຄື່ອນໄຫວມ້າງເພຂອງອິດທິກຳລັງປໍລະປັກ, ກຳແໜ້ນການຜັນແປຂອງສະພາບການ ເພື່ອສ້າງ, ປັບປຸງກຳລັງໃຫ້ມີຄວາມໜັກແໜ້ນ, ຈົງຮັກພັກດີຕໍ່ປະຊາຊົນ, ຕໍ່ລະບອບໃໝ່.

ເພື່ອຮັບປະກັນໃຫ້ແນວທາງທີ່ວາງອອກໃຫ້ບັນລຸຜົນສຳເລັດ ຄະນະພັກ-ຄະນະນຳກົມໃຫຍ່ການເມືອງ ກະຊວງປ້ອງກັນຄວາມສະຫງົບ ໄດ້ໃຫ້ຄວາມສຳຄັນຕໍ່ວຽກງານກໍ່ສ້າງພັກ-ກໍ່ສ້າງພະນັກງານ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງຮອບດ້ານ ໂດຍຖືເອົາການກໍ່ສ້າງທາງດ້ານຄຸນທາດການເມືອງເປັນກົກ, ຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະເປັນພື້ນຖານ, ຕັ້ງໜ້າປັບປຸງ ແລະ ກໍ່ສ້າງກຳລັງປ້ອງກັນຄວາມສະຫງົບໃຫ້ກາຍເປັນອາວຸດອັນແຫຼມຄົມຂອງພັກ ໃນການປົກປັກຮັກສາຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມ, ເປັນເຈົ້າການໃນການກໍ່ສ້າງກຳລັງໃຫ້ພຽງພໍທາງດ້ານປະລິມານ ແລະ ຮັບປະກັນທາງດ້ານຄຸນນະພາບສ້າງກຳລັງປ້ອງກັນຄວາມສະຫງົບໃຫ້ເຂັ້ມແຂງ, ທັນສະໄໝ, ປັບປຸງບັນດາສະຖາບັນຂອງກຳລັງ ແລະ ນະໂຍບາຍຕ່າງໆໃຫ້ສອດຄ່ອງກວ່າເກົ່າ.

ເພື່ອບັນລຸຈຸດປະສົງດັ່ງກ່າວກອງປະຊຸມໃຫຍ່ ຄັ້ງທີ VI ຂອງກົມໃຫຍ່ການເມືອງປ້ອງກັນຄວາມສະ

ຫງົບໄດ້ວາງທິດທາງໄວ້ວ່າ: ວຽກງານກໍ່ສ້າງກໍາລັງ ຄະນະພັກແຕ່ລະຂັ້ນ ຕ້ອງຖືເອົາວຽກງານຍຸດທະສາດກັບທີ່ເປັນຕົ້ນຕໍ ແລະ ສົ່ງລົງໄປກໍ່ສ້າງຢູ່ທ້ອງຖິ່ນ ຮາກຖານໃຫ້ຫຼາຍກວ່າເກົ່າ, ປັບປຸງເຫຼົ່າວິຊາສະເພາະ ແລະ ຖືເອົາຄຸນນະພາບເປັນກົກ ຕ້ອງເອົາໃຈໃສ່ການສ້າງພະນັກງານກັບທີ່ເປັນຕົ້ນຕໍ ແລະ ສົ່ງໄປກໍ່ສ້າງຢູ່ທ້ອງຖິ່ນຮາກຖານໃຫ້ຫຼາຍຂຶ້ນກວ່າເກົ່າ, ປັບປຸງຫຼັກສູດ ການຮຽນ-ການສອນ, ຈັດຕັ້ງອົບຮົມແນວທາງນະໂຍບາຍຂອງພັກ ແລະ ຄວາມຮູ້ໃໝ່ໃຫ້ສະມາຊິກ ພັກ, ນາຍ ແລະ ພົນຕໍາຫຼວດ; ແກ້ໄຂສະພາບການກໍ່ສ້າງພະນັກງານ ໄປຕາມຄ່ານິຍົມ; ເອົາໃຈໃສ່ກໍ່ສ້າງພະນັກງານຕາມຂະແໜງທີ່ເປັນທ່າແຮງ ແລະ ສ້າງພະນັກງານວິຊາການດ້ານຕ່າງໆ ເພື່ອຕອບສະໜອງກັບໜ້າທີ່ການເມືອງ ໃນໄລຍະໃໝ່, ເອົາໃຈໃສ່ຢ່າງແຂງແຮງຕໍ່ກັບການກໍ່ສ້າງຄູ-ອາຈານໃຫ້ກາຍເປັນມືອາຊີບ, ໄປພ້ອມໆກັບການກໍ່ສ້າງພະນັກງານເພດຍິງຊົນເຜົ່າ; ກວດກາ ແລະ ຄຸ້ມຄອງນັກສຶກສາທີ່ກໍາລັງສຶກສາຮໍ່າຮຽນທັງພາຍໃນ ແລະ ຕ່າງປະເທດ ສົ່ງເສີມນັກຮຽນ, ນັກສຶກສາຜູ້ທີ່ຮຽນດີ, ຮຽນເກັ່ງສ້າງໃຫ້ກາຍເປັນພະນັກງານສືບທອດໃນອານາຄົດ ໂດຍແມ່ນກົມກໍ່ສ້າງກໍາລັງ ເປັນເສນາທິການຊ່ວຍຄະນະພັກ, ຄະນະນໍາ, ມີບົດບາດທີ່ສໍາຄັນໃນການຄົ້ນຄວ້າ, ກໍານົດແຜນຍຸດທະສາດ, ຄຸ້ມຄອງມະຫາພາກທົ່ວການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ ໃນກໍາລັງປ້ອງກັນຄວາມສະຫງົບ. ບໍາລຸງ ແລະ ກໍ່ສ້າງກໍາລັງປ້ອງກັນຄວາມສະຫງົບ ໃຫ້ໜັກແໜ້ນທາງດ້ານການເມືອງແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ມີທາດແທ້ປະຕິວັດ, ມີລະບຽບວິໄນເຂັ້ມງວດ ແລະ ມີແບບແຜນທັນສະໄໝ; ມີລະດັບວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ສິລະປະຍຸດ, ຍຸດທະວິທີໃນການສູ້ຮົບ ແລະ ມີຄວາມສາມາດປະຕິບັດສໍາເລັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ; ຄົ້ນຄວ້າ, ຂຶ້ນແຜນ, ແບ່ງທຶນ, ງົບປະມານການພັດທະນາຊັບພະຍາກອນມະນຸດ ໃນກໍາລັງປ້ອງກັນຄວາມສະຫງົບ; ຄັດເລືອກເອົານັກຮຽນສາມັນສຶກສາ ເຂົ້າເປັນກໍາລັງປ້ອງກັນຄວາມສະຫງົບ (ຮຽນວັດທະນະທໍາຫຼັກ 67 ແລະ ວັດທະນະທໍາເລກ I), ນາຍ ແລະ ພົນຕໍາຫຼວດ ໄປບໍາລຸງ-ກໍ່ສ້າງຢູ່ພາຍໃນ ແລະ ຕ່າງປະເທດ; ສ້າງ ແລະ ພັດທະນາລະບົບຄຸ້ມຄອງ, ເກັບກໍາຜົນການຮຽນ-ການຝຶກຝົນຫຼໍ່ຫຼອມ, ສະຖິຕິ, ຖານຂໍ້ມູນໃນຂົງເຂດວິທະຍາສາດການສຶກສາ, ວຸດທິ, ວິທະຍາຖານະ, ເອກະສານຢັ້ງຢືນການສຶກສາ; ຊຸກຍູ້ການຈັດຕັ້ງປະຕິບັດລະບຽບ ແລະ ສະເໜີປະຕິບັດນະໂຍບາຍ-ວິໄນນາຍ ແລະ ພົນຕໍາຫຼວດ ທີ່ກໍາລັງສຶກສາຮໍ່າຮຽນ ແລະ ຈົບມາຕາມລະບຽບຫຼັກການ; ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້, ຍົກລະດັບຄູ, ບຸກຄະລາກອນການສຶກສາ; ນໍາສະເໜີນາມມະຍົດ ແລະ ຕໍາແໜ່ງວິຊາການຄູ ໃນກໍາລັງປ້ອງກັນຄວາມສະຫງົບ; ປະກອບມີ 06 ພະແນກຂຶ້ນກັບຄື: ພະແນກບໍລິຫານ-ສັງລວມ; ພະແນກບໍາລຸງ-ກໍ່ສ້າງວິຊາສະເພາະ, ພະແນກຄຸ້ມຄອງຫຼັກສູດການສຶກສາ; ພະແນກຄຸ້ມຄອງນັກສຶກສາ, ພະແນກປະກັນຄຸນນະພາບການສຶກສາ ແລະ ພະແນກຄຸ້ມຄອງວິທະຍາສາດການສຶກສາ ມີຈໍານວນພົນທັງໝົດ 47 ສະຫາຍ, ຍິງ 12 ສະຫາຍ, ໂດຍພື້ນຖານແລ້ວສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ.

ໄລຍະຜ່ານມາຄະນະພັກ, ຄະນະບັນຊາໄດ້ມີຄວາມພະຍາຍາມຈັດຕັ້ງປະຕິບັດພາລະບົດບາດຂອງຕົນໃນການຄຸ້ມຄອງນັກຮຽນ-ນັກສຶກສາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍເລີ່ມຈາກການສົ່ງນາຍ ແລະ ພົນຕໍາຫຼວດ ໄປຝຶກອົບຮົມ, ບໍາລຸງ-ກໍ່ສ້າງ ທາງດ້ານທິດສະດີ, ວິຊາສະເພາະຂະແໜງການຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ທັງໝົດ 4.736 ຄົນ, ຍິງ 846 ຄົນ, ສົ່ງໄປຝຶກອົບຮົມວຽກງານວິຊາສະເພາະໄລຍະສັ້ນ 2.042

ຄົນ, ຍິງ 191 ຄົນ, (ສສ ຫວຽດນາມ 59 ຄົນ, ຍິງ 03 ຄົນ; ສົ່ງໄປບຳລຸງ 386 ຄົນ, ຍິງ 89 ຄົນ, ໃນນັ້ນ ບຳລຸງທິດສະດີການເມືອງ ຢູ່ໂຮງຮຽນທິດສະດີການເມືອງ ປກສ (ໂພນພະເນົາ) 62 ຄົນ, ຍິງ 7 ຄົນ, ທິດສະດີການເມືອງ ຢູ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດ 02 ຄົນ, ບຳລຸງວິຊາສະເພາະ ລະບົບ 06 ເດືອນ ຢູ່ບັນດາໂຮງຮຽນ ປກສຊັ້ນສູງ4ແຫ່ງ260ຄົນ,ຍິງ69ຄົນ;ບຳລຸງຢູ່ກະຊວງ ປ້ອງກັນປະເທດ 31 ຄົນ,ຍິງ 01 ຄົນ; ບຳລຸງພາສາອິນໂດເນເຊຍ ລະບົບ 08 ເດືອນ 14 ຄົນ, ຍິງ 06 ຄົນ, ບຳລຸງວິຊາສະເພາະ ຢູ່ ສສ ຫວຽດນາມ 04 ຄົນ; ສົ່ງໄປກໍ່ສ້າງຢູ່ພາຍໃນ ແລະ ຕ່າງປະເທດ 2.308 ຄົນ, ຍິງ 566 ຄົນ ໃນນັ້ນ, ຊັ້ນຕົ້ນ 262 ຄົນ, ຍິງ 88 ຄົນ, ກໍ່ສ້າງລະບົບເລັ່ງລັດ01ປີ04ຄົນ,ລະບົບຊັ້ນກາງ04ຄົນ,ຍິງ01ຄົນ,ອະນຸປະລິນຍາທິດສະດີການເມືອງ 51 ຄົນ, ຍິງ 09 ຄົນ, ຊັ້ນສູງ 749ຄົນ,ຍິງ142ຄົນ,(ປກສຊັ້ນສູງ4ແຫ່ງ713ຄົນ,ຍິງ 134ຄົນ)ປະລິນຍາຕີ778ຄົນ,ຍິງ150ຄົນ(ສສຫວຽດນາມ111ຄົນ,ຍິງ39ຄົນ;ສປ ຈີນ01ຄົນ,ຍິງ01ຄົນ) ແລະປະລິນຍາໂທ111ຄົນ,ຍິງ05ຄົນ(ຢູ່ລັດເຊຍ01ຄົນ, ສສ ຫວຽດນາມ 27 ຄົນ) ປະລິນຍາເອກ ຢູ່ ສສ ຫວຽດນາມ 03 ຄົນ ແລະ ມັດທະຍົມຕອນປາຍ 346 ຄົນ, ຍິງ 171 ຄົນ (ໂຮງຮຽນວັດທະນະທຳຫຼັກ 67 ຈຳນວນ 236 ຄົນ, ຍິງ 115 ຄົນ ແລະ ໂຮງຮຽນວັດທະນະທຳເລກ 1 ສສ ຫວຽດນາມ 110 ຄົນ, ຍິງ 56 ຄົນ). ໄດ້ເອົາໃຈໃສ່ຄຸ້ມຄອງ, ກວດກາ, ຕິດຕາມ ພາຍຫຼັງທີ່ສຳເລັດການກໍ່ສ້າງ-ບຳລຸງ ກໍ່ໄດ້ເຮັດໜັງສືສະເໜີ ເຖິງກົມຈັດຕັ້ງພະນັກງານປະຕິບັດນະໂຍບາຍ ເລື່ອນຊັ້ນ, ປະດັບຊັ້ນ ແລະ ດັດແປງຊັ້ນ ໃຫ້ນາຍ ແລະ ພົນຕຳຫຼວດທີ່ສຳເລັດການສຶກສາ ແລະ ກຳລັງສຶກສາວິຊາສະເພາະ ລະດັບຕ່າງໆ ຢູ່ພາຍໃນປະເທດ ແລະ ຕ່າງປະເທດ ຈຳນວນ 1.121 ຄົນ, ຍິງ 286 ຄົນຄື: ເລື່ອນຊັ້ນ: 121 ຄົນ,ຍິງ 10 ຄົນ, ປະດັບຊັ້ນ: 1.000 ຄົນ, ຍິງ 276 ຄົນ.

ພ້ອມດຽວກັນນັ້ນ, ກໍ່ໄດ້ລົງປະສານສົມທົບກັບຄະນະພັກ, ຄະນະບັນຊາ ເກັບກຳສະຖິຕິ ທັງຜູ້ບໍລິຫານ ແລະ ບຸກຄະລາກອນການສຶກສາລົງຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດລະບຽບວິໄນ, ບ່ອນໃດທີ່ເຫັນວ່າບໍ່ທັນສອດຄ່ອງ. ພ້ອມນັ້ນ, ໄດ້ສຳເລັດການປັບປຸງບັນດານິຕິກຳທີ່ກ່ຽວພັນເຖິງວຽກງານການບຳລຸງ-ກໍ່ສ້າງວິຊາສະເພາະ ແລະ ບັນດາສະຖານການສຶກສາຂອງກະຊວງປ້ອງກັນຄວາມສະຫງົບເປັນຕົ້ນ ຂໍ້ຕົກລົງ ວ່າດ້ວຍປະກາສະນີຍະບັດ ລະບົບບຳລຸງເຖິງຊັ້ນສູງ ຂອງກຳລັງ ປກສ, ຂໍ້ຕົກລົງ ວ່າດ້ວຍພັນທະປະກອບສ່ວນຂອງນັກຮຽນ, ນັກສຶກສາ, ຢູ່ສະຖານການສຶກສາໃນກຳລັງປ້ອງກັນຄວາມສະຫງົບ, ແຜນຍຸດທະສາດການຮ່ວມມືກໍ່ສ້າງກຳລັງລະຫວ່າງກະຊວງປ້ອງກັນຄວາມສະຫງົບລາວ ແລະ ກະຊວງ ຕຳຫຼວດແຫ່ງ ສສ ຫວຽດນາມ ແຕ່ນີ້ຮອດປີ 2025 ແລະ ວິໄສທັດຮອດປີ 2030, ຂໍ້ຕົກລົງ ວ່າດ້ວຍລະບຽບການຄຸ້ມຄອງນັກຮຽນ ຂອງໂຮງຮຽນວັດທະນະທຳຫຼັກ 67.

ບັນດາຜົນສຳເລັດເຫຼົ່ານັ້ນ ແມ່ນຍ້ອນເອົາໃຈໃສ່ຊີ້ນຳ-ນຳພາຢ່າງໃກ້ຊິດ ແລະ ການຕັດສິນໃຈສູງຂອງຄະນະພັກ, ຄະນະບັນຊາ ໄດ້ຖືເອົາການກໍ່ສ້າງກຳລັງສືບທອດປ່ຽນແທນ, ເປັນຂໍ້ກຸນແຈສຳຄັນໃນການເຕີບໃຫຍ່ຂະຫຍາຍຕົວຂອງກຳລັງປະກອບອາວຸດ, ສະແດງອອກບ່ອນວ່າຄະນະພັກແຕ່ລະຂັ້ນ, ນາຍ ແລະ ພົນຕຳຫຼວດທີ່ເຮັດວຽກງານກໍ່ສ້າງກຳລັງມີຄວາມຮັບຜິດຊອບ ແລະ ມີຄວາມຕັດສິນໃຈສູງຕໍ່ການປະຕິບັດພາລະບົດບາດຂອງຕົນ ເຊິ່ງເຫັນໄດ້ຢ່າງຊັດເຈນໃນການເລືອກເຟັ້ນຜູ້ທີ່ມີມາດຕະຖານ, ເງື່ອນໄຂເພື່ອໄປກໍ່ສ້າງ-ບຳລຸງ ພ້ອມດຽວກັນນັ້ນ, ກໍ່ໄດ້ເປັນເຈົ້າການໃນການເອົາໃຈໃສ່ຄຸ້ມຄອງ, ຕິດຕາມນັກຮຽນ, ນັກສຶກສາ ຢູ່ພາຍໃນ ແລະ ຕ່າງປະເທດທີ່ກຳລັງຢູ່ໃນການກໍ່ສ້າງຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງເຮັດໃຫ້ໃນການກໍ່ສ້າງກຳລັງສືບທອດປ່ຽນ

ແທນຮັບປະກັນໄດ້ທາງດ້ານປະລິມານ ແລະ ຄຸນນະພາບ ມີຄຸນທາດການເມືອງໜັກແໜ້ນ, ມີທັດສະນະຫຼັກໝັ້ນຊຶນຊັ້ນ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ມີທາດແທ້ຄຸນສົມບັດສິນທຳປະຕິວັດ, ຮູ້ຈຳແນກມິດ-ສັດຕູຢ່າງຈະແຈ້ງ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ ເພື່ອໃຫ້ກາຍເປັນພະນັກງານ-ນັກຮົບຜູ້ທີ່ດີສືບທອດປ່ຽນແທນໃນອະນາຄົດ.

ຄຽງຄູ່ກັບຜົນສຳເລັດຄວາມເອົາໃຈໃສ່ຢ່າງຕັ້ງໜ້າຂອງຄະນະພັກ-ຄະນະບັນຊາກົມໃຫຍ່ການເມືອງ ກໍ່ຄືກົມກໍ່ສ້າງກຳລັງ ໃນການຄຸ້ມຄອງນັກຮຽນ-ນັກສຶກສາ ຍັງມີຂໍ້ຈຳກັດ ແລະ ຂໍ້ຄົງຄ້າງຈຳນວນໜຶ່ງຕ້ອງໄດ້ປັບປຸງແກ້ໄຂເປັນຕົ້ນແມ່ນ:

1) ການສຶກສາອົບຮົມການເມືອງ-ແນວຄິດຂອງຄະນະພັກ, ຄະນະບັນຊາຍັງບໍ່ທັນດຳເນີນເປັນປົກກະຕິ, ຕໍ່ເນື່ອງ ຈຶ່ງເຮັດຄວາມຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍ,ທິດທາງແຜນການ, ໜ້າທີ່ຈຸດສຸມທີ່ກຳນົດໄວ້ຍັງບໍ່ທັນເລິກເຊິ່ງ, ພະນັກງານ-ນັກຮົບຈຳນວນໜຶ່ງຄວາມຕື່ນຕົວຍັງບໍ່ເປັນເຈົ້າການ, ຄວາມເປັນແບບຢ່າງນຳໜ້າຍັງບໍ່ທັນສູງ, ການຫັນປ່ຽນທາງດ້ານແນວຄິດຈິນຕະນາການຍັງຊັກຊ້າ, ເຮັດໃຫ້ວຽກງານບາງວຽກງານບໍ່ທັນບັນລຸຕາມຄາດໝາຍທີ່ກຳນົດໄວ້.

2) ການຄົ້ນຄວ້າເອົາພະນັກງານ-ນັກຮົບໄປບຳລຸງ-ກໍ່ສ້າງຢູ່ພາຍໃນ ແລະ ຕ່າງປະເທດ ຍັງມີບາງກົມກອງການຄັດເລືອກເອົາພະນັກງານເປັນໄປຕາມມາດຕະຖານ, ເງື່ອນໄຂທີ່ກຳນົດໄວ້ ເຮັດໃຫ້ການກໍ່ສ້າງກຳລັງທາງດ້ານຄຸນນະພາບບໍ່ທັນສູງ.

3) ການຄຸ້ມຄອງນັກຮຽນ, ນັກສຶກສາ ຢູ່ພາຍໃນ ແລະ ຕ່າງປະເທດຍັງບໍ່ທັນໄດ້ດີເທົ່າທີ່ຄວນ ເຮັດໃຫ້ເກີດມີສະພາບປະກົດການຫຍໍ້ທໍ້ດ້ານຕ່າງໆເກີດຂຶ້ນ, ເຮັດໃຫ້ນັກຮຽນ-ນັກສຶກສາລະເມີດລະບຽບວິໄນ ແລະ ກົດໝາຍ ຖືກວິໄນ 13 ຄົນ, ຍິງ 04 ຄົນ; ໃນນັ້ນອອກຈາກກຳລັງ 04 ຄົນ, ຖອນກັບຄືນກົມກອງເກົ່າ 03 ຄົນ, ນັກຮຽນຫຼັກ 67 ຖືກປະຕິບັດວິໄນ 04 ຄົນ (ສົ່ງຄືນໃຫ້ຜູ້ປົກຄອງ 02 ຄົນ ແລະ ຖືກຕັດຄະແນນຄຸນສົມບັດ 03 ຄະແນນ 02 ຄົນ), ເສຍຊີວິດຍ້ອນເກີດອຸບັດຕິເຫດ 02 ຄົນ.

4) ການຕິດຕາມ, ກວດກາການກໍ່ສ້າງນັກຮຽນ-ນັກສຶກສາທີ່ກຳລັງກໍ່ສ້າງຢູ່ບັນດາສະຖາບັນ, ໂຮງຮຽນທັງພາຍໃນ ແລະ ຕ່າງປະເທດຍັງບໍ່ທັນໄດ້ເຄື່ອນໄຫວຢ່າງຕໍ່ເນື່ອງ, ເນື່ອງຈາກວ່າດ້ານງົບປະມານຍັງມີລັກສະນະຈຳກັດ ເຮັດໃຫ້ການຕິດຕາມ, ກວດກາ; ການປະສານສົມທົບກັບສະຖາບັນ, ໂຮງຮຽນບໍ່ທັນທົ່ວເຖິງ ແລະ ເປັນປົກກະຕິ.

ຕໍ່ກັບຂໍ້ຄົງຄ້າງດັ່ງກ່າວນັ້ນ ເພື່ອຮັບປະກັນໃຫ້ແກ່ຈັດຕັ້ງປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບການມອບໝາຍ ກໍ່ຄືປະກອບສ່ວນເຂົ້າໃນການພັດທະນາກຳລັງປ້ອງກັນຄວາມສະຫງົບ ໃຫ້ໜັກແໜ້ນ, ເຂັ້ມແຂງ ແລະ ມີຄຸນນະພາບ ຄະນະພັກ-ຄະນະບັນຊາແຕ່ລະຂັ້ນ, ຄະນະຮັບຜິດຊອບວຽກງານກໍ່ສ້າງ, ຄຸ້ມຄອງນັກຮຽນ-ນັກສຶກສາ ຕ້ອງເອົາໃຈໃສ່ຍົກສູງບາງເນື້ອໃນດັ່ງນີ້:

ໜຶ່ງ. ຄະນະພັກ, ຄະນະນຳກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບຕ້ອງເພີ່ມທະວີການນຳພາ-ຊີ້ນຳອີງການເສນາທິການທີ່ຮັບຜິດຊອບວຽກງານກໍ່ສ້າງ-ບຳລຸງກຳລັງໃນການປະຕິບັດໜ້າທີ່ການເມືອງ ເປັນຕົ້ນແມ່ນການຄົ້ນຄວ້າເປົ້າໝາຍໄປກໍ່ສ້າງ-ບຳລຸງ ຮັບປະກັນໃຫ້ຖືກຕ້ອງຕາມມາດຕະຖານ, ເງື່ອນໄຂທີ່ກຳນົດໄວ້, ພ້ອມກັນນັ້ນ, ກໍ່ຕ້ອງໄດ້ເອົາໃຈໃສໃນການປະສານສົມທົບຄະນະພັກແຕ່ລະຂັ້ນໃນການນຳສະເໜີເປົ້າໝາຍທີ່ຈະສົ່ງໄປກໍ່ສ້າງ ແລະ ບົນພື້ນຖານການຄົ້ນຄວ້າຕົກລົງເປັນເອກະພາບພາຍໃນຄະນະພັກ.

ສອງ. ເພີ່ມທະວີເອົາໃຈໃສ່ສຶກສາອົບຮົມການ

ເມືອງ-ແນວຄິດພະນັກງານນັກຮົບຢ່າງເປັນປົກກະຕິ, ຕໍ່ເນື່ອງ, ສ້າງໃຫ້ໄດ້ພະນັກງານ-ນັກຮົບທີ່ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີສະຕິຕໍ່ການຈັດຕັ້ງ, ມີນໍ້າໃຈຮັບຜິດຊອບໃນການປະຕິບັດໜ້າທີ່ການເມືອງ, ຄວາມຊຳນິຊຳນານການຄົ້ນຄວ້າ, ກຳແໜ້ນບັນດານິຕິກຳຕ່າງໆທີ່ຕິດພັນກັບຄວາມຮັບຜິດຊອບ.

ສາມ, ສືບຕໍ່ຈັດຕັ້ງປະຕິບັດທິດທາງແຜນການນຳສົ່ງນັກຮຽນ-ນັກສຶກສາໄປກໍ່ສ້າງພາຍໃນ ແລະ ຕ່າງປະເທດ4.717 ທ່ານ, ລະອຽດຄື: ຊັ້ນຕົ້ນ 1.890 ທ່ານ, ຊັ້ນກາງ 35 ທ່ານ, ຊັ້ນສູງ 804 ທ່ານ, ປະລິນຍາຕີ 1.314 ທ່ານ (ຕ່າງປະເທດ 661 ທ່ານ), ປະລິນຍາໂທ 267 ທ່ານ (ຕ່າງປະເທດ 32 ທ່ານ), ປະລິນຍາເອກຢູ່ ສສ ຫວຽດນາມ 9 ທ່ານ ແລະ ນັກຮຽນສາມັນ 398 ທ່ານ (ຕ່າງປະເທດ 110 ທ່ານ). ພ້ອມກັນນັ້ນ,ສືບຕໍ່ປະສານສົມທົບກັບພາກສ່ວນຕ່າງໆ ເພື່ອຊອກຫາແຫຼ່ງທຶນໃນການກໍ່ສ້າງວິຊາສະເພາະ ຂະແໜງການຕ່າງໆ ເປັນຕົ້ນ ແມ່ນກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງໄປສະນີ, ໂທລະຄົມ ແລະ ການສື່ສານ, ກະຊວງຍຸຕິທຳ ແລະ ກະຊວງປ້ອງກັນປະເທດ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງ ການຕົວຈິງແຕ່ລະໄລຍະຂອງກົມກອງ .

ສີ່, ສືບຕໍ່ເອົາໃຈໃສ່ເກັບກຳສະຖິຕິນັກຮຽນ, ນັກສຶກສາ ທັງພາຍໃນ ແລະ ຕ່າງປະເທດ, ພ້ອມທັງລົງເຄື່ອນໄຫວຕິດຕາມເກັບກຳສະພາບການປະຕິບັດລະບຽບຂອງນັກຮຽນ, ນັກສຶກສາ ຢູ່ບັນດາສະຖານການສຶກສາຂອງກຳລັງປ້ອງກັນຄວາມສະຫງົບ, ປະສານສົມທົບ, ອຳນວຍຄວາມສະດວກໃນການປະຕິບັດ ນະໂຍບາຍຕ່າງໆ ຕໍ່ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ແລະ ການປະຕິບັດນະໂຍບາຍນັກຮຽນ, ນັກສຶກສາ ທີ່ຮຽນຈົບມາທັງພາຍໃນ ແລະ ຕ່າງປະເທດ ຕາມລະບຽບການທີ່ກຳນົດໄວ້ຢ່າງເໝາະສົມ.

ຫ້າ. ສືບຕໍ່ຈັດຕັ້ງປະຕິບັດຕາມແນວທາງການຕ່າງປະເທດຂອງພັກ, ກໍ່ຄືການປະຕິບັດຕາມມະຕິ, ແຜນການ, ວຽກງານທີ່ອີງຄະນະພັກກະຊວງປ້ອງກັນຄວາມສະຫງົບວາງອອກ, ໂດຍສຸມໃສ່ການພົວພັນຮ່ວມມືຮອບດ້ານ ກັບຕຳຫຼວດ ສສ ຫວຽດນາມ, ກັບຄູ່ຮ່ວມສະຕາກຳຕຳຫຼວດ ສປ ຈີນ ແລະ ຟື້ນຟູສາຍພົວພັນທີ່ເປັນມູນເຊື້ອກັບ ລັດເຊຍ, ເປັນເຈົ້າການພົວພັນກັບອົງການຕຳຫຼວດ ຂອງບັນດາປະເທດໃກ້ຄຽງ, ອົງການຕຳຫຼວດອາຊຽນ ແລະ ອົງການຕຳຫຼວດສາກົນ ເພື່ອຍາດແຍ່ງເອົາການຮ່ວມມື, ສະໜັບສະໜູນ, ການຊ່ວຍເຫຼືອທາງດ້ານທຶນຮອນ, ບົດຮຽນ ແລະ ເຕັກນິກວິຊາການ ດ້ວຍຫຼາຍຮູບການທີ່ເໝາະສົມ.

ສັງລວມແລ້ວ: ການຄຸ້ມຄອງນັກຮຽນ-ນັກສຶກສາຂອງກຳລັງປ້ອງກັນຄວາມສະຫງົບ ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນ ໃນກໍ່ສ້າງກຳລັງປ້ອງກັນຄວາມສະຫງົບໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ແມ່ນຄວາມຮັບຜິດຊອບໂດຍກົງຂອງຄະນະພັກ, ຄະນະບັນຊາແຕ່ລະຂັ້ນ ເພາະວ່າກຳລັງປ້ອງກັນຄວາມສະຫງົບແມ່ນກຳລັງປະຈັນບານທີ່ສຳຄັນ ເພື່ອຮັບປະກັນຄວາມປອດໄພດ້ານຊີວິດ ແລະ ຊັບສິນ ຂອງປະຊາຊົນ, ຖ້າຫາກພວກເຮົາຄຸ້ມຄອງ, ກຳແໜ້ນສະພາບນັກຮຽນ-ນັກສຶກສາ ກໍ່ຄືກຳລັງສືບທອດປ່ຽນແທນໄດ້ດີ ກໍ່ຈະສ້າງໄດ້ນາຍ ແລະ ພົນຕຳຫຼວດສືບທອດໃນອະນາຄົດທີ່ມີຄວາມຮູ້ຄວາມສາມາດ, ທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ອຸດົມການສັງຄົມນິຍົມກາຍເປັນກຳລັງແຮງອັນສຳຄັນຂອງການຈັດຕັ້ງພັກ, ກຳລັງປະກອບອາວຸດ ໃນການປະກອບສ່ວນເຮັດໃຫ້ປະເທດຊາດມີຄວາມເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ມີຄວາມສະຫງົບປອດໄພ, ຍຸຕິທຳ ແລະ ສີວິໄລຕາມຈຸດໝາຍທີ່ພັກເຮົາກຳນົດໄວ້...໗

ຍ້ອນຄວາມດຸໝັ່ນອົດທົນ ເຮັດໃຫ້ຄອບຄົວຮັ່ງມີ

ໂດຍ: ດ່ອນແກ້ວ ພັນທະວົງ

ສະໄໝຂ້າມຜ່ານເພື່ອກ້າວຂຶ້ນສັງຄົມນິຍົມ ປະກອບມີ 5 ພາກສ່ວນຄື: ພາກສ່ວນເສດຖະກິດລັດ, ເສດຖະກິດລວມໝູ່ ຫຼື ເສດຖະກິດຮ່ວມມືຂອງປະຊາຊົນ, ພາກສ່ວນເສດຖະກິດຄອບຄົວ ຫຼື ເສດຖະກິດເອກະເທດ, ພາກສ່ວນເສດຖະກິດນາຍທຶນເອກະຊົນ ແລະ ພາກສ່ວນເສດຖະກິດທຶນນິຍົມແຫ່ງລັດ ຫຼື ເສດຖະກິດຮ່ວມສຳພັນກັບຕ່າງປະເທດ. ການຄົງຕົວ ຂອງເສດຖະກິດສິນຄ້ານ້ອຍ ແມ່ນຫຼີກລຽງບໍ່ໄດ້, ດັ່ງທີ່ ປະທານ ໄກສອນ ພົມວິຫານ ໄດ້ຊີ້ໃຫ້ເຫັນແຈ້ງວ່າ: ສະໄໝຂ້າມຜ່ານຂອງປະເທດເຮົາຍັງມີຈຸດພິເສດຈຳເພາະອັນໜຶ່ງສຳຄັນຍິ່ງນັ້ນຄື: ພວກເຮົາກໍ່ສ້າງສັງຄົມນິຍົມໂດຍເລີ່ມຈາກການຜະລິດນ້ອຍ, ກະແຈກກະຈາຍ, ເຕັມໄປດ້ວຍລັກສະນະກຸ້ມຕົນເອງ, ພໍໃຜພໍລາວ, ອຸດສາຫະກຳກໍ່ຍັງອ່ອນຫຼາຍ, ຊົນຊັ້ນກຳມະກອນອຸດສາຫະກຳຫາກໍ່ເລີ່ມກໍ່ຕົວຂຶ້ນ. ຕາມທິດສະດີມາກ-ເລນິນ, ການຜະລິດສິນຄ້ານ້ອຍ ແມ່ນເຄື່ອນໄຫວຕາມສູດສິນຄ້າ-

ເງິນ-ສິນຄ້າ ເຊິ່ງເປົ້າໝາຍສຸດທ້າຍແມ່ນຄຸນຄ່າໃຊ້ສອຍ ເຊິ່ງພາກສ່ວນນີ້ປະກອບດ້ວຍຊາວກະສິກອນ, ຫັດຖະກຳ ແລະ ຜູ້ເຮັດການບໍລິການເອກະເທດ.

ປະຈຸບັນການສ້າງເສດຖະກິດຄອບຄົວ ດ້ວຍເຫື່ອແຮງມັນສະໝອງ ແລະ ສີໄມ້ລາຍມືໃນການຕັດຫຍິບເຄື່ອງນຸ່ງ ເພື່ອເປັນສິນຄ້ານັ້ນ, ມັນບໍ່ພຽງແຕ່ຈະ

ເຮັດໃຫ້ຕົນເອງ, ຖານະຄອບຄົວດີຂຶ້ນເທົ່ານັ້ນ ຫາກຍັງຖືກຕ້ອງສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດ ປຸກລະດົມຊຸກຍູ້ໃຫ້ເຮັດອາຊີບໝັ້ນຄົງດ້ານອື່ນແທນ. ດັ່ງຄອບຄົວທ່ານ ກົງທອງ ທຳມະວົງ ກໍ່ແມ່ນຄອບຄົວໜຶ່ງຢູ່ບ້ານຫົວຂົວ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ທີ່ຍຶດຖືອາຊີບຕັດຫຍິບເປັນອາຊີບຫຼັກ ທ່ານໄດ້ເລົ່າໃຫ້ຟັງວ່າ ພາຍຫຼັງທີ່ໄດ້ແຕ່ງງານກັບ ນາງ ຈັນທອນ ໄຊຍະພູມ ສິງຄາມ ແລະ ມີລູກຮ່ວມກັນ 3 ຄົນ ໃນເບື້ອງຕົ້ນ ສອງຜົວເມຍລ້ວນແຕ່ເປັນພະນັກງານລັດຢູ່ກົມໃຫຍ່ພາລາທິການ (ໂຮງງານຕັດຫຍິບ) ກະຊວງປ້ອງກັນປະເທດ ເຫັນວ່າຜ່ານມາຍັງພົບຄວາມຫຍຸ້ງຍາກຫຼາຍຢ່າງ ໂດຍສະເພາະພາລະ ການລ້ຽງລູກ 3 ຄົນ, ບໍ່ສາມາດພົ້ນອອກຈາກຄວາມທຸກຍາກໄດ້ ຈຶ່ງໄດ້ປຶກສາກັບຜູ້ເປັນເມຍ ຕັດສິນໃຈຂໍລາອອກຈາກພະນັກງານລັດ ມາເຮັດທຸລະກິດຕັດຫຍິບເຄື່ອງນຸ່ງທົ່ວໄປ ອີກຢ່າງຍ້ອນຄວາມມັກ, ຮັກໃນອາຊີບດັ່ງກ່າວ ແລະ ທຸລະກິດດັ່ງກ່າວ ພວມເປັນທີ່ຕ້ອງການຂອງສັງຄົມຫຼາຍທີ່ສຸດ ບົນພື້ນຖານແນວທາງປ່ຽນແປງໃໝ່ຂອງພັກ ບວກກັບຄວາມອົດທົນດຸໝັ່ນຂະຫຍັນພຽນ ທ່ານ ກົງທອງ ທຳມະວົງ ແລະ ຜູ້ເປັນເມຍຈຶ່ງໄດ້ຕັດສິນໃຈອອກຈາກການເປັນພະນັກງານ ມາເປີດຮ້ານຕັດຫຍິບເຄື່ອງນຸ່ງທົ່ວໄປຂາຍ ປີ 1998-2002 ເບື້ອງຕົ້ນໄດ້ລົງທຶນ 15 ລ້ານກີບ ເຂົ້າໃນການຕັດຫຍິບເຄື່ອງປະເພດເຄື່ອງທີ່ຕັດໃນເວລານີ້ ແມ່ນເຄື່ອງວັດແທກບຸກຄົນ ເປັນປະເພດເຄື່ອງແບບຂອງພະນັກງານ-ລັດຖະກອນ ຢູ່ຕາມແຕ່ລະກົມກອງ, ກະຊວງ, ອົງການຕ່າງໆ ໂດຍເປັນຮູບແບບການໄປຍື່ນຊອງປະມູນນຳພາກສ່ວນດັ່ງກ່າວນັ້ນ. ນອກນັ້ນ, ກໍ່ຈະຮັບນຳບຸກຄົນທົ່ວໄປນຳ,ປະເພດເຄື່ອງສ່ວນໃຫຍ່ ຈະເປັນປະເພດຊຸດສູດ, ຊຸດຊາຟາລີ ແລະ ເສື້ອເຊີດ ມີຜົນກຳໄລ ໄດ້ຢູ່ປະມານ 8-9 ລ້ານກີບຕໍ່ເດືອນ ໃນເວລານັ້ນແຮງງານຕົ້ນຕໍມີພຽງສອງຜົວເມຍ.

ຕົກມາຮອດໄລຍະ ປີ 2002 ເຖິງປະຈຸບັນ ແມ່ນໄດ້ຂະຫຍາຍກຳລັງການຜະລິດ ເຊິ່ງມີລາຍຮັບລວມປະມານ 45 ລ້ານກີບຕໍ່ເດືອນ, ປີໜຶ່ງໄດ້ກຳໄລປະມານ 540 ລ້ານກີບ ໄດ້ເພີ່ມພະນັກງານຕັດຫຍິບເຄື່ອງຢູ່ໃນຮ້ານ ມີ 5 ຄົນ, ຍິງ 1 ຄົນ. ໄລຍະປະຈຸບັນນີ້ແມ່ນບໍ່ໄດ້ຍື່ນຊອງປະມູນແລ້ວ ເນື່ອງຈາກຮ້ານໄດ້ມີຊື່ສຽງເປັນທີ່ຮັບຮູ້ຂອງສັງຄົມກວ້າງຂວາງ ມາຮອດໄລຍະປະຈຸບັນນີ້ແມ່ນຈະຮັບຕັດໃຫ້ກຸ່ມຄົນ, ກຸ່ມພະນັກງານ, ທະຫານ, ຕຳຫຼວດ, ການນຳຈຳນວນໜຶ່ງ ທີ່ມາຈາກບັນດາກົມກອງຕາມສັ່ງ ແລະ ບຸກຄົນປະຊາຊົນທົ່ວໄປ, ຜະລິດຕະພັນໃນໄລຍະປະຈຸບັນ ສ່ວນໃຫຍ່ຈະເປັນ ເສື້ອຝ້າຍລາວ, ໄໝລາວ ເຄື່ອງຕາມສັ່ງ ຂອງແຕ່ລະກຸ່ມພະນັກງານ, ບຸກຄົນ ຈາກກົມກອງ ຈະເປັນເຄື່ອງສູດ, ຊາຟາລີ, ເສື້ອເຊີດນຸ່ງໄປເຮັດວຽກ. ກິດຈະການດັ່ງກ່າວນີ້ ເປັນສິ່ງພາກພູມໃຈຫຼາຍສຳລັບຄອບຄົວຂອງສະຫາຍເອງ.

ຜ່ານການເຮັດກິດຈະການຕັດຫຍິບເຄື່ອງນຸ່ງທົ່ວໄປ ສາມາດສົ່ງລູກທັງ 3 ຄົນ ຮຽນຈົບວິຊາສະເພາະໝົດທຸກຄົນ ຜູ້ທີໜຶ່ງ: ທ້າວ ພົງສະຫວັນ ທຳມະວົງ ຮຽນຢູ່ລາວ ຈົບປະລິນຍາຕີ, ຜູ້ທີສອງ: ນາງ ອານັນທິບ ທຳມະວົງ ຮຽນຢູ່ ສປ ຈີນ ຈົບປະລິນຍາໂທ, ຜູ້ທີສາມ: ທ້າວ ຈັນສະໝອນ ທຳມະວົງ ຮຽນຢູ່ ລາວ ຈົບປະລິນຍາຕີ ປະຈຸບັນລູກທັງ 3 ຄົນ ກໍ່ໄດ້ເຮັດທຸລະກິດເປັນຂອງຕົນເອງ ແລະ ປະຈຸບັນຄອບຄົວຕົນ ສາມາດຊື້ດິນເປົ່າວ່າງໄດ້ 1 ຕອນ, ລົດໃຫຍ່ 2 ຄັນ, ເຮືອນ 3 ຫຼັງ, ລົດຈັກ 2 ຄັນ. ການເຮັດທຸລະກິດຂອງຕົນເອງເຖິງວ່າຈະດຳເນີນໄປໄດ້ດີ ແຕ່ກໍ່ມີຄວາມຫຍຸ້ງຍາກຫຼາຍຢ່າງເຊັ່ນ: ການຕະຫຼາດບໍ່ໝັ້ນຄົງ, ວັດຖຸທຸກຢ່າງແມ່ນຕ້ອງສັ່ງ ແລະ ນຳເຂົ້າມາຈາກຕ່າງປະເທດ, ການຄຸ້ມຄອງການຕະຫຼາດ

ຂອງສິນຄ້າບ້ານເຮົາຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ.

ຕອນທ້າຍ ທ່ານ ກົງທອງ ທຳມະວົງ ຍັງໄດ້ເວົ້າຕື່ມວ່າ: ກ່ອນຈະມີວັນນີ້ໄດ້ ກ່ອນອື່ນໝົດຕ້ອງມີຄວາມ

ມັກ, ຮັກ ໃນອາຊີບທີ່ຕົນເຮັດ, ມີຄວາມເອົາໃຈໃສ່, ມີມານະອົດທົນ ຕໍ່ກັບບັນຫາຕ່າງໆທີ່ເກີດຂຶ້ນ ເປັນຕົ້ນແມ່ນບັນຫາທາງການຕະຫຼາດ ທີ່ມີການແກ້ງແຍ່ງແຂ່ງຂັນ ແລະ ມີຫຼາຍຮ້ານເຊິ່ງເປັນບັນຫາທ້າທາຍ ສິ່ງສຳຄັນສຸດເຮົາຈະຕ້ອງມີຄວາມອົດທົນ, ບໍ່ທໍ້ຖອຍຕໍ່ອຸປະສັກດັ່ງກ່າວ, ເສີມສ້າງຫົວຄິດປະດິດສ້າງດ້ວຍການອອກແບບສິ່ງໃໝ່ໆ ເພື່ອຮັບໃຊ້ສັງຄົມທີ່ຫຼາກຫຼາຍ, ສຳຄັນສຸດແມ່ນການເນັ້ນໃສ່ຄຸນນະພາບເປັນຫຼັກ ເພື່ອສ້າງໃຫ້ສັງຄົມມີຄວາມຍອມຮັບຕໍ່ຜະລິດຕະພັນຂອງເຮົາ ບໍ່ວ່າຈະເປັນທຸລະກິດໃດກໍ່ຕາມ; ວຽກງານຕັດຫຍິບເປັນວຽກທີ່ມີຄວາມລະອຽດສວຍງາມ, ມີສິລະປະໃນການອອກແບບ ແລະ ລົງມືຕັດດ້ວຍຄວາມປານີດ, ພິຖີພິຖັນ, ເພາະສະນັ້ນຕ້ອງມີຄວາມຮັກ, ມັກ, ອົດທົນແລະ ຈິງໃຈຊື່ສັດຕໍ່ລູກຄ້າ ເນັ້ນຄວາມເອົາໃຈໃສ່ເຮັດແນວໃດໃຫ້ລູກຄ້າມີຄວາມໝັ້ນໃຈ ເພິ່ງພໍໃຈທີ່ສຸດກັບຜະລິດຕະພັນຂອງເຮົາ.

ຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ, ຍ້ອນມີແນວທາງນະໂຍບາຍອັນຖືກຕ້ອງຂອງພັກ-ລັດໃນການນຳພາ-ຊີ້ນຳ, ປຸກລະດົມສົ່ງເສີມໃຫ້ພາກເອກະຊົນ, ນັກທຸລະກິດ, ປະຊາຊົນບັນດາເຜົ່າສ້າງເສດຖະກິດຄອບຄົວ, ສົ່ງເສີມ ແລະ ພັດທະນາສິນຄ້າ ທ່ານ ກົງທອງ ທຳມະວົງ ໄດ້ກ່າວຕື່ມອີກວ່າ: ເປັນຄວາມພາກພູມໃຈ ແລະ ດີໃຈຫຼາຍທີ່ເປັນຜູ້ໜຶ່ງໄດ້ຮັບໃບອະນຸຍາດນຳໃຊ້ກາໝາຍໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ ຈາກກົມສົ່ງເສີມ ແລະ ພັດທະນາສິນຄ້າ, ກະຊວງອຸດສະຫະກຳ ແລະ ການຄ້າ ໄດ້ອອກໃບອະນຸຍາດ ເລກທີ 0118/ສພຄ.ອຄ ລົງວັນທີ 31 ຕຸລາ 2016 ໃຫ້ຂ້າພະເຈົ້າ ແລະ ຈະຂໍສືບຕໍ່ເຮັດກິດຈະການນີ້ໃຫ້ມີຄຸນນະພາບ, ມີຫຼາຍຮູບແບບ, ຫຼາຍສີສັນ ແລະ ເປັນເຈົ້າການໃນການຄົ້ນຄວ້າອອກແບບຕັດຫຍິບເຄື່ອງນຸ່ງປະເພດຕ່າງໆ ໃຫ້ເປັນທີ່ຕ້ອງການຂອງຕະຫຼາດ ພ້ອມທັງສືບຕໍ່ຜະລິດເຄື່ອງນຸ່ງທົ່ວໄປໃຫ້ໝັ້ນຄົງຢູ່ກັບສັງຄົມລາວ, ຄົນລາວ ດ້ວຍຄຸນນະພາບ ແລະ ສວຍງາມຕະຫຼອດໄປ...ໆ

ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ ຈະປະສານສົມທົບກັນຢ່າງເລິກເຊິ່ງໄດ້ຄືແນວໃດ

ແປ ແລະ ຮຽບຮຽງໂດຍ: ສໍານຽງ ເມກລັນດອນ

ສະຫາຍເລຂາທິການໃຫຍ່ ສີຈິ້ນຜິງ ໄດ້ເນັ້ນໜັກວ່າ ຕ້ອງແກ້ໄຂສາຍພົວພັນລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະໃຫ້ດີ, ຍຶດໝັ້ນວາງແຜນຍຸດທະສາດ, ວາງແຜນການ, ຈັດຕັ້ງຜັນຂະຫຍາຍ ແລະ ກວດກາໄປພ້ອມກັນ ລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ. ພວກເຮົາຕ້ອງຊຸກຍູ້ວຽກງານກໍ່ສ້າງພັກໃຫ້ປະສານສົມທົບຢ່າງເລິກເຊິ່ງໄປຄຽງຄູ່ກັບວຽກງານວິຊາສະເພາະ ດ້ວຍທັດສະນະແນວຄິດທີ່ເປັນລະບົບ, ຍຶດໝັ້ນວຽກງານກໍ່ສ້າງພັກຕ້ອງປິ່ນອ້ອມໃຈກາງ, ກໍາແໜ້ນເອົາວຽກງານກໍ່ສ້າງພັກໄປກະຕຸກຊຸກຍູ້ວຽກງານວິຊາສະເພາະ, ຍຶດໝັ້ນວຽກງານທັງສອງຕ້ອງມີເປົ້າໝາຍ, ມີແຜນການ ແລະ ແຜນວຽກໄປໃນລວງດຽວກັນ, ຖືເອົາການກໍ່ສ້າງພັກດ້ວຍຄຸນນະພາບສູງນໍາໜ້າພາທາງການພັດທະນາດ້ວຍຄຸນນະພາບສູງ, ເຮັດໃຫ້ສອງວຽກງານດັ່ງກ່າວນີ້ມີການກະຕຸກຊຸກຍູ້ເຊິ່ງກັນ ແລະ ກັນໄປຄຽງຄູ່ກັບການປະສານສົມທົບກັນ ແລະ ຂະຫຍາຍຕົວ. ພວກເຮົາມາພ້ອມກັນມາສ້າງຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ວຽກງານກໍ່ສ້າງພັກຈະປະສານສົມທົບຢ່າງເລິກເຊິ່ງກັບວຽກງານວິຊາສະເພາະໄດ້ຄືແນວໃດ.

1. ບາງບັນຫາໃນການພັດທະນາວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະໄປຄຽງຄູ່ກັນ ວຽກງານກໍ່ສ້າງພັກຕ້ອງຮັບໃຊ້ວຽກງານໃຈກາງຂອງພັກ, ບໍ່ອາດຈະເຮັດວຽກງານກໍ່ສ້າງພັກ ພຽງເພື່ອກໍ່ສ້າງພັກ, ບໍ່ສາມາດເຮັດແບບ ໜັງສອງແຜ່ນ ລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ. ປັດຈຸບັນ, ໃນການພັດທະນາໄປພ້ອມກັນລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ ຕົ້ນຕໍແມ່ນມີບັນຫາຄົງຄ້າງໃນ 03 ດ້ານ ດັ່ງນີ້:

1.1. ແນວຄິດ ຖືສໍາຄັນວຽກງານວິຊາສະເພາະ, ຖືເບົາວຽກງານກໍ່ສ້າງພັກ ຍັງຄົງເປັນບັນຫາຄົງຄ້າງໂດຍທົ່ວໄປ. ຍ້ອນວ່າໜ້າທີ່ວຽກງານວິຊາສະເພາະນັ້ນໜັກໜ່ວງ, ບວກກັບຜູ້ຮັບຜິດຊອບການຈັດຕັ້ງພັກຂາດການສຶກສາອົບຮົມ ແລະ ການນໍາພາທີ່ຖືກຕ້ອງ, ພະນັກງານນໍາພາຈໍານວນບໍ່ໜ້ອຍຂາດຄວາມຮັບຮູ້ເຂົ້າໃຈທີ່ເລິກເຊິ່ງຕໍ່ແນວຄິດພັກນໍາພາທຸກສິ່ງທຸກຢ່າງ (ນໍາພາຮອບດ້ານ) ຢ່າງຖືກຕ້ອງ, ຍັງບໍ່ທັນສ້າງໄດ້ທັດສະນະທີ່ຖືກ ຕ້ອງກ່ຽວກັບການກໍາເອົາວຽກງານກໍ່ສ້າງພັກໄປກະຕຸກຊຸກຍູ້ການພັດທະນາ, ແນວຄິດກໍາແໜ້ນວຽກງານກໍ່ສ້າງພັກໂດຍປິ່ນອ້ອມການພັດທະນາ, ເຮັດໃຫ້ຜູ້ຮັບຜິດຊອບວຽກງານວິຊາສະເພາະ ແລະ ສະມາຊິກພັກ, ພະນັກງານ ເກີດມີແນວຄິດ ແລະ ຄວາມຮັບຮູ້ທີ່ຜິດພາດ ຄື: ຖືສໍາຄັນວຽກງານວິຊາສະເພາະເປັນວຽກງານ, ແຕ່ຊໍ້າພັດຖືເບົາວຽກງານກໍ່ສ້າງພັກ.

1.2. ວຽກງານກໍ່ສ້າງພັກຫຼີກທາງໃຫ້ວຽກງານວິຊາສະເພາະ ເປັນປະກົດການຄອນຂ້າງພົ້ນເດັ່ນ. ສະເພາະໜ້ານີ້ ຫຼາຍພາກສ່ວນມີໜ້າທີ່ວຽກງານວິຊາສະເພາະທີ່ໜັກໜ່ວງ, ຮູບແບບການດໍາເນີນກິດຈະ

ກຳຕ່າງໆໄດ້ກວມເອົາເວລາເປັນສ່ວນໃຫຍ່, ເຮັດໃຫ້ການສຶກສາອົບຮົມສະມາຊິກພັກ, ການຮ່ວມຊີວິດພັກບໍ່ເປັນປົກກະຕິ, ວຽກງານກໍ່ສ້າງພັກຖືກຖືເປັນພຽງວຽກງານທີ່ເຮັດພໍໃຫ້ແລ້ວ, ໄດ້ພຽງແຕ່ຮູບການ, ບາງຄັ້ງຄາວບໍ່ສາມາດຮັບປະກັນໃຫ້ສະມາຊິກພັກຢູ່ຂັ້ນຮາກຖານໄດ້ເຄື່ອນໄຫວຊີວິດພັກທີ່ຈຳເປັນ.

1.3. ການເສີມຂະຫຍາຍບົດບາດວຽກງານກໍ່ສ້າງພັກກະຕຸກຊຸກຍູ້ວຽກງານວິຊາສະເພາະບໍ່ໂດດເດັ່ນ. ການຈັດຕັ້ງຮາກຖານພັກຈຳນວນໜຶ່ງ ບາດກ້າວໃນການກໍ່ສ້າງຕົນເອງຍັງຫຼ້າຫຼັງ, ບໍ່ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການແຫ່ງການຂະຫຍາຍຕົວຂອງໜ້າທີ່ວຽກງານໃນປະຈຸບັນ ກາຍເປັນວ່າວຽກງານວິຊາສະເພາະກ້າວໄປໜ້າກ່ອນ, ວຽກງານກໍ່ສ້າງພັກຊໍ້າພັດເດີນຕາມຢູ່ຫຼັງ, ເກີດເປັນປະກົດການໜັງສອງແຜ່ນ ທີ່ເຮັດໃຫ້ວຽກງານທັງສອງບໍ່ມີການປະສານສົມທົບກັນ ແລະ ບໍ່ກົມກຽວກັນ, ເຮັດໃຫ້ການຈັດຕັ້ງຮາກຖານພັກບໍ່ສາມາດເສີມຂະຫຍາຍບົດບາດເປັນປ້ອມສູ້ຮົບໄດ້ຢ່າງເຕັມສ່ວນ.

2. ສ້າງຄວາມຮັບຮູ້ເຂົ້າໃຈຢ່າງຖືກຕ້ອງຕໍ່ສາຍພົວພັນລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະກະຕຸກຊຸກຍູ້ໃຫ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະມີການປະສານສົມທົບກັນຢ່າງເລິກເຊິ່ງ ຕ້ອງຮັບຮູ້ຢ່າງຈະແຈ້ງຕໍ່ບັນຫາທີ່ກ່ຽວພັນກັນດັ່ງນີ້:

ຕ້ອງຮັບຮູ້ຢ່າງຖືກຕ້ອງເຖິງເນື້ອໃນພື້ນຖານຂອງວຽກກໍ່ສ້າງພັກ ແລະ ວຽກວິຊາສະເພາະ. ວຽກງານກໍ່ສ້າງພັກ ໝາຍເຖິງການກໍ່ສ້າງກະໂຕພັກ, ແມ່ນບັນດາກິດຈະກຳຕ່າງໆໃນການປັບປຸງບູລະນະຕົນເອງໃຫ້ນັບມື້ນັບສົມບູນຂຶ້ນຂອງພັກ ເພື່ອເຮັດສຳເລັດພາລະກຳຂອງຕົນ, ຮັກສາໄດ້ຄວາມມີຊີວິດຊີວາ ແລະ ກຳລັງວັງຊາຂອງພັກ; ວຽກວິຊາສະເພາະ ໝາຍເຖິງພາລະບົດບາດ, ສິດ, ໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະຂະແໜງການທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ແຜນ 3 ກຳນົດ (ກຳນົດກົງຈັກ, ກຳນົດພາລະບົດບາດ, ກຳນົດຕຳແໜ່ງງານ), ວຽກງານວິຊາສະເພາະມີຄວາມແຕກຕ່າງກັນຕາມແຕ່ລະຂະແໜງການ. ໃນໄລຍະປະຫວັດສາດໃໝ່, ການຈັດຕັ້ງພັກທຸກຂັ້ນຕ້ອງຍຶດໝັ້ນຖືວຽກງານກໍ່ສ້າງພັກຢູ່ໃນຖານະນຳພາຢ່າງລວມສູນ, ຈັດວາງວຽກງານກໍ່ສ້າງພັກໄວ້ໃນຈຸດທີ່ສຳຄັນ, ໃນການດຳເນີນ ແລະ ຈັດຕັ້ງປະຕິບັດທຸກວຽກງານ ຕ້ອງຍຶດໝັ້ນປົນອ້ອມໃຈກາງ-ຮັບໃຊ້ມະຫາພາກ, ເພີ່ມທະວີບົດບາດການເມືອງຢ່າງບໍ່ຢຸດຢັ້ງ, ພິຈາລະນາວຽກງານກໍ່ສ້າງພັກໄປຄຽງຄູ່ກັນກັບວຽກງານວິຊາສະເພາະ, ເຮັດໃຫ້ໄດ້ວ່າ ວາງແຜນການ, ແຜນວຽກ ແລະ ຈັດຕັ້ງຜັນຂະຫຍາຍໄປພ້ອມກັນ, ຕ້ານການກະທຳທີ່ເຮັດໃຫ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະກາຍເປັນ ໜັງສອງແຜ່ນ, ລວມທັງການກະທຳທີ່ເຮັດໃຫ້ວຽກງານກໍ່ສ້າງພັກມີລັກສະນະໄຮ້ຕົວຕົນ, ອ່ອນແອລົງ ແລະ ຂາດຄວາມສຳຄັນ. ຜູ້ຮັບຜິດຊອບການຈັດຕັ້ງພັກທຸກຂັ້ນ ຕ້ອງເຂົ້າໃຈຢ່າງເລິກເຊິ່ງ ແລະ ຊຳນິຊຳນານໃນວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ ໂດຍຜ່ານການຝຶກອົບຮົມ ແລະ ເຂົ້າຮ່ວມຮໍ່າຮຽນໃນຫຼັກສູດຕ່າງໆ ຍົກສູງຄວາມສາມາດທາງດ້ານວິຊາສະເພາະຂອງຕົນຢ່າງຕໍ່ເນື່ອງ, ຍົກສູງລະດັບວິຊາສະເພາະຢ່າງຕໍ່ເນື່ອງ ແລະ ຂະຫຍາຍການປົກຄຸມຂອງວຽກງານພັກຢ່າງຕໍ່ເນື່ອງ, ຍົກສູງກຳລັງແຮງໃນການຈັດຕັ້ງ, ກຳລັງແຮງໃນການເຕົ້າໂຮມ ແລະ ກຳລັງແຮງສູ້ຮົບຂອງການຈັດຕັ້ງຮາກຖານພັກ.

ຕ້ອງສ້າງຄວາມເຂົ້າໃຈຢ່າງຈະແຈ້ງຕໍ່ສາຍພົວພັນລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ. ສາຍພົວພັນຂອງທັງສອງວຽກງານແມ່ນອາໄສກັນ ແລະ ກະຕຸກຊຸກຍູ້ເຊິ່ງກັນແລະກັນ. ວຽກງານກໍ່ສ້າງພັກນຳພາ ແລະ ຊຸກຍູ້ວຽກງານວິຊາສະເພາະ, ຜົນສຳເລັດຕົວຈິງຂອງວຽກງານວິຊາສະເພາະພິສູດປະ

ສິດທິຜົນຂອງວຽກງານກໍ່ສ້າງພັກ. ຖ້າຫາກຫ່າງເຫີນ
ວຽກງານວິຊາສະເພາະ, ວຽກງານກໍ່ສ້າງພັກກໍ່ຈະບໍ່
ແທດຕົວຈິງ, ຈະກາຍເປັນ ໜັງສອງແຜ່ນ, ຈະສູນເສຍ
ລັກສະນະເຈາະຈີ້ງ ແລະ ລັກສະນະເປົ້າໝາຍ; ອີກດ້ານ
ໜຶ່ງ, ວຽກງານວິຊາສະເພາະບໍ່ອາດຈະດຳເນີນການໄປ
ພຽງລຳພັງ, ຕ້ອງອາໄສການຈັດຕັ້ງ, ຜ່ານການເຮັດວຽກ
ງານການເມືອງ-ແນວຄິດຢ່າງເປັນເຈົ້າການ, ເສີມຂະ
ຫຍາຍບົດບາດຄວາມເປັນແບບຢ່າງນຳໜ້າຂອງສະມາ
ຊິກພັກ, ກະຕຸ້ນຄວາມກະຕືລືລົ້ນຂອງພະນັກງານ,
ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ, ແກ້ໄຂ
ຂໍ້ຂັດແຍ້ງ ແລະ ຂໍ້ຫຍຸ້ງຍາກ ຈຶ່ງຈະຮັບປະກັນເຮັດໃຫ້
ວຽກງານວິຊາສະເພາະໄດ້ຮັບຜົນສຳເລັດຕາມຄາດ
ໝາຍ. ຖ້າຫາກເວົ້າແຕ່ວຽກງານກໍ່ສ້າງພັກ ແຕ່ບໍ່ເວົ້າເຖິງ
ວຽກງານວິຊາສະເພາະ, ວຽກງານກໍ່ສ້າງພັກດັ່ງກ່າວກໍ່
ຈະໄດ້ພຽງແຕ່ຮູບການ ແລະ ຫ່າງເຫີນຈາກຄວາມເປັນ
ຈິງ; ກົງກັນຂ້າມ, ຖ້າຫາກເວົ້າແຕ່ວຽກງານວິຊາສະ
ເພາະ ແຕ່ບໍ່ເວົ້າຮອດວຽກງານກໍ່ສ້າງພັກ, ອາດຈະກໍ່ໃຫ້
ເກີດຄວາມຜິດພາດໃນດ້ານຈຸດຢືນ ແລະ ທິດທາງ
ດ້ານການເມືອງ, ກ້າວເດີນໄປໃນທິດທາງທີ່ຜິດພາດ.
ວຽກງານກໍ່ສ້າງພັກແມ່ນຈິດວິນຍານ, ວຽກງານວິຊາ
ສະເພາະແມ່ນແກ່ນສານ. ວຽກງານວິຊາສະເພາະບໍ່
ອາດຈະປາສະຈາກວຽກງານກໍ່ສ້າງພັກໄດ້, ວຽກງານກໍ່
ສ້າງພັກຍິ່ງບໍ່ອາດຈະຂາດວຽກງານວິຊາສະເພາະໄດ້,
ວຽກງານກໍ່ສ້າງພັກສອດຫ້ອຍໄປນຳທຸກດ້ານຂອງ
ວຽກງານວິຊາສະເພາະ. ການຈັດຕັ້ງພັກທຸກຂັ້ນຕ້ອງ
ປະສານສົມທົບວຽກງານກໍ່ສ້າງພັກ ແລະ ວຽກງານ
ວິຊາສະເພາະເຂົ້າເປັນລະບົບດຽວກັນ, ຖ້າຫາກເອົາ
ໃຈໃສ່ແຕ່ວຽກງານວິຊາສະເພາ, ແຕ່ບໍ່ເອົາໃຈໃສ່ວຽກ
ງານກໍ່ສ້າງພັກ, ບໍ່ເອົາໃຈໃສ່ການສຶກສາອົບຮົມການ
ເມືອງ-ແນວຄິດຕໍ່ສະມາຊິກພັກ-ພະນັກງານ, ວຽກງານ
ວິຊາສະເພາະກໍ່ຈະໄດ້ຮັບປະສິດທິຜົນຕໍ່າ, ຈະສົ່ງຜົນ
ກະທົບໂດຍກົງຕໍ່ການຈັດຕັ້ງຜັນຂະຫຍາຍແນວທາງ,
ທິດທາງ, ແຜນນະໂຍບາຍຂອງພັກ-ລັດ, ກ້າວໄປເຖິງ
ການສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງ
ຄົມ. ການຈັດຕັ້ງພັກທຸກຂັ້ນ ຕ້ອງຈັດວາງວຽກງານກໍ່
ສ້າງພັກຢູ່ໃນວາລະທີ່ສຳຄັນ, ໃຫ້ຄວາມສຳຄັນຕໍ່ການ
ກໍ່ສ້າງພັກທາງດ້ານແນວຄິດ, ກຳແໜ້ນການກໍ່ສ້າງພັກ
ທາງດ້ານການກະທຳ, ພິສູດປະສິດທິຜົນຂອງວຽກງານ
ກໍ່ສ້າງພັກຈາກຜົນສຳເລັດຂອງວຽກງານວິຊາສະເພາະ.

ຕ້ອງສ້າງຄວາມເຂົ້າໃຈຕໍ່ບາງຄວາມຮັບຮູ້ທີ່
ບໍ່ທັນຈະແຈ້ງ ຫຼື ຜິດພາດ. ໜຶ່ງ, ການວາງແຜນໄປພ້ອມ
ກັນລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິ
ຊາສະເພາະ ບໍ່ພຽງແຕ່ຈະສ່ອງແສງອອກໃນເວລາດຳ
ເນີນກອງປະຊຸມເທົ່ານັ້ນ, ແຕ່ຍັງຕ້ອງຕຶງສາຍພົນແຫ່ງ
ການປະສານສົມທົບກັນໄວ້ໃຫ້ເຄັ່ງຢູ່ທຸກທີ່ທຸກເວລາ.
ໃນເວລາດຳເນີນວຽກງານກໍ່ສ້າງພັກ ຕ້ອງເປັນເຈົ້າການ
ໃນການວາງແຜນວ່າຈະຮັບໃຊ້ໃຈກາງ-ມະຫາພາກ
ໄດ້ແນວໃດ; ໃນເວລາກະຕຸກຊຸກຍູ້ວຽກງານວິຊາສະ
ເພາະ ຕ້ອງເປັນເຈົ້າການຄິດຫາວ່າຈະເສີມຂະຫຍາຍ
ທ່າແຮງຂອງວຽກງານກໍ່ສ້າງພັກໄດ້ຄືແນວໃດ; ສອງ,
ການປະສານສົມທົບລະຫວ່າງວຽກງານກໍ່ສ້າງພັກ ແລະ
ວຽກງານວິຊາສະເພາະເຂົ້າກັນ ບໍ່ແມ່ນຈະຕື່ມແຕ່ຄຳວ່າ
ກໍ່ສ້າງພັກ ໃສ່ດ້ານໜ້າຂອງວຽກງານວິຊາສະເພາະ
ງ່າຍໆພຽງຢ່າງດຽວ ພຽງແຕ່ໃຫ້ໄດ້ຮູບການຊື່ໆ, ຫາກມີ
ເງື່ອນໄຂທີ່ເປັນກົດເກນ ແລະ ລະບຽບການທີ່ເຂັ້ມ
ງວດຢູ່ພາຍໃນ, ຕ້ອງສ້າງເປັນກົນໄກວິທີເຮັດວຽກ
ທີ່ສົມບູນຄົບຊຸດ; ສາມ, ການພິສູດໝາກຜົນຂອງການ
ປະສານສົມທົບລະຫວ່າງວຽກງານກໍ່ສ້າງພັກ ແລະ
ວຽກງານວິຊາສະເພາະ ບໍ່ແມ່ນຈະສະແດງອອກຢູ່
ບ່ອນວ່າ ຄຳຂວັນຮ້ອງໄດ້ດັງຊໍ່າໃດ, ຂໍ້ມູນກະກຽມໄດ້
ດີປານໃດ, ແຕ່ຫາກແມ່ນຕ້ອງເບິ່ງວ່າ ຜ່ານການກຳ
ແໜ້ນວຽກງານກໍ່ສ້າງພັກສາມາດກະຕຸ້ນສະຕິປັນຍາ-
ກຳລັງວັງຊາ, ເຕົ້າໂຮມມານະຈິດ ແລະ ເສີມຂະຫຍາຍ
ບົດບາດໄດ້ ຕາມຄາດໝາຍ ຫຼື ບໍ່, ສຸດທ້າຍກ້າວໄປສູ່

ການເຮັດສຳເລັດວຽກງານວິຊາສະເພາະດ້ວຍຄຸນນະພາບສູງ.

3. ບຸກທະລຸບັນຫາ ໜັງສອງແຜ່ນ, ຊຸກຍູ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະໃຫ້ປະສານສົມທົບກັນຢ່າງເລິກເຊິ່ງການຊຸກຍູ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະໃຫ້ປະສານສົມທົບກັນຢ່າງເລິກເຊິ່ງ ມັນພົວພັນເຖິງບັນຫາຄວາມຮັບຮູ້ທາງດ້ານແນວຄິດ, ບັນຫາຄວາມສາມາດ ແລະ ແບບແຜນວິທີເຮັດວຽກ, ຕົ້ນຕໍ ລວມມີ 3 ດ້ານດັ່ງລຸ່ມນີ້:

ຊຸກຍູ້ໄປພ້ອມກັນໃນລະບົບດຽວ. ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ ແມ່ນກາຍ-ອິນຊີທີ່ເປັນເອກະພາບກັນ. ກໍາວຽກງານກໍ່ສ້າງພັກໄດ້ດີ, ກໍ່ຈະສາມາດສະໜອງສິ່ງຄ້ຳປະກັນທາງດ້ານການເມືອງທີ່ໜັກແໜ້ນໃຫ້ແກ່ວຽກງານວິຊາສະເພາະ. ໃນຂະນະດຽວກັນ, ວຽກງານກໍ່ສ້າງພັກຢາກຫຼີກລ້ຽງລັກສະນະບໍ່ມີຕົວຕົນ, ລັກສະນະອ່ອນແອ ກໍ່ຕ້ອງຖືເອົາວຽກງານວິຊາສະເພາະມາເປັນສິ່ງພິສູດປະສິດທິຜົນ. ໃນພຶດຕິກຳຕົວຈິງ, ບາງທ້ອງຖິ່ນ, ບາງຂະແໜງການ ມັກຈະເກີດບັນຫາ ໜັງສອງແຜ່ນ ໃນວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະໄດ້ງ່າຍ, ຕົ້ນຕໍແມ່ນພະນັກງານນຳພາ-ຄຸ້ມຄອງຈຳນວນໜຶ່ງຂາດຄວາມຮັບຮູ້ເຖິງສາຍພົວພັນແບບກາຍ-ອິນຊີລະຫວ່າງສອງວຽກງານນີ້, ບໍ່ສາມາດຊຸກຍູ້ໄປພ້ອມກັນໃນລະບົບດຽວ. ຊຸກຍູ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະໃຫ້ປະສານສົມທົບການຢ່າງເລິກເຊິ່ງ ກໍ່ຕ້ອງຜ່ານການພິຈາລະນາສະພາບການຢ່າງຮອບດ້ານທົ່ວທັງລະບົບ, ກວມລວມເອົາທຸກດ້ານ ແລະ ຊຸກໄປພ້ອມກັນ. ວຽກງານກໍ່ສ້າງພັກຕ້ອງດຳເນີນໄປຄຽງຄູ່ກັບວຽກງານວິຊາສະເພາະຢ່າງແໜ້ນແຟ້ນ, ອາໄສວຽກງານກໍ່ສ້າງພັກມານຳພາ ແລະ ກະຕຸກຊຸກຍູ້ວຽກງານວິຊາສະເພາະ ແລະ ໃຊ້ວຽກງານວິຊາສະເພາະມາພິສູດປະສິດທິຜົນຂອງວຽກງານກໍ່ສ້າງພັກ, ບັນລຸການເຕົ້າໂຮມໄປໃນທິດທາງດຽວກັນ ແລະ ປະສານສົມທົບກັນຢ່າງເລິກເຊິ່ງລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ, ຕົວຢ່າງ: ຕໍ່ຈຸດສ່ຽງທີ່ອາດຈະກໍ່ໃຫ້ເກີດມີບັນຫາດ້ານຄວາມປອດໃສໃນວຽກງານວິຊາສະເພາະ, ໃນວຽກງານກໍ່ສ້າງພັກຕ້ອງເພີ່ມທະວີການກໍ່ສ້າງທາງດ້ານແນວຄິດ, ດ້ານແບບແຜນ ແລະ ດ້ານລະບອບຢ່າງມີເປົ້າໝາຍ, ເຮັດໃຫ້ສະມາຊິກພັກ-ພະນັກງານບໍ່ກ້າສໍ້ລາດບັງຫຼວງ, ບໍ່ອາດສໍ້ລາດບັງຫຼວງ ແລະ ບໍ່ຄິດສໍ້ລາດບັງຫຼວງ, ຮັບປະກັນໃຫ້ສະມາຊິກພັກ-ພະນັກງານເຮັດວຽກດ້ວຍຄວາມປອດໃສ; ອີກຕົວຢ່າງ: ປະເຊີນໜ້າກັບພາລະໜ້າທີ່ອັນຮີບດ່ວນ, ຫຍຸ້ງຍາກ, ອັນຕະລາຍ ແລະ ໜັກໜ່ວງ ຕ້ອງເສີມຂະຫຍາຍບົດບາດສຳຄັນຂອງວຽກງານກໍ່ສ້າງພັກຢ່າງເຕັມສ່ວນ, ເຮັດໃຫ້ສະມາຊິກພັກ, ພະນັກງານກ້າຫານທີ່ຈະບຸກໜ້າໄປໃນເວລາສຳຄັນ ແລະ ກ້າເສຍສະຫຼະໃນເວລາຫົວລ້ຽວຫົວຕໍ່ທີ່ອັນຕະລາຍ, ເສີມຂະຫຍາຍບົດບາດຄວາມເປັນແບບຢ່າງນຳໜ້າຢ່າງເຕັມສ່ວນ, ຊຸກຍູ້ວຽກງານວິຊາສະເພາະໃຫ້ຂະຫຍາຍຕົວດີກວ່າເກົ່າ. ການຊຸກຍູ້ໄປພ້ອມກັນໃນວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ ກໍ່ແມ່ນຈະເຮັດໃຫ້ທຸກມາດຕະການຂອງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະມີການປະສານສົມທົບກັນໃນດ້ານການວາງແຜນ, ມີການຊຸກຍູ້ເຊິ່ງກັນ ແລະ ກັນໃນການຈັດຕັ້ງປະຕິບັດຕົວຈິງ, ເອົາໃຈໃສ່ວຽກງານກໍ່ສ້າງພັກໂດຍປັ່ນອ້ອມໃຈກາງ ແລະ ກຳແໜ້ນວຽກງານກໍ່ສ້າງພັກມາຊຸກຍູ້ວຽກງານວິຊາສະເພາະ.

ຍຶດໝັ້ນຖືບັນຫາເປັນທິດນຳ. ຊຸກຍູ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະໃຫ້ປະສານສົມທົບກັນຢ່າງເລິກເຊິ່ງ ແລະ ກະຕຸກຊຸກຍູ້ເຊິ່ງກັນ ແລະ ກັນຕ້ອງຍຶດໝັ້ນຖືບັນຫາເປັນທິດນຳ, ຂຸດຄົ້ນບັນຫາຕົ້ນຕໍທີ່ຈະສົ່ງຜົນກະທົບຕໍ່ການປະສານສົມທົບຢ່າງເລິກເຊິ່ງຂອງທັງສອງວຽກງານ. ຍຶດໝັ້ນຖືບັນຫາເປັນທິດນຳ, ຮຽກຮ້ອງໃຫ້ຕ້ອງຊອກບັນຫາໃຫ້ເຫັນຢ່າງຖືກຕ້ອງ,

ວິເຄາະບັນຫາໃຫ້ລະອຽດ, ປັບປຸງແກ້ໄຂບັນຫາຢ່າງແທດຕົວຈິງ, ປັບປຸງແກ້ໄຂໄປຕາມບັນຫາ, ຂຸດຄົ້ນໃຫ້ເຫັນບັນຫາທີ່ຢູ່ເລິກເຊິ່ງກວ່າ, ຊອກບັນຫາທີ່ແອບແຝງຢູ່ໃຫ້ເຫັນ. ຕົວຢ່າງ: ບັນຫາສຳຄັນອັນໜຶ່ງທີ່ສົ່ງຜົນກະທົບຕໍ່ການປະສານສົມທົບຢ່າງເລິກເຊິ່ງລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ ແມ່ນບັນຫາຄວາມຮັບຮູ້ທາງດ້ານແນວຄິດ. ພະນັກງານນຳພາ-ຄຸ້ມຄອງຈຳນວນໜຶ່ງເຫັນວ່າ ວຽກງານວິຊາສະເພາະຄ່ອນຂ້າງມີຕົວຕົນ ແລະ ວຽກງານກໍ່ສ້າງພັກຄ່ອນຂ້າງໄຮ້ຕົວຕົນ, ມີທ່າອ່ຽງທາງດ້ານແນວຄິດທີ່ຖືສຳຄັນວຽກງານວິຊາສະເພາະ ແລະ ຖືເບົາວຽກງານກໍ່ສ້າງພັກ, ສະນັ້ນ ໃນເວລາວາງແຜນ ແລະ ຊຸກຍູ້ວຽກງານກໍ່ຍາກທີ່ຈະເຮັດໃຫ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະມີການປະສານສົມທົບກັນຢ່າງເລິກເຊິ່ງ, ກໍ່ໃຫ້ເກີດສະພາບທີ່ວ່າ ເອົາໃຈໃສ່ວຽກງານວິຊາສະເພາະຄ່ອນຂ້າງແຂງແຮງ, ແຕ່ເອົາໃຈໃສ່ວຽກງານກໍ່ສ້າງພັກຄ່ອນຂ້າງອ່ອນແອ. ຢາກແກ້ໄຂບັນຫາດັ່ງກ່າວນີ້, ກໍ່ຕ້ອງເພີ່ມທະວີການນຳພາທາງດ້ານແນວຄິດ, ເຮັດໃຫ້ພະນັກງານນຳພາ-ຄຸ້ມຄອງຮັບຮູ້ໄດ້ຢ່າງເລິກເຊິ່ງວ່າ ເຮັດວຽກງານກໍ່ສ້າງພັກບໍ່ໄດ້ດີ ວຽກງານວິຊາສະເພາະກໍ່ບໍ່ອາດຈະເຮັດໃຫ້ດີໄດ້. ໃນຂະນະດຽວກັນ ຕ້ອງຈັດຕັ້ງປະຕິບັດລະບອບຄວາມຮັບຜິດຊອບຕໍ່ວຽກງານກໍ່ສ້າງພັກຢ່າງເຂັ້ມງວດ, ເຮັດໃຫ້ການຈັດຕັ້ງພັກທຸກຂັ້ນເອົາໃຈໃສ່ປະຕິບັດຄວາມຮັບຜິດຊອບຕົ້ນຕໍໃນການບໍລິຫານພັກ ແລະ ຄຸ້ມຄອງພັກ, ສຸມຈິດສຸມໃຈໃສ່ວຽກງານກໍ່ສ້າງພັກ. ເລຂາພັກຕ້ອງເອົາໃຈໃສ່ປະຕິບັດສິດໜ້າທີ່ເປັນຜູ້ຮັບຜິດຊອບທີໜຶ່ງໃນວຽກງານກໍ່ສ້າງພັກຢ່າງຈິງຈັງ. ອີກຕົວຢ່າງ: ວຽກງານກໍ່ສ້າງພັກຢູ່ບາງຂະແໜງການ (ບາງໜ່ວຍງານ) ຍັງມີບັນຫາທີ່ມີລັກສະນະຜິວເຜີນ ແລະ ລັກສະນະຮູບການຄົງຄ້າງຢູ່, ເນັ້ນໜັກແຕ່ພາຍນອກ ຍາກທີ່ຈະປະສານສົມທົບກັນໄດ້ຢ່າງເລິກເຊິ່ງກັບວຽກງານວິຊາສະເພາະຢ່າງແທ້ຈິງ. ຕໍ່ກັບສະພາບການແບບນີ້, ກໍ່ຕ້ອງນຳໃຊ້ມາດຕະການທີ່ມີປະສິດທິຜົນທີ່ແທດຕົວຈິງ, ເຮັດໃຫ້ວຽກງານກໍ່ສ້າງພັກໄດ້ຮັບປະສິດທິຜົນຕົວຈິງຢ່າງບໍ່ຢຸດຢັ້ງ. ຍຶດໝັ້ນຖືບັນຫາເປັນທິດນຳ ມາກະຕຸກຊຸກຍູ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະໃຫ້ປະສານສົມທົບກັນຢ່າງເລິກເຊິ່ງ, ຮຽກຮ້ອງໃຫ້ຢູ່ບົນພື້ນຖານຊອກໃຫ້ເຫັນບັນຫາຢ່າງຖືກຕ້ອງ ແລະ ປັບປຸງແກ້ໄຂບັນຫາໃນຮູບແບບຄຸ້ມຄອງບັນຊີ, ກຳນົດແຈ້ງຄວາມຮັບຜິດຊອບຕົ້ນຕໍ, ໄລຍະເວລາ ແລະ ມາດຕະການໃນການປະຕິບັດວຽກງານ, ເຮັດໃຫ້ເຖິງຂັ້ນທີ່ວ່າ ບັນຫາບໍ່ຖືກແກ້ໄຂກໍ່ບໍ່ຍອມຜ່ອນແຮງ, ແກ້ໄຂບັນເຖິງຖອງກໍ່ບໍ່ວາງມື, ສືບຕໍ່ຊຸກຍູ້ໃຫ້ກ້າວໜ້າໄປຢ່າງບໍ່ຢຸດຢັ້ງ.

ສ້າງພື້ນຖານດ້ານລະບອບໃຫ້ໜັກແໜ້ນ. ຍຶດໝັ້ນຄົ້ນຄວ້າ, ວາງແຜນ, ຈັດຕັ້ງຜັນຂະຫຍາຍ ແລະ ກວດກາໄປພ້ອມກັນກ່ຽວກັບວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ, ຕ້ອງສ້າງລະບອບ ແລະ ກົນໄກກ່ຽວຂ້ອງຢ່າງຄົບຊຸດ. ການສ້າງພື້ນຖານທາງດ້ານລະບອບທີ່ໜັກແໜ້ນ ແມ່ນເປັນແຜນໄລຍະຍາວ ແລະ ມາດຕະການກົກຮາກໃນການກະຕຸກຊຸກຍູ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະໃຫ້ປະສານສົມທົບກັນຢ່າງເລິກເຊິ່ງ. ຕ້ອງເພີ່ມທະວີການກໍ່ສ້າງລະບອບ, ຫັນເອົາບົດຮຽນທີ່ດີ ແລະ ພຶດຕິກຳຕົວຈິງທີ່ມີປະສິດທິຜົນໃນການປະສານສົມທົບຢ່າງເລິກລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ ໄປເປັນລະບອບ; ຫັນເອົາທ່າແຮງດ້ານການເມືອງ, ດ້ານການຈັດຕັ້ງ, ດ້ານການພົວພັນທີ່ສະໜິດແໜ້ນກັບມະຫາຊົນ ມາເປັນທ່າແຮງໃນການກະຕຸກຊຸກຍູ້ວຽກງານວິຊາສະເພາະໃຫ້ຂະຫຍາຍຕົວ. ຊຸກຍູ້ກົນໄກວຽກງານກໍ່ສ້າງພັກໃຫ້ຕອບສະໜອງໄດ້ຢ່າງຖືກເປົ້າໝາຍຕາມຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວຂອງວຽກງານວິຊາສະເພາະ, ເຮັດໃຫ້ໄດ້ວ່າ ວຽກງານວິຊາສະເພາະຂະຫຍາຍຕົວໄປຮອດບ່ອນໃດ, ວຽກງານກໍ່ສ້າງ

ພັກກໍ່ຕ້ອງຂະຫຍາຍຕົວໄປຮອດບ່ອນນັ້ນ; ຖືເອົາການນໍາພາຂອງພັກສອດຫ້ອຍໄປທົ່ວຂະບວນການຂອງວຽກງານວິຊາສະເພາະ; ຊຸກຍູ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະໃຫ້ປະສານສົມທົບກັນຢ່າງເລິກເຊິ່ງ ຕ້ອງເອົາໃຈໃສ່ກໍາແໜ້ນໃນເວລາປົກກະຕິ ແລະ ເປັນປະຈໍາ; ຍຶດໝັ້ນຄົ້ນຄວ້າ, ວາງແຜນ, ກວດກາ ແລະ ປະເມີນຜົນໄປພ້ອມກັນ. ນອກຈາກນັ້ນ, ຍັງຕ້ອງເອົາໃຈໃສ່ປັບປຸງລະບອບຕີລາຄາປະເມີນຜົນວຽກງານກໍ່ສ້າງພັກໃຫ້ສົມບູນຄົບຊຸດ, ປັບປຸງກົນໄກຕີລາຄາປະເມີນຜົນຮ່ວມກັນລະຫວ່າງວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ, ເສີມຂະຫຍາຍບົດບາດເປັນໄມ້ບັງຄັບບັນຊາຂອງການປະເມີນຜົນ, ເຮັດໃຫ້ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະກະຕຸກຊຸກຍູ້ເຊິ່ງກັນ ແລະ ກັນ.

ແຫຼ່ງຂໍ້ມູນ: ວາລະສານກໍ່ສ້າງພັກຂອງສໍານັກຂ່າວໜັງສືພິມປະຊາຊົນລາຍວັນ (ສປ ຈີນ)

ຄະນະໜ່ວຍພັກບໍລິຫານ

ຄະນະໜ່ວຍພັກເສດຖະກິດ

ໃນລະຫວ່າງເດືອນເມສາ ແລະ ພຶດສະພາ 2024 ບັນດາໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານບໍລິສັດ ລາວໂທລະຄົມ ມະນາຄົມ ມະຫາຊົນ ໄດ້ດໍາເນີນກອງປະຊຸມໃຫຍ່ ສະມາຊິກພັກຂອງຕົນ. ສໍາເລັດແລ້ວ 2 ໜ່ວຍພັກ ໃນຈໍານວນ 9 ໜ່ວຍພັກຄື: ໜ່ວຍພັກບໍລິຫານ ແລະ ໜ່ວຍພັກເສດຖະກິດ. ໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ສຸພົນ ຈັນທະວິໄຊ ຄະນະບໍລິຫານງານພັກກະຊວງເຕັກໂນໂລຊີ ແລະ ການສື່ສານ, ເລຂາຄະນະພັກຮາກຖານ ລລທ, ຕາງໜ້າອົງຄະນະພັກກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ມີສະຫາຍຄະນະພັກຮາກຖານ ລລທ, ຕາງໜ້າບັນດາໜ່ວຍພັກ, 3 ອົງການຈັດຕັ້ງມະຫາຊົນ, ຫ້ອງການພັກ ແລະ ສະມາຊິກພັກສົມບູນຂອງ 2 ໜ່ວຍພັກເຂົ້າຮ່ວມທັງໝົດ.

ກອງປະຊຸມຄັ້ງປະຖົມມະລຶກ ເລືອກໄດ້ຄະນະໜ່ວຍພັກບໍລິຫານຊຸດໃໝ່ 3 ສະຫາຍຄື: 1. ສະຫາຍ ນ. ວິໄລວັນ ຍົດໄຊວິບູນ ເປັນເລຂາໜ່ວຍພັກ; 2. ສະຫາຍ ວິໄຊ ວິລະວົງ ເປັນຮອງເລຂາ, ທັງເປັນປະທານກວດກາ; 3. ສະຫາຍ ນ. ພຶດສະໄໝ ແກ້ວມະນີ ເປັນກໍາມະການໜ່ວຍພັກ; ເລືອກໄດ້ຄະນະໜ່ວຍພັກເສດຖະກິດຊຸດໃໝ່ 3 ສະຫາຍຄື: 1. ສະຫາຍ ບຸນຫຼາຍ ສີຫານາດ ເປັນເລຂາໜ່ວຍພັກ; 2. ສະຫາຍ ນ. ອິນຖະໜອມ ສີສຸວັນທອງ ເປັນຮອງເລຂາ, ທັງເປັນປະ ທານກວດກາ; 3. ສະຫາຍ ນ. ເຄືອຄໍາ ໂພທິສັດ ເປັນກໍາມະການໜ່ວຍພັກ.

ວາລະສານກໍ່ສ້າງພັກ, ສະບັບ 264 ປະຈຳປີ 2024/2

❀ ຜູ້ຊີ້ນຳ ❀

ທ່ານ ປອ ວິສຸກ ພົມພິທັກ
ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ

❀ ຄະນະບັນນາທິການ ❀

ທ່ານ ພອນສະຫວັນ ໄຊຊະນະ ຫົວໜ້າ
ທ່ານ ນ. ແກ້ວຕາ ພັນດານຸວົງ ຮອງ
ທ່ານ ນ. ແກ້ວໃຈ ແສງມີໄຊ ຮອງ
ທ່ານ ຄອນຄຳ ໂສລັດຕະນະວົງ ຮອງ

❀ ບັນນາທິການ, ອອກແບບ ແລະ ຈັດໜ້າ ❀

ທ່ານ ແສງອາລຸນ ຈັນທາທອນ
ທ່ານ ບານ ມູນປະເສີດ
ທ່ານ ນ. ພິດສະໄໝ ວິໄລຮັກ
ທ່ານ ນ. ແສງຄຳ ຈິດຕະວົງ

- ຂໍ້ຕົກລົງ 02/ ຄຈສພ, ທະບຽນພິມ 255/ສມຊ.
- ບກ ໂທ: (021) 840420, 840421.
- E-Mail: Korsangphakmagazine@gmail.com
- ແຈ້ງບົດສົ່ງທາງ E-Mail: 020 59846399

ຮັບຜິດຊອບບໍລິຫານ-ຈຳໜ່າຍ

ທ່ານ ນ. ແສງອອນ ແກ້ວມີມັນລັດ
ທ່ານ ນ. ແສງແກ້ວ ພົມມະວົງ
ທ່ານ ພອນສະຫວັນ ລາຊະບັນເທົາ (ຈຳໜ່າຍ)
ທ່ານ ນ. ຈັນອາລີຈິດ ສົມພາບມີໄຊ
ທ່ານ ນ. ອານຸລັກ ຈິດຕິລາດ

ສາລະບານ

✍ ນາມປາກກາ ✍	✍ ຫົວຂໍ້ບົດ	✍ ໜ້າ
	ບົດນຳ	
ພົດສະໄໝ	- ທວນຄືນເສັ້ນທາງແຫ່ງການກໍ່ສ້າງພັກປະຊາຊົນປະຕິວັດລາວ	1
ເຄນດີ ທຳມະວອນ	- ການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ສະມາຊິກພັກ	4
ສົມຕິບານ	- ແນວຄິດຊີ້ນຳປະທານຄຳໄຕ ສີພັນດອນຕໍ່ກັບການຈັດຕັ້ງປະຕິບັດສອງໜ້າທີ່	8
	ທິດສະດີ ແລະ ພຶດຕິກຳ	
ສົງວານຄຳ ໄຊຍະແກ້ວ	- ປັບປຸງວຽກງານກໍ່ສ້າງ-ບຳລຸງພະນັກງານ ຢູ່ຄະນະພົວພັນຕ່າງປະເທດສູນກາງພັກ	12
ອຸດອນ ສົມນາລີ	- ໜ່ວຍພັກກົມຈັດຕັ້ງ ແລະ ພະນັກງານ ກະຊວງພະລັງງານ ແລະ ບໍ່ແຮ່ ຖືເອົາການ	16
ບົວຊ້ອນ ອາລີ	- ເພີ່ມທະວີວຽກງານຂະຫຍາຍພັກຢູ່ຮາກຖານພັກບ້ານເມືອງຂວາແຂວງຜົ້ງສາລີ	21
ແສງຄຳ ຈິດຕະວົງ	- ຍ້ອນມີການນຳພາ-ຊີ້ນຳທີ່ດີ ຈຶ່ງເຮັດໃຫ້ບ້ານໂພນແກ້ວ	26
	ຄົ້ນຄວ້າ-ແລກປ່ຽນ	
ທິບພະກອນ ມະນີວົງ	- ຍົກສູງວຽກງານກໍ່ສ້າງ-ບຳລຸງພະນັກງານ ຢູ່ອົງການໄອຍະການປະຊາຊົນສູງສຸດ	30
ອອນ ພອນວັນດີ	- ເພີ່ມທະວີການນຳພາຂອງພັກຕໍ່ກັບວຽກງານພະນັກງານຢູ່ກະຊວງ	35
ສິດທິສັກ ເກດຕະວົງ	- ເພີ່ມທະວີການນຳພາຂອງພັກຕໍ່ການຄຸ້ມຄອງນັກຮຽນ-ນັກສຶກສາກົມໃຫຍ່	40
	ວຽກດີຄົນເດັ່ນ	
ດ່ອນແກ້ວ ພັນທະວົງ	- ຍ້ອນຄວາມດຸໝັ່ນອົດທົນ ເຮັດໃຫ້ຄອບຄົວຮັ່ງມີ	45
	ບົດຮຽນຕ່າງປະເທດ	
ສຳນຽງ ເມກລັບດອນ	- ວຽກງານກໍ່ສ້າງພັກ ແລະ ວຽກງານວິຊາສະເພາະ ຈະປະສານສົມທົບກັນ	48
✍✍✍✍	- ສາລະບານ	54